# ເອກະສານແນະນຳ ການສົ່ງເສີມ ການຜະລິດກະສິກຳ ແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP)





## ໂຄງການຜັນຂະຫຍາຍ ການຈັດຕັ້ງປະຕິບັດ ແຜນງານ ຫຼຸດຜ່ອນການປ່ອຍທາດອາຍ ເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມີທັດ ປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ

**CliPAD/ SU-I-GFLM Project**

ຈັດຕັ້ງປະຕິບັດໂດຍ

ເດືອນ ກໍລະກົດ ປີ 2024 (ປັບປຸງ)

# ຄຳນຳ

ໂຄງການຜັນຂະຫຍາຍການຈັດຕັ້ງປະຕິບັດແຜນງານຫຼຸດຜ່ອນທາດອາຍເຮືອນແກ້ວໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM) ແມ່ນໂຄງການທີ່ສືບຕໍ່ຈາກ ໂຄງການຈັດຕັ້ງປະຕິບັດການຄຸ້ມຄອງປ່າໄມ້ແບບພູມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ (I-GFLL) ເຊິ່ງເປັນໂຄງການປົກປັກຮັກສາປ່າໄມ້ ທີ່ໄດ້ຮັບທຶນຈາກກອງທຶນດິນຟ້າອາກາດສີຂຽວ (GCF) ແລະ ຈາກ (BMZ) ຂອງສະຫະພັນເຢຍລະມັນ. ໂຄງການແນ່ໃສ່ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການປ່ຽນແປງການນຳໃຊ້ທີ່ດິນທີ່ບໍ່ຖືກວິທີ ແລະ ຈາກການທຳລາຍປ່າໄມ້ ເຊິ່ງໄດ້ຈັດຕັ້ງປະຕິບັດຢູ່ 6 ແຂວງພາກເໜືອຂອງ ສປປ ລາວ (ຫົວພັນ, ຫຼວງພະບາງ, ໄຊຍະບູລີ, ຫຼວງນ້ຳທາ, ບໍ່ແກ້ວ ແລະ ອຸດົມໄຊ).

ເພື່ອເປັນການສະໜັບສະໜູນການຈັດຕັ້ງປະຕິບັດກະສິກຳຢູ່ບ້ານເປົ້າໝາຍ, ທາງໂຄງການໄດ້ສ້າງປຶ້ມແນະນຳການສົ່ງເສີມການການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ເພື່ອເປັນເຄື່ອງມືຊ່ວຍໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ (ໜ່ວຍງານ PSAP) ແລະ ຊາວບ້ານໃນການຈັດຕັ້ງປະຕິບັດກິດຈະກຳການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້.

ການສົ່ງເສີມການຈັດຕັ້ງປະຕິບັດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ຖືວ່າເປັນອົງປະກອບໜຶ່ງທີ່ມີສ່ວນຮ່ວມເຂົ້າໃນການປົກປັກຮັກສາ ແລະ ຫຼຸດຜ່ອນການທຳລາຍປ່າໄມ້ ເຊິ່ງແນໃສ່ການຜະລິດກະສິກຳແບບປະສົມປະສານ, ບໍ່ນຳໃຊ້ສານເຄມີ ຄຽງຄູ່ກັບການນຳໃຊ້ຊັບພະຍາກອນໃຫ້ເກີດມູນຄ່າເພີ່ມ ໂດຍການນຳເອົາວິທະຍາການໃໝ່ມາສົ່ງເສີມຊາວກະສິກອນຢູ່ເຂດເນີນສູງ, ການຈັດຕັ້ງປະຕິບັດກິດຈະກຳ ແມ່ນອີງໃສ່ລາຍການບັນຊີຂາວ ທີ່ເໝາະສົມສຳລັບການຫັນປ່ຽນຮູບແບບການຜະລິດ ແລະ ການນຳໃຊ້ທີ່ດິນແບບ ບໍ່ຍືນຍົງ ໄປສູ່ການຜະລິດກະສິກຳແບບຄົງທີ່.

ເອກະສານແນະນຳສະບັບນີ້ ປະກອບມີ ວິທີການ ແລະ ຂັ້ນຕອນຕ່າງໆທີ່ເປັນພື້ນຖານໃຫ້ແກ່ໜ່ວຍງານຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດກິດຈະກຳການສົ່ງເສີມກະສິກຳຢູ່ໃນບ້ານເປົ້າໝາຍ.

# ສາລະບານ


ຄຳຫຍໍ້ ........................................................................................................ 1

ພາກທີ I: ພາກສະເໜີ ........................................................................................ 3

ການສົ່ງເສີມກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ........................................ 3

1. ແນວທາງການຈັດຕັ້ງປະຕິບັດ PSAP ໂດຍສັງເຂບ ............................................ 3

ແຜນວາດ 1: ຂະບວນການຈັດຕັ້ງປະຕິບັດກິດຈະກຳພາຍໃນບ້ານເປົ້າໝາຍໂຄງການ SU-I-GFLM......... 4

2. ຈຸດປະສົງ ............................................................................................ 5

3. ເປົ້າໝາຍ ............................................................................................ 5

4. ຄາດຄະເນຜົນຂອງການຈັດຕັ້ງປະຕິບັດ ........................................................... 5

5. ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດ PSAP ................................................... 5

ພາກທີ II: ..................................................................................................... 7

ອົງປະກອບ ແລະ ຂະບວນການຈັດຕັ້ງປະຕິບັດ PSAP ................................................ 7

1. ອົງປະກອບຂອງໜ່ວຍງານ PSAP .................................................................. 7

2. ອົງປະກອບທາງເຕັກນິກຂອງ PSAP .............................................................. 8

3. ແຜນວາດກິດຈະກຳຂອງຂະບວນການ PSAP ...................................................... 9

ພາກທີ III: ..................................................................................................... 11

ຂັ້ນຕອນ ແລະ ບາດກ້າວໃນການດຳເນີນຂະບວນການ PSAP ......................................... 11

ຂັ້ນຕອນທີ 1: ການກະກຽມຄວາມພ້ອມກ່ອນຈັດຕັ້ງປະຕິບັດ ............................................. 11

ບາດກ້າວທີ 1: ທົບທວນປັບປຸງເອກະສານແນະນຳການຈັດຕັ້ງປະຕິບັດ PSAP ແລະ ເອກະສານເຕັກນິກການສົ່ງເສີມ ................................................................................................. 11

ບາດກ້າວທີ 2: ຝຶກອົບຮົມ TOT ໃຫ້ແກ່ໜ່ວຍງານ PSAP ແຂວງ ແລະ ເມືອງເປົ້າໝາຍ ..................... 11

ຂັ້ນຕອນທີ 2: ວາງແຜນການຜະລິດຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກຳ PSAP ............................ 12

ບາດກ້າວທີ 1: ການກະກຽມກ່ອນເຂົ້າສູ່ບ້ານເປົ້າໝາຍ .................................................. 12

ບາດກ້າວທີ 2: ກອງປະຊຸມແນະນຳຂັ້ນບ້ານ .............................................................. 13

ບາດກ້າວທີ 3: ການລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ ...................................... 16

ບາດກ້າວທີ 4: ການເກັບຂໍ້ມູນເສດຖະກິດ-ສັງຄົມຂອງຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ. ................. 17

ບາດກ້າວທີ 5: ການລົງສຳຫຼວດພື້ນທີ່ ........................................................................ 18

ບາດກ້າວທີ 6: ການສ້າງແຜນກິດຈະກຳ ແລະ ການລົງທຶນ ........ 19
ບາດກ້າວທີ 7: ການຈັດກອງປະຊຸມຮັບຮອງແຜນກິດຈະກຳ ແລະ ການລົງທຶນ ........ 19
ບາດກ້າວທີ 8: ການປະກອບເອກະສານກ່ອນອອກຈາກບ້ານເປົ້າໝາຍ ........ 20
ຂັ້ນຕອນທີ 3: ການຂໍຄ່າຽນເງິນເຂົ້າຫາບ້ານ ແລະ ການສະຫຼຸບຂໍ້ມູນ ........ 21
ບາດກ້າວທີ 1: ການສະເໜີຮັບຮອງແຜນການລົງທຶນຂອງບ້ານ ........ 21
ບາດກ້າວທີ 2: ການລວບລວມຂໍ້ມູນລົງໃນລະບົບຖານຂໍ້ມູນອອນໄລນ໌ (Cloud Database) ........ 21
ພາກທີ IV: ........ 23
ການເສີມສ້າງຄວາມສາມາດທາງເຕັກນິກ ........ 23
ຂັ້ນຕອນທີ 1: ການຝຶກອົບຮົມທາງດ້ານເຕັກນິກໃຫ້ກັບໜ່ວຍງານ PSAP ........ 23
ຂັ້ນຕອນທີ 2: ຝຶກອົບຮົມເຕັກນິກໃຫ້ກັບຊາວກະສິກອນ ກ່ອນການດຳເນີນການຜະລິດ ........ 24
ບາດກ້າວທີ 1: ກະກຽມວາງແຜນ, ແບ່ງໜ້າທີ່ຮັບຜິດຊອບ ແລະ ອຸປະກອນເຝິກອົບຮົມ. ........ 25
ບາດກ້າວທີ 2: ປະສານງານຫາບ້ານ ແລະ ຊາວກະສິກອນເພື່ອກະກຽມສະຖານທີ ແລະ ວັດຖຸດິບທີມີຢູ່ພາຍໃນບ້ານ. ........ 25
ບາດກ້າວທີ 3: ດຳເນີນການຝຶກອົບຮົມພາກທິດສະດີ ແລະ ການປະຕິບັດຕົວຈິງ ........ 25
ບາດກ້າວທີ 4: ຄັດເລືອກຕົວແທນຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກຳ ເພື່ອສະດວກໃນການປະສານງານ ແລະ ຕິດຕາມກິດຈະກຳ ........ 25
ບາດກ້າວທີ 5: ສ້າງແຜນການຕິດຕາມ ແລະ ຊຸກຍູ້ການຜະລິດ ........ 26
ບາດກ້າວທີ 6: ປະເມີນຄວາມຮູ້ຂອງຊາວກະສິກອນຫຼັງຈາກສຳເລັດການຝຶກອົບຮົມ ........ 26
ບາດກ້າວທີ 7: ໜ່ວຍງານສົ່ງເສີມລາຍງານ ແລະ ສັງລວມຂໍ້ມູນເຂົ້າໃນລະບົບ ........ 26
ພາກທີ V: ........ 27
ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດກິດຈະກຳ PSAP ........ 27
ຂັ້ນຕອນທີ 1: ການຈັດສິ່ງປັດໃຈການຜະລິດ ........ 27
ບາດກ້າວທີ 1: ການຊອກຫາຮ້ານຄ້າທີ່ຈະສະໜອງປັດໃຈການຜະລິດ ........ 27
ບາດກ້າວທີ 2: ການຄິດໄລ່ງົບປະມານຄືນ ........ 27
ບາດກ້າວທີ 3: ການຈັດສົ່ງປັດໃຈການຜະລິດ ........ 28
ຂັ້ນຕອນທີ 2: ການຊຸກຍູ້ກິດຈະກຳໃນລະດູການຜະລິດ ........ 28
ຂັ້ນຕອນທີ 3: ການຊຸກຍູ້ກິດຈະກຳໃນລະດູການເກັບກ່ຽວ ........ 29
ຂັ້ນຕອນທີ 4: ການຊຸກຍູ້ເຕັກນິກການຜະລິດໃນລະດູການໃໝ່ ........ 29

ຂັ້ນຕອນທີ 5: ການຈັດທັດສະນະສຶກສາ ຊາວກະສິກອນ ສູ່ ຊາວກະສິກອນ ........................................29

ພາກທີ VI:..................................................................................................................31

ການຈັດສັນງົບປະມານການລົງທຶນ ບ້ວງສິ່ງເສີມ PSAP..................................................31

ເອກະສານຄັດຊ້ອນ......................................................................................................33

ເອກະສານຄັດຊ້ອນ ທີ 1: ລາຍການກິດຈະກໍາບັນຊີຂາວ................................................33

ເອກະສານຄັດຊ້ອນ ທີ 2: ແບບຟອມສໍາພາດຄະນະການຈັດຕັ້ງບ້ານ.................................34

ເອກະສານຄັດຊ້ອນ ທີ 3: ແບບຟອມລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກໍາ.........37

ເອກະສານຄັດຊ້ອນ ທີ 4: ແບບຟອມເກັບກໍາຂໍ້ມູນສໍາລັບຄອບຄົວທີ່ລົງທະບຽນ..................38

ເອກະສານຄັດຊ້ອນ ທີ 5: ແບບຟອມສໍາຫຼວດພື້ນທີ່ .......................................................41

ເອກະສານຄັດຊ້ອນ ທີ 6: ແຜນການສະໜອງທຶນ ...........................................................46

ເອກະສານຄັດຊ້ອນ ທີ 7: ບົດບັນທຶກກອງປະຊຸມ .........................................................47

ເອກະສານຄັດຊ້ອນ ທີ 8: ໃບສະເໜີຂໍຄ່ຽນເງິນ..............................................................51

ເອກະສານຄັດຊ້ອນ ທີ 9: ໃບສະເໜີຫາທ່ານເຈົ້າເມືອງ....................................................53

ເອກະສານຄັດຊ້ອນ ທີ 10: ແຈ້ງການເຖິງບ້ານ ກ່ຽວກັບຈໍານວນເງິນທີ່ໄດ້ຮັບ.......................55

ເອກະສານຄັດຊ້ອນ ທີ 11: ແຜນນໍາໃຊ້ເງິນ ທຶນກະສິກໍາ ແລະ ປ່າໄມ້ບ້ານ (ຟອມ 5C) ..........57

# ຄຳຫຍໍ້

| | |
|---|---|
| CLUFC | Current Land Use and Forest Cover<br>ການນຳໃຊ້ທີ່ດິນ ແລະ ການປົກຫຸ້ມປ່າໄມ້ໃນປະຈຸບັນ |
| DONRE | District Office of Natural Resources and Environment<br>ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ |
| DPMU | District Project Management Unit<br>ໜ່ວຍງານຄຸ້ມຄອງໂຄງການຂັ້ນເມືອງ |
| DAFO | District Agriculture and Forestry Office<br>ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ |
| FPIC | Free, Prior and Informed Consent<br>ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ |
| FLUMZ | Future Land Use Management Zone<br>ເຂດການຄຸ້ມຄອງການນຳໃຊ້ທີ່ດິນໃນອະນາຄົດ |
| I-GFLL | Implementation of Governance, Forest Landscapes and Livelihoods<br>ໂຄງການ ການຈັດຕັ້ງປະຕິບັດ ການຄຸ້ມຄອງປ່າໄມ້ ແບບພູມີທັດ ແລະ ສົ່ງເສີມຊີວິດການເປັນຢູ່ |
| SU-I-GFLM | Scaling Up the Implementation of the Lao PDR Emission Reduction Programme through Improved Governance sustainable Forest Landscape Management<br>ໂຄງການ ຜັນຂະຫຍາຍ ການຈັດຕັ້ງປະຕິບັດ ແຜນງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍການປັບປຸງການຄຸ້ມຄອງປ່າໄມ້ ແບບຍືນຍົງຢູ່ ສປປ ລາວ |
| MAF | Ministry of Agriculture and Forestry<br>ກະຊວງກະສິກຳ ແລະ ປ່າໄມ້ |
| PSAP | Promotion of Sustainable Agricultural Practices<br>ສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ |
| PLUP | Participatory Land Use Planning<br>ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ |
| PAFO | Provincial Agriculture and Forestry Office<br>ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PSA | Private Sector Analysis<br>ການວິເຄາະສະພາບການລົງທຶນຂອງພາກສ່ວນເອກະຊົນ |

| | |
|---|---|
| VFAG | Village Forest and Agriculture Grants<br>ກອງທຶນສົ່ງເສີມກະສິກຳ ແລະ ປ່າໄມ້ບ້ານ |
| VFMP | Village Forest Management Planning<br>ການວາງແຜນຄຸ້ມຄອງປ່າໄມ້ບ້ານ |
| VLFMC | Village Land and Forest Management Committee<br>ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ |

# ພາກທີ I: ພາກສະເໜີ
# ການສົ່ງເສີມກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP)

## 1. ແນວທາງການຈັດຕັ້ງປະຕິບັດ PSAP ໂດຍສັງເຂບ

ການສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ ຜ່ານການສະໜັບສະໜູນຂອງໜ່ວຍງານ PSAP ທີ່ໄດ້ຖືກແຕ່ງຕັ້ງຂຶ້ນພາຍໃນແຂວງ ແລະ ເມືອງ ຈະສາມາດຊຸກຍູ້ຊາວກະສິກອນຢູ່ບ້ານເປົ້າໝາຍ ໃຫ້ມີຄວາມຮູ້ຄວາມສາມາດໃນການຜະລິດກະສິກຳແບບຍືນຍົງໃນຕອນດິນຂອງເຂົາເຈົ້າ. ການສົ່ງເສີມ ແມ່ນແນໃສ່ຊາວກະສິກອນທີ່ອາໄສ ການຜະລິດກະສິກຳເນີນສູງ ຫຼື ການປູກພືດຊະນິດດຽວດ່ຽວ ໃນພື້ນທີ່ທີ່ຖືກຈັດສັນໄວ້ໃນແຜນນຳໃຊ້ທີ່ດິນອານະຄົດຂອງບ້ານ (FLUMZ) ເພື່ອຫຼີກລ້ຽງການຂະຫຍາຍພື້ນທີ່ການຜະລິດກະສິກຳເຂົ້າໃນເຂດຄຸ້ມຄອງປ່າໄມ້ບ້ານ.

ການດຳເນີນກິດຈະກຳໃນບ້ານເປົ້າໝາຍໂຄງການ SU-I-GFLM ແມ່ນເປັນໄປຕາມລຳດັບ ເຊິ່ງເລີ່ມຈາກຂະບວນການສ້າງຄວາມຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍຮັບຂໍ້ມູນລ່ວງໜ້າ (FPIC1). ພາຍຫຼັງທີ່ FPIC 1 ໄດ້ເຮັດສຳເລັດໄດ້ຕາມເປົ້າໝາຍ ໂດຍໄດ້ຮັບການຕົກລົງເຫັນດີຂອງບ້ານທີ່ຢາກເຂົ້າຮ່ວມໂຄງການແລ້ວ ກໍຈະໄດ້ເລີ່ມຈັດຕັ້ງປະຕິບັດການວາງແຜນການນຳໃຊ້ດິນແບບມີສ່ວນຮ່ວມ (PLUP 2.0) ຊຶ່ງວຽກງານດັ່ງກ່າວຈະໃຊ້ເວລາສະເລ່ຍ 7 ວັນໃນການເຮັດວຽກ ພະນັກງານຈາກ ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ແລະ ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມເມືອງ ທີ່ໄດ້ຖືກຝຶກມາແລ້ວ ເປັນຜູ້ຈັດຕັ້ງປະຕິບັດ. ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມຈະບົ່ງບອກ ແລະ ກຳນົດເຂດນຳໃຊ້ໃນອະນາຄົດ, ກຳນົດເສັ້ນເຂດແດນລະຫວ່າງດິນ ກະສິກຳ ແລະ ເຂດປ່າໄມ້ເພື່ອການຄຸ້ມຄອງ ເພື່ອປ້ອງກັນການທຳລາຍປ່າໄມ້. ຄຽງຄູ່ກັນນັ້ນແມ່ນ ໄດ້ເລີ່ມຈັດຕັ້ງປະຕິບັດກິດຈະກຳ ທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG) ເຊິ່ງລວມມີການຄັດເລືອກ ແລະ ຝຶກອົບຮົມໃຫ້ຄະນະຄຸ້ມຄອງທຶນຂອງບ້ານ.

ພາຍຫຼັງທີ່ FPIC1, PLUP ແລະ VFAG ສຳເລັດແລ້ວ ວຽກ PSAP ແມ່ນສາມາດເລີ່ມຈັດຕັ້ງປະຕິບັດໂດຍການຊຸກຍູ້ສົ່ງເສີມ ແລະ ສ້າງຄວາມເຂົ້າໃຈກ່ຽວກັບການຜະລິດກະສິກຳແບບຍືນຍົງ, ປະເມີນຄວາມຕ້ອງການ ແລະ ທ່າແຮງ, ພື້ນທີ່ດິນ ແລະ ຊ່ວຍກຳນົດທາງເລືອກໃຫ້ແຕ່ລະຄອບຄົວເປົ້າໝາຍກ້າວເຂົ້າສູ່ການຜະລິດທີ່ຍືນຍົງຂຶ້ນ. ຄຽງຄູ່ກັນນັ້ນ, ກິດຈະກຳການວາງແຜນຄຸ້ມຄອງປ່າໄມ້ບ້ານ (VFMP) ຈະຕ້ອງໄດ້ກຳນົດການຄຸ້ມຄອງປ່າໄມ້ ແລະ ການປ້ອງກັນໃນພື້ນທີ່ປ່າ ຮ່ວມກັບອົງການຈັດຕັ້ງບ້ານ. ສະຫຼຸບແລ້ວການຈັດຕັ້ງວຽກງານກະສິກຳ ແລະ ປ່າໄມ້ແມ່ນຈະນຳໄປສູ່ການຫຼຸດຜ່ອນການຄຸກຄາມປ່າໄມ້ໃນອະນາຄົດ.


ສະໜັບສະໜູນໂດຍ:
GREEN CLIMATE FUND
ADB
ASIAN DEVELOPMENT BANK
IFAD FIDA
KFW
JICA
ຂະບວນການຈັດຕັ້ງປະຕິບັດກິດຈະກຳຢູ່ຂັ້ນບ້ານຂອງ ໂຄງການ ຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ
ໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM)
ກອງທຶນປົກປັກຮັກສາສິ່ງແວດລ້ອມ ( ກປສ )
ດຳເນີນການໂອນເງິນບ້ວງສົ່ງເສີມ ແລະ ບ້ວງຄຸ້ມຄອງປ່າໄມ້ບ້ານ
ດຳເນີນການໂອນເງິນບ້ວງຈ່າຍຕາມຜົນງານ (ຂຶ້ນກັບເນື້ອທີ່ປ່າໄມ້ ແລະ ຜົນງານຕົວຈິງ ຫຼັງຈາກຈັດຕັ້ງແຜນຄຸ້ມຄອງປ່າໄມ້ບ້ານປະຈຳປີ 2 ປີ ໂດຍສືບຕໍ່ໃຊ້ເງິນບ້ວງນີ້ ເຮັດກະສິກຳແບບຍືນຍົງ ແລະ ຄຸ້ມຄອງປ່າໄມ້ບ້ານ)
1. ຂະບວນການສ້າງຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ ຄັ້ງທີ 1 ( FPIC 1 )
ທີມງານຈາກ ນຊມ ແລະ ສຍມ
2. ສ້າງຕັ້ງ ທຶນກະສິກຳ ແລະ ປ່າໄມ້ບ້ານ
ທີມງານຈາກ ສຍມ ແລະ ຫກປມ
ບັນຊີທຶນກະສິກຳ ແລະ ປ່າໄມ້ບ້ານ
ແຈ້ງຜົນງານເພື່ອຈ່າຍເງິນຕາມຜົນງານ
ທຶນຈັດຕັ້ງແຜນຄຸ້ມຄອງປ່າໄມ້ບ້ານ ປະຈຳປີ ປະມານ 2,000 ເອີໂຣຕໍ່ປີ ອີງຕາມເນື້ອທີ່ປ່າໄມ້ຕົວຈິງ
ທຶນສົ່ງເສີມກະສິກຳແບບຍືນຍົງ ບໍ່ໃຫ້ເກີນ 400 ເອີໂຣ ຕໍ່ຄອບຄົວທີ່ຖືກເງື່ອນໄຂ
3. ວາງແຜນສົ່ງເສີມກະສິກຳ ແບບຍືນຍົງ ຕາມບັນຊີຂາວ
ທີມງານສົ່ງເສີມຈາກ ຫກປມ
ແຜນສົ່ງເສີມ ຖືກຮັບຮອງ
5. ຈັດຕັ້ງປະຕິບັດແຜນສົ່ງເສີມ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງປ່າໄມ້ບ້ານ /ແຜນອະນຸລັກປ່າໄມ້
6. ຕິດຕາມ ແລະ ປະເມີນຜົນ ລວມທັງການນຳໃຊ້ລະບົບຕິດຕາມກວດກາການທຳລາຍປ່າໄມ້ຢ່າງທັນເຫດການ
ທີມງານຕິດຕາມກວດກາການທຳລາຍປ່າໄມ້ຈາກ ຫກປມ
2. ວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ( PLUP 2.0 )
ທີມງານຈາກ ຫກປມ ແລະ ຫຊສມ
3. ວາງແຜນຄຸ້ມຄອງປ່າໄມ້ບ້ານ/ແຜນອະນຸລັກປ່າໄມ້
ທີມງານປ່າໄມ້ ຈາກ ຫກປມ
4. ເຮັດສັນຍາຄຸ້ມຄອງປ່າໄມ້ບ້ານ/ສັນຍາອະນຸລັກປ່າໄມ້ ( FPIC 2 ແລະ FPIC 3 )
ທີມງານຈາກ ນຊມ ແລະ ສຍມ
ຝຶກອົບຮົມ ແລະ ຕິດຕາມຊຸກຍູ້
ຝຶກອົບຮົມ, ຕິດຕາມຊຸກຍູ້ ແລະ ການເຮັດສັນຍາການຕະຫຼາດ
ທີມງານສົ່ງເສີມ
ທີມງານປ່າໄມ້
ທີມງານທຶນ
ຫົວໜ່ວຍທຸລະກິດກະສິກຳຂະໜາດນ້ອຍ ແລະ ກາງ
ທຶນສົມທົບສຳລັບການລົງທຶນຕ່ອງໂສ້ມູນຄ່າ
ກປສ
ຈັດຕັ້ງປະຕິບັດໂດຍ:
giz
ສັນຍະລັກ
ຂະບວນການພາຍໃຕ້ອົງປະກອບ 1
ຂະບວນການພາຍໃຕ້ອົງປະກອບ 2
ຂະບວນການພາຍໃຕ້ອົງປະກອບ 3
ນຊມ: ແນວລາວສ້າງຊາດເມືອງ
ຫກປມ: ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
ຫຊສມ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
ສຍມ: ສະຫະພັນແມ່ຍິງເມືອງ
ທີມງານ ປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ
ທີມງານ ສົ່ງເສີມບົດບາດ ຍິງ-ຊາຍ

## 2. ຈຸດປະສົງ

ໂຄງການມີຈຸດປະສົງ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການປ່ຽນແປງການນໍາໃຊ້ທີ່ດິນທີ່ບໍ່ຖືກວິທີ ແລະ ຈາກການທໍາລາຍປ່າໄມ້. ບົດແນະນໍາການສົ່ງເສີມການຜະລິດກະສິກໍາແບບຍືນຍົງ ໂດຍບໍ່ທໍາລາຍປ່າໄມ້ (PSAP) ນີ້ແນໃສ່ການສົ່ງເສີມປູກພືດເສດຖະກິດ ເປັນມິດກັບສະພາບແວດລ້ອມ, ສະອາດ-ປອດໄພປະກອບສ່ວນເຂົ້າໃນການດູດສັບທາດອາຍເຮືອນແກ້ວ.

## 3. ເປົ້າໝາຍ

ໂຄງການ SU-I-GFLM ໄດ້ຈັດຕັ້ງປະຕິບັດຢູ່ 6 ແຂວງພາກເໜືອຂອງ ສປປ ລາວ (ຫົວພັນ, ຫຼວງພະບາງ, ໄຊຍະບູລີ, ຫຼວງນໍ້າທາ, ບໍ່ແກ້ວ ແລະ ອຸດົມໄຊ) ປະກອບມີ 25 ເມືອງ, 530 ບ້ານ, ຄາດວ່າຈະມີຜູ້ໄດ້ຮັບຜົນປະໂຫຍດທາງກົງ ໃນຂົງເຂດຊົນນະບົດ 153,700 ຄົນ, ຜູ້ໄດ້ຮັບຜົນປະໂຫຍດທາງອ້ອມໃນຂົງເຂດຊົນນະບົດ 332,990 ຄົນ.

## 4. ຄາດຄະເນຜົນຂອງການຈັດຕັ້ງປະຕິບັດ

ການຕອບສະໜອງກິດຈະກໍາສົ່ງເສີມກະສິກໍາແບບຍືນຍົງ ໂດຍບໍ່ທໍາລາຍປ່າໄມ້ໃນບ້ານເປົ້າໝາຍ 290 ບ້ານ ຄາດຄະເນຈໍານວນຄອບຄົວເຂົ້າຮ່ວມກິດຈະກໍາ ຫຼາຍກວ່າ 10,000 ຄອບຄົວ.

## 5. ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດ PSAP

### 5.1. ຮູບແບບ

- ຕອບສະໜອງ ສອດຄ່ອງກັບທິດສີຂຽວ ກະສິກໍາສະອາດ ບໍ່ໃຊ້ສານເຄມີ ເປັນມິດກັບສະພາບແວດລ້ອມ ຫລຸດຜ່ອນການປ່ອຍທາດອາຍເຮືອນແກ້ວ
- ຕິດພັນກັບການຄຸ້ມຄອງປ່າໄມ້ບ້ານ ສ້າງມູນຄ່າເພີ່ມ ສົ່ງເສີມການຕະຫລາດ ໂດຍການຮ່ວມມືລັດ-ເອກະຊົນ
- ສົ່ງເສີມການຜະລິດໃນຮູບແບບປະສົມປະສານ ຫັນປ່ຽນກະສິກໍາໝູນວຽນ ສູ່ການຜະລິດກະສິກໍາຄົງທີ່ ແນະນໍາແນວພັນ ເຕັກນິກ ເຄື່ອງມື ແລະ ນະວັດຕະກໍາໃໝ່ ເພື່ອສາມາດປັບຕົວໄດ້ໃນການປ່ຽນແປງຂອງສະພາບດິນຟ້າອາກາດ.
- ສົ່ງເສີມການຜະລິດແບບເປັນກຸ່ມ ສ້າງຕັ້ງຕົວແທນຄອບຄົວຜູ້ເຂົ້າຮ່ວມກິດຈະກໍາ ແລະ ແບບຢ່າງທີ່ດີໃນການຜະລິດ
- ປະສົມປະສານພູມປັນຍາທ້ອງຖິ່ນ ຫັນປ່ຽນພຶດຕິກໍາຜະລິດໃຫ້ມີຄວາມຍືນຍົງ ສ້າງລາຍໄດ້ໄລຍະສັ້ນ ຄຽງຄູ່ກັບຄວາມໝັ້ນຄົງໄລຍະຍາວ.
- ສ້າງສັນຂະບວນການມີສ່ວນຮ່ວມ ຮັບຟັງສຽງທີ່ແຕກຕ່າງຫຼາກຫຼາຍ ຈາກຜູ້ຈັດຕັ້ງປະຕິບັດ ສູ່ຜູ້ຕັດສິນໃຈ
- ເຄົາລົບສິດສະເໝີພາບ ບົດບາດຍິງຊາຍ, ສົ່ງເສີມຜູ້ນ້ອຍໂອກາດຂາດເຂີນ ສ້າງກໍາລັງແຮງງານກະສິກໍາໜຸ່ມສາວ.

### 5.2. ວິທີການ

- ຮ່ວມມືຫຼາຍພາກສ່ວນ ລວບລວມຄວາມຮູ້ - ພັດທະນາເຄື່ອງມື ຮູບແບບ ແລະ ວິທີການສົ່ງເສີມ
- ສ້າງເສີມຄວາມຮູ້ຄວາມສາມາດໃຫ້ກັບຄູ່ຮ່ວມງານພາກລັດ ຖ່າຍທອດເຕັກນິກກະສິກໍາຍືນຍົງລົງສູ່ຮາກຖານການຜະລິດ ໂດຍຜ່ານການຝຶກອົບຮົມ
- ປະເມີນທ່າແຮງດ້ານເສດຖະກິດສັງຄົມ ສໍາຫລວດພື້ນທີ່ທໍາການຜະລິດຕົວຈິງ ກ່ອນການວາງແຜນກິດຈະກໍາຮ່ວມກັບຄອບຄົວ
- ຕອບສະໜອງປັດໃຈນໍາເຂົ້າການຜະລິດທີ່ບໍ່ແມ່ນເງິນສົດ ຄຸ້ມຄອງຄຸນນະພາບ ແລະ ມາດຕະຖານເຕັກນິກ
- ຖອດຖອນ ແລກປ່ຽນຄວາມຮູ້ ປະສົບການຂອງຊາວກະສິກອນ ສູ່ ຊາວກະສິກອນ

- ໃຫ້ຄຳແນະນຳວິຊາການເຖິງທີ່ ກວດກາປະເມີນຜົນການຈັດຕັ້ງປະຕິບັດ ທົບທວນຖອດຖອນບົດຮຽນ ຜັນຂະຫຍາຍໃຫ້ບັນລຸເປົ້າໝາຍຂອງຄວາມຍືນຍົງ
- ເຄົາລົບສິດການຕັດສິນໃຈຂອງປະຊາຊົນ ແລະ ອົງການຈັດຕັ້ງທ້ອງຖິ່ນ

# ພາກທີ II:
# ອົງປະກອບ ແລະ ຂະບວນການຈັດຕັ້ງປະຕິບັດ PSAP

## 1. ອົງປະກອບຂອງໜ່ວຍງານ PSAP

| | |
|---|---|
| • ໜ່ວຍງານ PSAP ແຂວງ ປະກອບມີ 4 ທ່ານ ຈາກຂະແໜງການອ້ອມຂ້າງຂອງພະແນກ ກະສິກຳ ແລະ ປ່າໄມ້ | ພະນັກງານທີ່ຖືກແຕ່ງຕັ້ງຈາກພະແນກກະສິກຳ ແລະ ປ່າໄມ້ (ໜ່ວຍງານ PSAP ແຂວງ) ທີ່ໄດ້ຜ່ານການຝຶກອົບຮົມການຈັດຕັ້ງວຽກງານສົ່ງເສີມແລ້ວ ແມ່ນມີບົດບາດໜ້າທີ່ໃຫ້ຄຳປຶກສາ, ຊີ້ນຳ, ແລະ ປະສານງານ ກັບ ໜ່ວຍງານ PSAP ເມືອງ ພ້ອມທັງຕິດຕາມກວດກາ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກຳສົ່ງເສີມຢູ່ບ້ານເປົ້າໝາຍໃຫ້ສອດຄ່ອງກັບທິດສີຂຽວຂອງລັດຖະບານລາວ |
| • ໜ່ວຍງານ PSAP ເມືອງ ປະກອບມີ 4 ທ່ານ ຈາກຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ | ພະນັກງານທີ່ຖືກແຕ່ງຕັ້ງຈາກຫ້ອງການສິກຳ ແລະ ປ່າໄມ້ເມືອງ (ໜ່ວຍງານ PSAP ເມືອງ) ທີ່ໄດ້ຮັບການຝຶກອົບຮົມແລ້ວ ແມ່ນມີບົດບາດໜ້າທີ່ໃນການດຳເນີນກິດຈະກຳ ແລະ ຂັ້ນຕອນຕ່າງໆເພື່ອສົ່ງເສີມ PSAP ໃນບ້ານເປົ້າໝາຍ, ສະໜັບສະໜູນເຕັກນິກແກ່ຊາວກະສິກອນ, ປະສານງານກັບ ໜ່ວຍງານຄຸ້ມຄອງໂຄງການ (FPIC/VFAG, PLUP ແລະ VFM) ແລະ ພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດກິດຈະກຳສົ່ງເສີມຢູ່ບ້ານເປົ້າໝາຍ. ລວມທັງການປະກອບເອກະສານຂໍຄ່ຽນເງິນເຂົ້າບ້ານ ຕາມລະບຽບຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF), ຕິດຕາມປະເມີນຜົນ ແລະ ລາຍງານພາກສ່ວນທີ່ກ່ຽວຂ້ອງ. |
| • ທີ່ປຶກສາດ້ານກະສິກຳຈາກ GIZ | ມີບົດບາດໜ້າທີ່ໃຫ້ຄຳປຶກສາ ແລະ ບໍລິການທາງດ້ານເຕັກນິກ, ເສີມສ້າງທັກສະຄວາມຮູ້ຄວາມສາມາດຂອງໜ່ວຍງານ PSAP ແຂວງ ແລະ ເມືອງ ພ້ອມທັງຕິດຕາມກວດກາປະສິດຕິຜົນຂອງການຈັດຕັ້ງປະຕິບັດວຽກງານ PSAP. |

## 2. ອົງປະກອບທາງເຕັກນິກຂອງ PSAP

ການສົ່ງເສີມການຈັດຕັ້ງປະຕິບັດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ຖືວ່າເປັນອົງປະກອບໜຶ່ງທີ່ມີສ່ວນຮ່ວມເຂົ້າໃນການປົກປັກຮັກສາ ແລະ ຫຼຸດຜ່ອນການທຳລາຍປ່າໄມ້ ເຊິ່ງແນໃສ່ການຜະລິດກະສິກຳແບບປະສົມປະສານ, ບໍ່ນຳໃຊ້ສານເຄມີ ຄຽງຄູ່ກັບການນຳໃຊ້ຊັບພະຍາກອນໃຫ້ເກີດມູນຄ່າເພີ່ມ ໂດຍການນຳເອົາວິທະຍາການໃໝ່ມາສົ່ງເສີມຊາວກະສິກອນຢູ່ເຂດເນີນສູງ, ການຈັດຕັ້ງປະຕິບັດກິດຈະກຳ ແມ່ນອີງໃສ່ລາຍການບັນຊີຂາວ (ເອກະສານຄັດຊ້ອນ ທີ 1) ທີ່ເໝາະສົມສຳລັບການຫັນປ່ຽນຮູບແບບການຜະລິດ ແລະ ການນຳໃຊ້ທີ່ດິນແບບ ບໍ່ຍືນຍົງ ໄປສູ່ການຜະລິດກະສິກຳແບບຄົງທີ່.

ອົງປະກອບຫຼັກຂອງຂະບວນການສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ ມີດັ່ງລຸ່ມນີ້:

- ອີງໃສ່ຜົນຂອງການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP 2.0)
- ຕ້ອງຮູ້ຂໍ້ມູນທ່າແຮງການຜະລິດ ແລະ ການຕະຫຼາດ ກ່ອນທີ່ຈະໄປສະໜັບສະໜູນຊາວບ້ານທຳການຜະລິດ
- ຄູ່ຮ່ວມງານຫຼັກຂອງໜ່ວຍງານ PSAP ແມ່ນ ອົງການຈັດຕັ້ງບ້ານ, ຄະນະຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (VLFMC) ແລະ ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ (VFAGC) ທີ່ໄດ້ຖືກແຕ່ງຕັ້ງຂຶ້ນ
- ລາຍການກິດຈະກຳບັນຊີຂາວທີ່ຈະສົ່ງເສີມ ແມ່ນຖືກຄັດເລືອກບົນພື້ນຖານການວິເຄາະເຖິງຄວາມສອດຄ່ອງກັບທິດທາງສີຂຽວ ເປັນມິດກັບສະພາບແວດລ້ອມ ຊ່ວຍດູດຊັບອາຍເຮືອນແກ້ວ ສ້າງລາຍໄດ້ ແລະ ຮັບປະກັນສະບຽງອາຫານໃຫ້ຄອບຄົວ
- ໂຄງການມີຄວາມຕັ້ງໃຈສະໜັບສະໜູນ ການຄຸ້ມຄອງ ປັບປຸງ ສວນຫຍ້າລ້ຽງສັດ ເພື່ອໃຫ້ມີແຫຼ່ງອາຫານທີ່ມີໂພຊະນາການທີ່ພຽງພໍສຳລັບສັດລ້ຽງທີ່ມີຢູ່, ການຊື້ສັດລ້ຽງໃດໆກໍ່ຕາມຈະບໍ່ໄດ້ຮັບການສົ່ງເສີມພາຍໃຕ້ທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG)
- ໂຄງການແນໃສ່ຄອບຄົວ ທີ່ຜະລິດກະສິກຳເນີນສູງ ປູກພືດຊະນິດດຽວ ຕົວຢ່າງ: ຄອບຄົວທີ່ປູກສາລີ, ປູກມັນຕົ້ນ ແລະ ອື່ນໆ.
- ຄອບຄົວໜຶ່ງສາມາດເລືອກເຮັດກິດຈະກຳໃນລາຍການບັນຊີຂາວໄດ້ພຽງໜຶ່ງຢ່າງ
- ຊາວກະສິກອນ ສາມາດສະໝັກຄອບຄົວດຽວ ຫຼື ເປັນກຸ່ມ. ຕົວຢ່າງ: ການປັບປຸງສວນຫຍ້າລ້ຽງສັດ ແລະ ການບຸກເບີກເນື້ອທີ່ນາໃໝ່ ເປັນກິດຈະກຳທີ່ສາມາດເຮັດຮ່ວມກັນຫຼາຍຄອບຄົວ
- ການເລືອກກິດຈະກຳແມ່ນຂຶ້ນກັບຄວາມສະໝັກໃຈຂອງຄອບຄົວ ພ້ອມດຽວກັນນັ້ນແມ່ນຕ້ອງອີງຕາມການໃຫ້ຄຳປຶກສາ ຈາກໜ່ວຍງານ PSAP ແລະ ຄະນະຈັດຕັ້ງບ້ານ ເພື່ອຮັບປະກັນຄວາມສອດຄ່ອງກັບທ່າແຮງການຜະລິດ ແລະ ການຕະຫຼາດ
- ໜ່ວຍງານ PSAP ຈະຊຸກຍູ້ສົ່ງເສີມ ການສະໜອງປັດໄຈ, ເຕັກນິກການຜະລິດ, ນຳພາຂະບວນການແລກປ່ຽນຄວາມຮູ້ຂອງຊາວກະສິກອນ ສູ່ ຊາວກະສິກອນ

## 3. ແຜນວາດກິດຈະກຳຂອງຂະບວນການ PSAP

ໂດຍລວມແລ້ວ ກ່ອນທີ່ໜ່ວຍງານ PSAP ແຂວງ ແລະ ເມືອງຈະເລີ່ມລົງຈັດຕັ້ງປະຕິບັດ ແມ່ນຈະໄດ້ຮັບການຝຶກອົບຮົມກ່ຽວກັບວິທີການດຳເນີນແຕ່ລະກິດຈະກຳ. ພາບວາດລຸ່ມນີ້ສະແດງເຖິງຂັ້ນຕອນການຈັດຕັ້ງປະຕິບັດແຕ່ລະກິດຈະກຳ ເຊິ່ງຈະມີລາຍລະອຽດເພີ່ມເຕີມໃນແຕ່ລະພາກຖັດໄປ.






**ແຜນວາດ 3:** ເງື່ອນໄຂ ແລະ ບຸລິດມະສິດ ຂອງຄອບຄົວເຂົ້າຮ່ວມກິດຈະກຳ PSAP

# ພາກທີ III:
# ຂັ້ນຕອນ ແລະ ບາດກ້າວໃນການດຳເນີນຂະບວນການ PSAP

**ຂັ້ນຕອນທີ 1: ການກະກຽມຄວາມພ້ອມກ່ອນຈັດຕັ້ງປະຕິບັດ**

**ບາດກ້າວທີ 1:** ທົບທວນປັບປຸງເອກະສານແນະນຳການຈັດຕັ້ງປະຕິບັດ PSAP ແລະ ເອກະສານເຕັກນິກການສົ່ງເສີມ

ໂດຍການຖອດຖອນບົດຮຽນຈາກການຈັດຕັ້ງປະບັດໂຄງການ I-GFLL (ໂຄງການໄລຍະ 1) ໃນ 3 ແຂວງ ໄຊຍະບູລີ, ຫຼວງພະບາງ ແລະ ຫົວພັນ, ເຫັນໄດ້ເຖີງຜົນສຳເລັດ ແລະ ສິ່ງທ້າທາຍ ທີ່ຕ້ອງໄດ້ປັບປຸງສູ່ໂຄງການ ໂຄງການ SU-I-GFLM (ໂຄງການໄລຍະ 2) ຈຶ່ງໄດ້ມີການຈັດກອງປະຊຸມທົບທວນຖອດຖອນບົດຮຽນໂດຍ ການມີສ່ວນຮ່ວມຈາກຫຼາຍພາກສ່ວນ ໂດຍສະເພາະ ເຈົ້າຂອງໂຄງການຢູ່ບັນດາແຂວງ ແລະ ເມືອງເປົ້າໝາຍ, ຊາວກະສິກອນ, ທີ່ປຶກສາ GIZ, ອົງການຈັດຕັ້ງສາກົນ ແລະ ພາກເອກກະຊົນ ທີ່ກ່ຽວຂ້ອງກັບວຽກງານກະສິກຳຢູ່ທົ່ວປະເທດ.

**ບາດກ້າວທີ 2:** ຝຶກອົບຮົມ TOT ໃຫ້ແກ່ໜ່ວຍງານ PSAP ແຂວງ ແລະ ເມືອງເປົ້າໝາຍ

ກ່ອນໜ່ວຍງານ PSAP ແຕ່ລະແຂວງ ແລະ ເມືອງຈະລົງຈັດຕັ້ງປະຕິບັດກິດຈະກຳຢູ່ບ້ານເປົ້າໝາຍ ແມ່ນຈະມີການຝຶກອົບຮົມ ດຳເນີນໂດຍທີ່ປຶກສາ GIZ ຮ່ວມກັບ ໜ່ວຍງານ PSAP ແຂວງ ແລະ ພາກສ່ວນອື່ນໆທີ່ມີປະສົບການກ່ຽວກັບເຕັກນິກສະເພາະ, ປະກອບມີ 2 ພາກຄື:

**ກ)** ການຝຶກອົບຮົມໃຫ້ກັບໜ່ວຍງານ PSAP ແຂວງ ແລະ ເມືອງ ກ່ຽວກັບ ຂະບວນການ, ຂັ້ນຕອນການຈັດຕັ້ງປະຕິບັດ PSAP ເຊິ່ງຈະລວມມີ ພາບລວມຂອງຂະບວນການສົ່ງເສີມ, ການວາງແຜນກິດຈະກຳ ແລະ ການສະໜອງທຶນໃຫ້ຄອບຄົວເປົ້າໝາຍ ພ້ອມທັງ ແນວທາງການສົ່ງເສີມກະສິກຳແບບຍືນຍົງ.

**ຂ)** ການຝຶກອົບຮົມກ່ຽວກັບເຕັກນິກວິຊາການປູກຜັກໃນລາຍການບັນຊີຂາວເພື່ອກຽມຄວາມພ້ອມໃນການຖ່າຍທອດເຕັກນິກໃຫ້ຊາວກະສິກອນເປົ້າໝາຍ, ການຝຶກອົບຮົມນີ້ຈະປະຕິບັດຕາມ ຄວາມສອດຄ່ອງທີ່ລະບຸໄວ້ໃນລາຍການກິດຈະກຳບັນຊີຂາວ ແລະ ເອກະສານເຕັກນິກຂອງ PSAP.

**ຂັ້ນຕອນທີ 2: ວາງແຜນການຜະລິດຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກໍາ PSAP**

ໃນຂັ້ນຕອນທີ 2 ລວມທັງໝົດມີ 8 ບາດກ້າວດັ່ງລາຍລະອຽດລຸ່ມນີ້:




**ບາດກ້າວທີ 1: ການກະກຽມກ່ອນເຂົ້າສູ່ບ້ານເປົ້າໝາຍ**

ເມື່ອໜ່ວຍງານ PSAP ໄດ້ຮັບການຝຶກອົບຮົມແລ້ວ, ຂັ້ນຕອນນີ້ແມ່ນຈະການກະກຽມແຜນການເຮັດວຽກຢູ່ໃນພາກສະໜາມ, ພາຍຫຼັງສໍາເລັດການວາງແຜນນໍາໃຊ້ທີ່ດິນ (PLUP) ໜ່ວຍງານ PSAP ຈະຕ້ອງໄດ້ຖອດຖອນບົດຮຽນ ແລະ ນໍາເອົາຂໍ້ມູນເອກະສານຕ່າງໆຈາກໜ່ວຍງານ PLUP ແລະ ສຶກສາທ່າແຮງຂອງບ້ານເປົ້າໝາຍ ກ່ອນທີ່ຈະລົງຈັດຕັ້ງປະຕິບັດກິດຈະກໍາ ເຊິ່ງຈະປະກອບມີ:

## 1.1. ອຸປະກອນ ແລະ ວັດສະດຸທີ່ຈະນໍາໃຊ້ໃນການຈັດຕັ້ງປະຕິບັດວຽກ

ອຸປະກອນ, ວັດສະດຸ ແລະ ເຄື່ອງມືທີ່ສໍາຄັນສໍາລັບວຽກ PSAP ທີ່ຈະຈັດຕັ້ງປະຕິບັດໃນບ້ານລວມມີ:

- ຄອມພິວເຕີ ໂນດບຸກ 1 ໜ່ວຍ, ປິ່ນເຕີ້ 1 ໜ່ວຍ ແບບພົກພາສະດວກ
- ໂປເຈັກເຕີ (LCD) ສໍາລັບສາຍໃຫ້ເຫັນຂໍ້ມູນທີ່ເກັບກໍາໄດ້ ແລະ ການວາງແຜນ
- ເຈັ້ຍຂາວແຜ່ນໃຫຍ່ ແລະ ບິກມາກເກີ້ສໍາລັບຂຽນ ແລະ ແຕ້ມພາບ
- ກ້ອງຖ່າຍຮູບ ຫຼື ກ້ອງໂທລະສັບມືຖື
- GPS 2 ໜ່ວຍ PSAP
- ໂພສເຕີ້ ລາຍການບັນຊີຂາວ
- ໂພສເຕີ້ ເງື່ອນໄຂ ແລະ ບຸລິມະສິດ ສໍາລັບຄອບຄົວທີ່ຈະເຂົ້າຮ່ວມກິດຈະກໍາ PSAP
- ແບບຟອມເກັບກໍາຂໍ້ມູນ, ເອກະສານຕ່າງໆທີ່ກ່ຽວຂ້ອງ
- ເອກະສານແນະນໍາ ການຈັດຕັ້ງປະຕິບັດ PSAP

## 1.2. ການສໍາຫຼວດ ແລະ ວິເຄາະຂໍ້ມູນພື້ນຖານຂອງບ້ານ

ກ່ອນທີ່ໜ່ວຍງານ PSAP ຈະເລີ່ມລົງໄປບ້ານເປົ້າໝາຍ ຕ້ອງໄດ້ມີການສຶກສາຂໍ້ມູນສະພາບຂອງບ້ານຕ້ອງໄດ້ມີການປະສານງານ ແລະ ຖອດຖອນບົດຮຽນ ຈາກຜົນການຈັດຕັ້ງປະຕິບັດ PLUP 2.0 ແລະ ນໍາໃຊ້ຂໍ້ມູນສໍາຄັນເພື່ອມາວິເຄາະເຊັ່ນ:

- ບົດລາຍງານ PLUP ຂອງບ້ານ

- ແບບຟອມ 1: ຂໍ້ມູນພື້ນຖານຂອງບ້ານ
- ແບບຟອມ 2: ການເກັບກຳຂໍ້ມູນເສດຖະກິດ - ສັງຄົມ, ທີ່ດິນ ແລະ ປ່າໄມ້ຂອງບ້ານ
- ແຜນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ໃນປະຈຸບັນ (CLUFC)
- ແຜນທີ່ເຂດການຄຸ້ມຄອງນຳໃຊ້ທີ່ດິນໃນອະນາຄົດ (FLUMZ)
- ຂໍ້ມູນຄອບຄົວທີ່ຖືກຜົນກະທົບຈາກການວາງແຜນນຳໃຊ້ທີ່ດິນ
- ລະບຽບການຂອງບ້ານ (ໂດຍສະເພາະພາກສ່ວນທີ່ອ້າງອີງໃສ່ເຂດກະສິກຳ ແລະ ການນຳໃຊ້ທີ່ດິນ)

ກ່ອນລົງໄປເຮັດວຽກຢູ່ບ້ານເປົ້າຫມາຍ ໜ່ວຍງານ PSAP ຕ້ອງມີເອກະສານ ແລະ ຂໍ້ມູນທີ່ຈຳເປັນເຫຼົ່ານີ້ ແລະ ຄວນມີການປະຊຸມນ້ອຍເພື່ອປຶກສາຫາລື ແລກປ່ຽນຈຸດສຳຄັນຈາກໜ່ວຍງານ PLUP ແລະ VFMP ເພື່ອເຮັດໃຫ້ ມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນຂອງບ້ານມີຄວາມຊັດເຈນຂຶ້ນ.

ນອກຈາກຂໍ້ມູນຈາກ PLUP ແລ້ວ ໜ່ວຍງານ PSAP ຄວນສຶກສາຂໍ້ມູນຄອບຄົວທຸກຍາກ ຈາກການປະເມີນ 348 ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ເຊິ່ງຈະຊ່ວຍໃຫ້ພວກເຂົາເຂົ້າໃຈສະພາບ ແລະ ທ່າແຮງຂອງບ້ານໄດ້ດີຂຶ້ນ.

## 1.3. ການກະກຽມຂໍ້ມູນດ້ານການຕະຫຼາດ

ໜ່ວຍງານ PSAP ຕ້ອງເລີ່ມຕົ້ນກະກຽມຄວາມພ້ອມສຳລັບວຽກພາກສະໜາມ, ກ່ອນອື່ນໝົດຕ້ອງໄດ້ມີຂໍ້ມູນຂອງພາກເອກະຊົນທີ່ເຄື່ອນໄຫວພາຍໃນເມືອງຂອງພວກເຂົາ, ລວມທັງບັນດາບໍລິສັດຈາກແຂວງ ຫຼື ຈາກສູນກາງທີ່ເຄື່ອນໄຫວຢູ່ໃນເມືອງ ເພື່ອສຶກສາເຖິງຕະຫຼາດຄວາມຕ້ອງການ ແລະ ການສະໜອງສິນຄ້າ ໃນປະຈຸບັນເພື່ອເປັນແນວທາງໃນການສົ່ງເສີມແກ່ຊາວກະສິກອນໃຫ້ກົງກັບເປົ້າໝາຍ, ມີຕະຫຼາດຮອງຮັບຜົນຜະລິດຈາກຊາວກະສິກອນ.

ທ້າຍສຸດ, ກ່ອນລົງບ້ານເປົ້າໝາຍ ໜ່ວຍງານ PSAP ຕ້ອງແຈ້ງໃຫ້ອົງການຈັດຕັ້ງບ້ານ, ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (VLFMC), ຄະນະຄຸ້ມຄອງທຶກກະສິກຳ ແລະ ປ່າໄມ້ບ້ານ (VFAGC) ແລະ ຊາວບ້ານຮູ້ລ່ວງໜ້າກ່ອນທີ່ຈະມາເຖິງ. ໜ່ວຍງານຄວນນຳໃຊ້ລາຍການໜ້າວຽກທີ່ຄວນເຮັດ (To do list) ແລະ ລາຍການອຸປະກອນທີ່ຄວນມີ (Check list) ເຂົ້າຊ່ວຍໃນການແບ່ງວຽກ ແລະ ການກະກຽມ.

**ບາດກ້າວທີ 2: ກອງປະຊຸມແນະນຳຂັ້ນບ້ານ**

ພາຍຫຼັງການກະກຽມທຸກຢ່າງຢູ່ຫ້ອງການສຳເລັດ, ໜ່ວຍງານ PSAP ຈະເດີນທາງໄປບ້ານເປົ້າໝາຍ ເພື່ອເລີ່ມຕົ້ນເຮັດວຽກພາກສະໜາມ. ເມື່ອເຖິງບ້ານແລ້ວ ໜ່ວຍງານ PSAP ຈະພົບປະກັບຄະນະຈັດຕັ້ງບ້ານ ເພື່ອອະທິບາຍຈຸດປະສົງ ແລະ ຂັ້ນຕອນໃນການເຮັດວຽກ ພ້ອມທັງສຳພາດ ແລະ ເກັບກຳຂໍ້ມູນເສດຖະກິດ-ສັງຄົມຂອງບ້ານ (ເອກະສານຄັດຊ້ອນທີ 2)

ກອງປະຊຸມບ້ານຄັ້ງທຳອິດຈະຖືກຈັດຂຶ້ນ ຮ່ວມກັບຄະນະການຈັດຕັ້ງບ້ານ, ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ (VLFMC) ແລະ ຕ້ອງມີຜູ້ຕາງໜ້າຂອງ ທຸກໆຄອບຄົວທີ່ອາໄສຢູ່ໃນບ້ານຕ້ອງເຂົ້າຮ່ວມກອງປະຊຸມບ້ານຄັ້ງນີ້.

ກອງປະຊຸມບ້ານຄັ້ງທຳອິດໃນການຈັດຕັ້ງປະຕິບັດ PSAP ມີຈຸດປະສົງດັ່ງຕໍ່ໄປນີ້:

## 2.1. ນຳສະເໜີພາບລວມຂອງການລົງເຮັດວຽກ

- ແນະນຳຕົວຂອງທີມ PSAP ຕໍ່ການຈັດຕັ້ງບ້ານ ແລະ ຊາວບ້ານນຳສະເໜີບາດກ້າວການເຮັດວຽກ ຂອງໜ່ວຍງານ PSAP, ໃນນັ້ນຈະຕ້ອງໄດ້ອະທິບາຍກ່ຽວກັບຈຸດປະສົງຂອງ PSAP
- ວິທີການ ແລະ ຂັ້ນຕອນທີ່ຈະເຮັດວຽກ ແລະ ຜົນສຸດທ້າຍທີ່ຢາກໃຫ້ບັນລຸ.
- ຈັດຕັ້ງຂະບວນການເຮັດວຽກຮ່ວມກັບຄະນະການຈັດຕັ້ງບ້ານ, VLFMC ແລະ ຊາວບ້ານໃນເວລາ 7 ຫາ 8 ວັນ.

## 2.2. ນຳສະເໜີລາຍຊື່ກິດຈະກຳບັນຊີຂາວ ແລະ ເອກະສານສົ່ງເສີມເຕັກນິກ

ກິດຈະກຳ "ບັນຊີຂາວ" ແມ່ນລາຍການກິດຈະກຳກະສິກຳ ໂດຍເນັ້ນໃສ່ການປູກຝັງທີ່ມີຄວາມຍືນຍົງ ແລະ ປະສົມປະສານການຄຸ້ມຄອງປ່າໄມ້ບ້ານບໍ່ໃຫ້ຖືກທຳລາຍ ລວມທັງໝົດ 12 ກິດຈະກຳ ທີ່ປະກອບມີລະບົບການຜະລິດແບບຍືນຍົງເຊັ່ນ: ການຜະລິດກະສິກຳທີ່ປັບຕົວເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດ, ການປູກພືດແບບປະສົມປະສານ, ລະບົບການປູກພືດປະສົມປະສານກັບປ່າໄມ້, ພ້ອມທັງການສົ່ງເສີມການປູກພືດໂດຍສະເພາະເຊັ່ນ: ປູກຊາ, ກາເຟ ແລະ ອື່ນໆ ໃນລາຍຊື່ບັນຊີຂາວ (ເອກະສານຄັດຊ້ອນທີ 1).

ໃນກອງປະຊຸມບ້ານ, ໜ່ວຍງານ PSAP ຈະໃຊ້ໂປສເຕີ A0 ຫຼື ສະແດງລາຍຊື່ກິດຈະກຳບັນຊີຂາວໃສ່ ໜ້າຈໍໂປເຈັກເຕີ ເພື່ອອະທິບາຍແຕ່ລະກິດຈະກຳ ໂດຍອີງໃສ່ຂໍ້ມູນທ່າແຮງດ້ານການຕະຫຼາດ, ຂໍ້ກຳນົດ, ມາດຖານ ແລະ ລາຍການທີ່ຈຳເປັນໃນການຄິດໄລ່ງົບປະມານປັດໃຈການຜະລິດໃນເອກະສານການສົ່ງເສີມເຕັກນິກ. ຈາກນັ້ນໜ່ວຍງານ PSAP ຈະຕອບຄຳຖາມ ແລະ ແລກປ່ຽນກັບຊາວບ້ານເພື່ອຄວາມກະຈ່າງແຈ້ງຕື່ມອີກ.

**<u>ໝາຍເຫດ:</u>** ການຄັດເລືອກກິດຈະກຳບັນຊີຂາວໃນບ້ານໜຶ່ງບໍ່ຄວນກາຍ 5 ກິດຈະກຳ ແລະ ໜຶ່ງກິດຈະກຳຕ້ອງມີຜູ້ສະໝັກຢ່າງນ້ອຍ 5 ຄອບຄົວ ເນື່ອງຈາກຈະສະດວກໃນເວລາຈັດສົ່ງປັດໃຈການຜະລິດ, ການຖ່າຍທອດທາງດ້ານເຕັກນິກ ແລະ ການບໍລິຫານຈັດການ, ຍົກເວັ້ນບາງກໍລະນີອີງຕາມທ່າແຮງຂອງຄອບຄົວເປົ້າໝາຍ.

ໃນຕອນທ້າຍຂອງກອງປະຊຸມ ຊາວບ້ານ ທັງຜູ້ຊາຍ ແລະ ຜູ້ຍິງທຸກຄົນຈະເຂົ້າໃຈວ່າໂຄງການ SU-I-GFLM ຈະສະໜັບສະໜູນກິດຈະກຳການຜະລິດກະສິກຳ ແບບຍືນຍົງເທົ່ານັ້ນ ເຊິ່ງແມ່ນກິດຈະກຳທີ່ນອນຢູ່ໃນບັນຊີຂາວ, ພາຍຫຼັງທີ່ຊາວບ້ານໄດ້ຮັບຮູ້ຂໍ້ມູນກ່ຽວກັບລາຍຊື່ກິດຈະກຳບັນຊີຂາວໃນເບື້ອງຕົ້ນ ຄອບຄົວທີ່ສົນໃຈ ແລະ ມີເງື່ອນໄຂ ສາມາດລົງທະບຽນເຂົ້າຮ່ວມກິດຈະກຳຂອງ PSAP ໄດ້ ໂດຍອີງໃສ່ກິດຈະກຳທີ່ ເໝາະສົມກັບຄອບຄົວຂອງເຂົາ.

## 2.3. ນຳສະເໜີເງື່ອນໄຂ ແລະ ບຸລິມະສິດ ຂອງການຄັດເລືອກຄອບຄົວ/ກຸ່ມທີ່ຈະໄດ້ຮັບການສະໜັບສະໜູນຈາກ PSAP

ຄອບຄົວຊາວກະສິກອນເປົ້າໝາຍ ທີ່ ຈະເຂົ້າຮ່ວມກິດຈະກຳຕ້ອງແມ່ນ **ຄອບຄົວທີ່ອາໄສການເຮັດກະສິກຳເນີນສູງ** ໂດຍອີງໃສ່ເງື່ອນໄຂ ແລະ ບຸລິມະສິດດັ່ງລຸ່ມນີ້:

❖ **ເງື່ອນໄຂຫລັກ ສຳລັບການກຳນົດການຄັດເລືອກຄອບຄົວ:**

1. ຄອບຄົວທີ່ອາໄສການເຮັດກະສິກຳຢູ່ເຂດເນີນສູງຢ່າງດຽວ ຫຼື ບາງສ່ວນ ແລະ ຄອບຄົວທີ່ຕ້ອງການສະໝັກຕ້ອງມີໄຮ່ ຫລື ດິນປ່າເລົ່າ (ປ່າເລົ່າອ່ອນ ອາຍຸບໍ່ເກີນ 5 ປີ).
2. ຊາວກະສິກອນທີ່ບໍ່ໄດ້ເຮັດກະສິກຳຢູ່ເຂດເນີນສູງ ແມ່ນບໍ່ມີເງື່ອນໄຂທີ່ຈະໄດ້ຮັບການສະໜັບສະໜູນ.
3. ຄອບຄົວໜຶ່ງສາມາດເລືອກໄດ້ 1 ກິດຈະກຳຈາກບັນຊີຂາວ.
4. ກິດຈະກຳທີ່ຄອບຄົວເລືອກຕ້ອງເໝາະສົມກັບພື້ນທີ່, ລະດັບຄວາມຄ້ອຍຊັນ, ຂະໜາດຂອງຕອນດິນ ແລະ ປັດໄຈອື່ນໆ (ຕົວຢ່າງ: ຢູ່ໃກ້ແຫຼ່ງນ້ຳ, ມີເສັ້ນທາງເຂົ້າເຖິງ, ມີແຮງງານ...)
5. ການປະຕິບັດກິດຈະກຳທີ່ເລືອກ ຕ້ອງນອນຢູ່ໃນຕອນດິນສຳລັບການຜະລິດກະສິກຳ ທີ່ໄດ້ກຳນົດຕາມແຜນທີ່ ຄຸ້ມຄອງການນຳໃຊ້ທີ່ດິນໃນອານາຄົດ FLUMZ ແລະ ຕ້ອງບໍ່ນອນຢູ່ໃນພື້ນທີ່ 3 ປະເພດປ່າຂອງບ້ານ.
6. ທຸກໆຄອບຄົວທີ່ຕ້ອງການເຂົ້າຮ່ວມກິດຈະກຳ ຕ້ອງຕົກລົງເຫັນດີທີ່ຈະຫຼີກຫຼ່ຽງບໍ່ນຳໃຊ້ສານເຄມີເຊັ່ນ: ຢາຂ້າຫຍ້າ, ຢາປາບສັດຕູພືດ ຫຼື ຢາຂ້າແມງໄມ້, ລວມທັງຝຸ່ນເຄມີ, ນ້ຳຢາເລັ່ງການຈະເລີນເຕີບໂຕຂອງພືດ ແລະ ສານເຄມີອື່ນໆທີ່ເປັນພິນກະທົບທາງລົບຕໍ່ຊີວິດ ແລະ ສິ່ງແວດລ້ອມ.

❖ **ບູລິມະສິດຄວນໃຫ້ກັບກຸ່ມເປົ້າໝາຍ ດັ່ງຕໍ່ໄປນີ້:**

- ຄອບຄົວທີ່ຈະລົງທະບຽນແມ່ນຄອບຄົວທຸກຍາກ
- ຄອບຄົວທີ່ຈະລົງທະບຽນແມ່ນຄອບຄົວໜຸ່ມນ້ອຍ ອາຍຸຕໍ່າກວ່າ ຫຼື ເທົ່າກັບ 35 ປີ
- ຄອບຄົວທີ່ຈະລົງທະບຽນແມ່ນຄອບຄົວທີ່ແມ່ຍິງເປັນຫົວໜ້າຄອບຄົວ
- ຄອບຄົວທີ່ຈະລົງທະບຽນແມ່ນໄດ້ຮັບຜົນກະທົບຈາກການວາງແຜນຈັດສັນທີ່ດິນ PLUP 2.0

ໃນຈຸດນີ້ ຈະເຮັດໃຫ້ຊາວບ້ານຮັບຮູ້ ແລະ ເຂົ້າໃຈກ່ຽວກັບເງື່ອນໄຂ ແລະ ບູລິມະສິດໃນການເຂົ້າຮ່ວມກິດຈະກໍາຂອງໂຄງການ, ເຊິ່ງຖ້າຫາກຜູ້ທີ່ບໍ່ໄດ້ຢູ່ໃນເງື່ອນໄຂ ແລະ ບູລິມະສິດແມ່ນຈະບໍ່ໄດ້ຮັບການພິຈາລະນາ.

## 2.4. ອະທິບາຍກ່ຽວກັບການສະໜອງທຶນສໍາລັບການຜະລິດກະສິກໍາແບບຍືນຍົງ ໂດຍຜ່ານທຶນກະສິກໍາ ແລະ ປ່າໄມ້ບ້ານ (VFAG)

ໜ່ວຍງານ PSAP ຕ້ອງໄດ້ອະທິບາຍວິທີການທີ່ຄອບຄົວ ຫຼື ກຸ່ມຊາວກະສິກອນທີ່ໄດ້ຮັບການຄັດເລືອກວ່າພວກເຂົາຈະໄດ້ຮັບການສະໜັບສະໜູນດ້ານທຶນຮອນຈາກໂຄງການ SU-I-GFLM ໃນການຈັດຕັ້ງປະຕິບັດການຜະລິດກະສິກໍາແບບຍືນຍົງ ແລະ ຖ້າຫາກຄອບຄົວຕອບສະໜອງຕາມເງື່ອນໄຂ ແລະ ບູລິມະສິດຂ້າງເທິງ. ພາຍໃຕ້ໂຄງການ SU-I-GFLM, ທຸກບ້ານເປົ້າໝາຍ ຈະສ້າງຕັ້ງທຶນກະສິກໍາ ແລະ ປ່າໄມ້ບ້ານ (VFAG) ໂດຍການ (1) ຮັບຮອງກົດລະບຽບວ່າດ້ວຍການຄຸ້ມຄອງທຶນ, (2) ຄັດເລືອກ ແລະ ແຕ່ງຕັ້ງຄະນະຄຸ້ມຄອງທຶນ ຈໍານວນ 3 ທ່ານເພື່ອຄຸ້ມຄອງ, ເບີກຈ່າຍລາຍງານ ແລະ (3) ເປີດບັນຊີບ້ານຢູ່ທະນະຄານເພື່ອຮັບທຶນ 3 ບ້ວງ ຄື:

1) ເງິນສໍາລັບການລົງທຶນ ເພື່ອຕອບສະໜອງປັດໄຈການຜະລິດ ຈໍານວນເງິນທີ່ບ້ານຈະໄດ້ຮັບແມ່ນຂຶ້ນກັບການຄໍານວນຊັດສ່ວນ ອີງຕາມຈໍານວນຄອບຄົວທັງໝົດ ແລະ ຈໍານວນຄອບຄົວທຸກຍາກ ແຕ່ລະບ້ານທີ່ໄດ້ຄາດຄະເນໄວ້ (ລາຍລະອຽດໃນພາກທີ 6), ສະນັ້ນ, ຕ້ອງມີການວິເຄາະທ່າແຮງຂອງຄອບຄົວ ແລະ ວາງແຜນຕົວຈິງຂອງແຕ່ລະບ້ານບໍ່ໃຫ້ເກີນຈໍານວນເງິນທີ່ຄາດຄະເນໄວ້.

2) ເງິນສໍາລັບການເຮັດວຽກ ເພື່ອຄຸ້ມຄອງປ່າໄມ້ບ້ານ ໂດຍປະມານ 2.000 ເອີໂຣຕໍ່ບ້ານຕໍ່ປີ (ຈໍານວນເງິນທີ່ບ້ານຈະໄດ້ຮັບຕົວຈິງຕໍ່ປີແມ່ນຂຶ້ນກັບການວາງແຜນຕົວຈິງຂອງແຕ່ລະບ້ານ)

3) ເງິນຈ່າຍຕາມຜົນງານ ຫຼັງຈາກຈົບໂຄງການ (ຈໍານວນເງິນທີ່ບ້ານຈະໄດ້ຮັບແມ່ນຂຶ້ນກັບຜົນງານ ແລະ ເນື້ອທີ່ຄວາມປົກຫຸ້ມປ່າໄມ້ຂອງແຕ່ລະບ້ານ). **ໝາຍເຫດ:** ລາຍລະອຽດໃຫ້ເບິ່ງປຶ້ມຄໍາແນະນໍາທຶນກະສິກໍາ ແລະ ປ່າໄມ້ບ້ານ (VFAG).

ສໍາລັບບ້ວງເງິນການລົງທຶນ ເພື່ອຕອບສະໜອງປັດໃຈການຜະລິດກະສິກໍາແບບຍືນຍົງໂດຍບໍ່ທໍາລາຍປ່າໄມ້ ບ້ານຈະໄດ້ຮັບເມື່ອໜ່ວຍງານສົ່ງເສີມຂັ້ນເມືອງ ຮ່ວມກັບຊາວບ້ານສໍາເລັດການວາງແຜນກິດກະກໍາ ໂດຍອີງຕາມບັນຊີຂາວຂອງໂຄງການ ຫຼື ເອີ້ນວ່າ **"ແຜນການສະໜອງທຶນຂອງບ້ານ"** ທີ່ໄດ້ມີການຮັບຮອງຈາກບ້ານ ແລະ ຄະນະຊີ້ນໍາໂຄງການຂັ້ນເມືອງແລ້ວ ແຜນດັ່ງກ່າວຈະໄດ້ຖືກສົ່ງໄປຍັງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ເພື່ອດໍາເນີນການໂອນເງິນເຂົ້າບັນຊີບ້ານ. ເຊິ່ງເງິນເຫຼົ່ານີ້ຈະຖືກນໍາໃຊ້ສະເພາະ ສໍາລັບການສົ່ງເສີມ ການຜະລິດກະສິກໍາ ໃຫ້ມີຄວາມຍືນຍົງ.

ການສະໜອງທຶນເພື່ອສົ່ງເສີມການຜະລິດກະສິກໍາແບບຍືນຍົງຈາກ VFAG ແມ່ນທຶນຊ່ວຍເຫຼືອລ້າ, ດັ່ງນັ້ນຖ້າຫາກວ່າຄອບຄົວຊາວກະສິກອນ ທີ່ປະລະບໍ່ດໍາເນີນກິດຈະກໍາ ຫຼື ມີການຂາຍພື້ນທີ່ທໍາການຜະລິດໃຫ້ກັບຄົນອື່ນຈະຕ້ອງໄດ້ປະຕິບັດຕາມລະບຽບຂອງທຶນ VFAG, ຈໍານວນເງິນສູງສຸດທີ່ສາມາດຈັດສັນໃຫ້ຄອບຄົວໜຶ່ງ ແມ່ນບໍ່ເກີນ 400 ເອີໂຣ.

ເງິນທຶນນີ້ສາມາດ ນໍາໃຊ້ໃນຄອບຄົວເປົ້າໝາຍທີ່ໄດ້ຄັດເລືອກ ແລະ ສາມາດຈັດຊື້ ປັດໃຈການຜະລິດຕ່າງໆ ເຊິ່ງຈະແບ່ງເປັນ 2 ສ່ວນຄື: 75% ແມ່ນລົງທຶນປັດໄຈໃສ່ກິດຈະກໍາຫຼັກ ແລະ ອີກ 25% ແມ່ນພືດທີ່ປະສົມປະສານ ອີງຕາມກອບຂອງໂຄງການ. **ໝາຍເຫດ:** ຍົກເວັ້ນ ກິດຈະກໍາ (1) ບຸກເບີກ/ປັບປຸງເນື້ອທີ່ນາ, (2) ບຸກເບີກ/ປັບປຸງໜອງປາ, (3) ການປູກຜັກສວນຄົວ

ປັດໄຈການຜະລິດທີ່ສາມາດລົງທຶນປະກອບມີ:

- ຊື້ແນວພັນ ຫລື ເບ້ຍໄມ້
- ຊື້ເຄື່ອງມື, ອຸປະກອນ ແລະ ວັດສະດຸທີ່ຈໍາເປັນສໍາລັບການປູກຝັງ (ລາຍລະອຽດອີງຕາມເອກະສານສົ່ງເສີມເຕັກນິກ)
- ຊື້ຝຸ່ນຊີວະພາບ (ອິນຊີ)
- ເຄື່ອງມືໃນການຜະລິດ ຕົວຢ່າງ: ຈັກຕັດຫຍ້າ, ໄດດູດນໍ້າ, ທໍ່, ຫົວຊີດນໍ້າ ສໍາລັບໃຊ້ໃນການຜະລິດ (ເຮັດນາ, ສວນຜັກ, ການປູກໄມ້ໃຫ້ໝາກ...) ເຄື່ອງບົດຫຍ້າ ແລະ ອື່ນໆ...
- ຈ້າງກົນຈັກສໍາລັບປັບໜ້າດິນ, ເຮັດຄູ (ສໍາລັບກິດຈະກໍາເຮັດນາ ແລະ ໜອງປາ)
- ກໍ່ສ້າງເຮືອນຮົ່ມ ແລະ ອາຄານນ້ອຍໆເພື່ອການຜະລິດ ໂດຍອີງຕາມເງິນທຶນສະໜອງ
- ແລະ ອື່ນໆ.

ການສະໜອງທຶນຈະຕ້ອງມີການປຶກສາຫາລືລະຫວ່າງຊາວກະສິກອນກັບໜ່ວຍງານ PSAP ອີງຕາມກິດຈະກໍາທີ່ຖືກເລືອກ ແລະ ຊາວກະສິກອນຈະຕ້ອງປະກອບສ່ວນທາງດ້ານແຮງງານ ແລະ ອຸປະກອນຕ່າງໆທີ່ຕົນເອງມີ ຫຼື ສາມາດຫາໄດ້ ເຊັ່ນ:

- ຄອບຄົວປະກອບແຮງງານ
- ສະໜອງ ວັດສະດຸທີ່ມີຢູ່ໃນທ້ອງຖິ່ນເຊັ່ນ: ຫຼັກຮົ້ວ (ໄມ້ໄຜ່, ເສົາໄມ້), ທີ່ພັກອາໄສການຜະລິດ ແລະ ວັດສະດຸອື່ນໆທີ່ເໝາະສົມ
- ແນວພັນການຜະລິດບາງສ່ວນທີ່ຕົນເອງມີພາຍໃນຄອບຄົວ.

ການສົ່ງເສີມການຜະລິດກະສິກໍາແບບຍືນຍົງໂດຍບໍ່ທໍາລາຍປ່າໄມ້ ກໍ່ເພື່ອໃຫ້ບ້ານເປົ້າໝາຍສາມາດຄຸ້ມຄອງປົກປັກຮັກສາເຂດປ່າໄມ້ຂອງຕົນໂດຍສອດຄ່ອງກັບແຜນການ ແລະ ສັນຍາຄຸ້ມຄອງປ່າໄມ້ບ້ານຂອງພວກເຂົາ ແລະ ກິດຈະກໍາດ້ານກະສິກໍາ ຈະບໍ່ສ້າງຜົນລົບເຂົ້າໃນການທໍາລາຍປ່າໄມ້, ເຊິ່ງບ້ານຈະໄດ້ຮັບເງິນຄັ້ງທີສອງ ພາຍຫຼັງໄດ້ມີການປະເມີນການປົກຫຸ້ມຂອງປ່າໄມ້ ແລະ ເນື້ອທີ່ປ່າໄມ້ຕົວຈິງໃນໄລຍະທ້າຍໂຄງການ. ເຊິ່ງເອີ້ນວ່າ "ການຈ່າຍເງິນຜົນງານ" ຈໍານວນເງິນໄດ້ຮັບດັ່ງກ່າວແມ່ນຂຶ້ນກັບຜົນຂອງການກວດສອບການປົກຫຸ້ມຂອງປ່າໄມ້ໂດຍໃຊ້ພາບຖ່າຍດາວທຽມ.

ໃນຂັ້ນຕອນນີ້ຊາວບ້ານທັງຜູ້ຊາຍ ແລະ ຜູ້ຍິງທຸກຄົນໄດ້ເຂົ້າໃຈເຖິງກົນໄກການສະໜັບສະໜູນ ທຶນຜ່ານ VFAG ແລະ ຮັບຮູ້ວ່າການສະໜັບສະໜູນທຶນແມ່ນການຊ່ວຍເຫຼືອລ້າ ໃນຈໍານວນເງິນສູງສຸດຕໍ່ຄອບຄົວແມ່ນບໍ່ເກີນ 400 ເອີໂຣ.

**ບາດກ້າວທີ 3: ການລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກໍາ**

ໜ່ວຍງານ PSAP ຈະເປີດໂອກາດໃຫ້ຄອບຄົວທີ່ສົນໃຈຢາກມີສ່ວນຮ່ວມໃນການຜະລິດກະສິກໍາແບບຍືນຍົງ ແລະ ຈະໄດ້ຮັບການສະໜັບສະໜູນຈາກທຶນ VFAG ເຊິ່ງການລົງທະບຽນຄອບຄົວເຂົ້າຮ່ວມກິດຈະກໍາຈະເກີດຂຶ້ນພາຍຫຼັງກອງປະຊຸມບ້ານສໍາເລັດອີງຕາມເງື່ອນໄຂ ແລະ ບູລິມະສິດ ໂດຍເປີດໂອກາດໃຫ້ມີການລົງທະບຽນຮອດຕອນເຊົ້າຂອງມື້ທັດໄປ ເພື່ອໃຫ້ຄອບຄົວທີ່ຍັງຕັດສິນໃຈບໍ່ໄດ້ເພື່ອປຶກສາຫາລືພາຍໃນຄອບຄົວກ່ອນ ຈະເລືອກກິດຈະກໍາທີ່ຈະຈັດຕັ້ງປະຕິບັດ, ສ່ວນຄອບຄົວທີ່ພ້ອມແມ່ນສາມາດລົງທະບຽນໄດ້ເລີຍ.

ໃນການລົງທະບຽນ ໜ່ວຍງານ PSAP ຈະອະທິບາຍອີກເທື່ອໜຶ່ງກ່ຽວກັບກິດຈະກຳບັນຊີຂາວ ແລະ ມາດຖານເງື່ອນໄຂເຂົ້າຮ່ວມກິດຈະກຳ ໃນການລົງທະບຽນຈະມີການເກັບກຳຂໍ້ມູນ ດັ່ງລຸ່ມນີ້ (ເອກະສານຄັດຊ້ອນທີ 3):

- ລົງທະບຽນດ້ວຍຊື່ໃນຖານະເປັນຫົວໜ້າຄອບຄົວ ຫຼື ຜູ້ຈັດຕັ້ງປະຕິບັດ (ອີງຕາມປື້ມສຳມະໂນຄົວ)
- ລະບຸຊື່ກິດຈະກຳບັນຊີຂາວທີ່ເລືອກ
- ຢືນຢັນຄວາມຖືກຕ້ອງການນຳໃຊ້ຕອນດິນຂອງພວກເຂົາເອງ ພາຍໃນບ້ານດັ່ງກ່າວ (ຕ້ອງໄດ້ຮັບການຢັ້ງຢືນຈາກ VLFMC)

ພາຍຫຼັງທີ່ສຳເລັດການລົງທະບຽນ, ໜ່ວຍງານ PSAP ຕ້ອງໄດ້ມີການປຶກສາຫາລື ແລະ ຄັດເລືອກຜູ້ທີ່ຈະໄດ້ຮັບທຶນຄັ້ງທີ 1 ຮ່ວມກັບ ຄະນະການຈັດຕັ້ງບ້ານ, ຄະນຄຸ້ມຄອງທຶນ, ຄະນະກຳມະການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ເພື່ອຈັດລຽງຄອບຄົວທີ່ຖືກມາດຖານ ແລະ ເງື່ອນໄຂຂອງໂຄງການ, ສຳລັບຄອບຄົວທີ່ບໍ່ຖືກເງື່ອນໄຂແມ່ນຈະບໍ່ໄດ້ຮັບການພິຈາລະນາ ແລະ ຖືກຕັດອອກ ລວມທັງ ຄະນະກຳມະການຄຸ້ມຄອງທຶນ ແມ່ນຈະບໍ່ສາມາດໄດ້ຮັບທຶນຕາມລະບຽບຂອງ VFAG (ມີລະບຽບສະເພາະຂອງຄະນະກຳມະການ VFAGC). ສ່ວນຄອບຄົວທີ່ຖືກເງື່ອນໄຂຢູ່ລະດັບປານກາງ ແມ່ນຈະຖືກຈັດໄວ້ເປັນບຸລິມະສິດທີ 2.

ສຸດທ້າຍ, ໜ່ວຍງານ PSAP ຕ້ອງໄດ້ແຈ້ງໃຫ້ບັນດາຄອບຄົວທີ່ສົນໃຈ ແລະ ຖືກເງື່ອນໄຂ ຮູ້ວ່າຫຼັງຈາກການລົງທະບຽນຄັ້ງນີ້ແລ້ວ ໜ່ວຍງານຈະຕ້ອງໄດ້ເກັບກຳຂໍ້ມູນເພີ່ມເຕີມໃນແຕ່ລະຄອບຄົວ (ລາຍລະອຽດແມ່ນຢູ່ໃນບາດກ້າວທີ 4: ການເກັບຂໍ້ມູນເສດຖະກິດ-ສັງຄົມຂອງຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ).

**ບາດກ້າວທີ 4: ການເກັບຂໍ້ມູນເສດຖະກິດ-ສັງຄົມຂອງຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ.**

ພາຍຫຼັງທີ່ຊາວບ້ານໄດ້ລົງທະບຽນເຂົ້າຮ່ວມກິດຈະກຳແລ້ວ ໜ່ວຍງານ PSAP ຮ່ວມກັບ ຄະນະຈັດຕັ້ງບ້ານ, ຄະນະຄຸ້ມຄອງທຶນ (VFAGC) ແລະ ຄະນະຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (VLFMC) ຈະເລີ່ມຕົ້ນການເກັບກຳຂໍ້ມູນລາຍລະອຽດເພີ່ມເຕີມກ່ຽວກັບດ້ານເສດຖະກິດ - ສັງຄົມ ແລະ ດ້ານກະສິກຳສຳລັບບັນດາຄອບຄົວທີ່ໄດ້ລົງທະບຽນເຂົ້າຮ່ວມກິດຈະກຳ PSAP ຢູ່ໃນບ້ານ (ເອກະສານຄັດຊ້ອນທີ 4). ໃນການເກັບກຳຂໍ້ມູນ ຄວນປະຕິບັດດັ່ງນີ້:

ຕ້ອງລົງໄປຫາຄອບຄົວທີ່ລົງທະບຽນ ແລະ ສຳພາດຜູ້ຕາງໜ້າຂອງຄອບຄົວຢູ່ເຮືອນຂອງພວກເຂົາ. ວິທີການນີ້, ໜ່ວຍງານ PSAP ແລະ ສະມາຊິກ ທັງສາມຄະນະຂ້າງເທິງ ຕ້ອງໄດ້ແບ່ງກັນລົງຢ້ຽມຢາມ ແລະ ສຳພາດຫຼາຍໆຄອບຄົວພ້ອມກັນຈົນກ່ວາທຸກຄອບຄົວທີ່ລົງທະບຽນໄດ້ຖືກສຳພາດ. ການໄປຢ້ຽມຢາມຄົວເຮືອນເຫຼົ່ານີ້ຈະສ້າງຄວາມປະທັບໃຈຂອງຄອບຄົວ, ຈະໃຫ້ຄວາມເປັນສ່ວນຕົວໃນລະຫວ່າງການສຳພາດ ແລະ ຈະໄດ້ເຫັນສະພາບຄວາມເປັນຈິງ, ຖານະ ແລະ ສະພາບການຜະລິດຂອງແຕ່ລະຄອບຄົວ ເພື່ອປ້ອງກັນການປິດເບືອນຂໍ້ມູນຄວາມຈິງ ແລະ ຊ່ວຍໃນການຕັດສິນໃຈຂອງໜ່ວຍງານ.

ຈາກການເກັບກຳຂໍ້ມູນ ຈະຊ່ວຍໃຫ້ໜ່ວຍງານເຂົ້າໃຈເຖິງສະພາບຂອງແຕ່ລະຄອບຄົວໄດ້ດີຂຶ້ນ, ພິຈາລະນາຄວາມເໝາະສົມຂອງກິດຈະກຳທີ່ພວກເຂົາເລືອກ ແລະ ເງື່ອນໄຂການສະໜັບສະໜູນຈາກໂຄງການ SU-I-GFLM ອີກອັນຫນຶ່ງ ຕ້ອງໄດ້ແຈ້ງໃຫ້ແຕ່ລະຄອບຄົວຮູ້ວ່າພວກເຂົາສາມາດທີ່ຈະຖືກປະຕິເສດຈາກການ ໄດ້ຮັບທຶນຊ່ວຍເຫຼືອ ຖ້າພວກເຂົາໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ຖືກເງື່ອນໄຂ ຫຼື ບໍ່ເໝາະສົມ.

ຂໍ້ມູນທີ່ຈະເກັບກຳແມ່ນກ່ຽວຂ້ອງກັບການຜະລິດກະສິກຳໃນປະຈຸບັນ, ຈຳນວນຜະລິດຕະພົນ, ປະເພດ ແລະ ສະຖານທີ່ຂອງຕອນດິນທີ່ຄອບຄົວນຳໃຊ້, ກຳລັງແຮງງານ ແລະ ສັດລ້ຽງຂອງພວກເຂົາ. ຍ້ອນວ່າການເລືອກຄອບຄົວທີ່ຈະໄດ້ຮັບການສະໜັບສະໜູນຈາກໂຄງການ SU-I-GFLM ສ່ວນໃຫຍ່ແມ່ນສຸມໃສ່ພື້ນທີ່ເຂດເນີນສູງ ແລະ ຈຸດປະສົງແມ່ນເພື່ອສົ່ງເສີມການຜະລິດກະສິກຳ ທີ່ມີຄວາມຍືນຍົງ ແລະ ບໍ່ມີການຕັດໄມ້ທຳລາຍປ່າເປັນຫຼັກ.

ການເກັບກຳຂໍ້ມູນໂດຍໜ່ວຍງານ PSAP ຈະປະຕິບັດຕາມແບບຟອມເຊິ່ງສະແດງໃນເອກະສານຄັດຊ້ອນ 4. ໃນຕອນທ້າຍຂອງບາດກ້າວ 4, ໜ່ວຍງານ PSAP ໄດ້ເກັບກຳຂໍ້ມູນລະອຽດໃນແຕ່ລະຄອບຄົວທີ່ລົງທະບຽນ ເຊິ່ງ

ຈະຊ່ວຍໃນການເລືອກຄອບຄົວຄັ້ງທີ 2 ກ່ອນຈະລົງສຳຫຼວດພື້ນທີ່ການຜະລິດ ທີ່ສອດຄ່ອງ ແລະ ເໝາະສົມສຳລັບກິດຈະກຳ PSAP ໃນບ້ານເປົ້າໝາຍ.

**ບາດກ້າວທີ 5: ການລົງສຳຫຼວດພື້ນທີ່**

ພາຍຫຼັງໜ່ວຍງານ PSAP ສຳເລັດການສຳພາດບັນດາຄອບຄົວທີ່ລົງທະບຽນແລ້ວ, ໜ່ວຍງານຈະໄດ້ແບ່ງເປັນທີມຍ່ອຍເພື່ອໄປສຳຫຼວດພື້ນທີ່ຂອງຄອບຄົວທີ່ຜ່ານການຄັດເລືອກ ໂດຍຈະມີຕົວແທນຈາກ ຄະນະກຳມະການ VLFMC ແລະ ເຈົ້າຂອງຕອນດິນເຂົ້າຮ່ວມ, ເຊິ່ງອາດຈະໃຊ້ເວລາສຳຫຼວດຫຼາຍ ຫຼື ໜ້ອຍຂຶ້ນຢູ່ກັບໄລຍະທາງຫາຕອນດິນ ແລະ ຖ້າຫາກດິນທຳການຜະລິດຂອງຊາວກະສິກອນຢູ່ໃກ້ກັນກໍ່ຈະສະດວກ ແລະ ປະຢັດເວລາຂຶ້ນ.

ໜ່ວຍງານ PSAP ຈະປະເມີນຄັ້ງທຳອິດວ່າດິນຕອນນັ້ນຕັ້ງຢູ່ໃນເຂດການນຳໃຊ້ທີ່ດິນກະສິກຳ ທີ່ຖືກກຳນົດຕາມແຜນທີ່ການນຳໃຊ້ທີ່ດິນໃນອານາຄົດ (FLUMZ) ຫຼື ບໍ່, ໂດຍການນຳເອົາແຜນທີນຳໃຊ້ທີ່ດິນໃນອານາຄົດເຂົ້າໄປໃນ GPS ເພື່ອສະດວກໃນການເບິ່ງແຜນທີ່ດິນ ແລະ ຈະສາມາດຮັບຮູ້ໄດ້ທັນທີວ່າ ຕອນດິນດັ່ງກ່າວແມ່ນຕັ້ງຢູ່ຈຸດໃດຂອງບ້ານ ແລະ ຈະບໍ່ທັບຊ້ອນກັບພື້ນທີ່ປ່າໄມ້ ຫຼື ບໍ່, ດ້ວຍການຈັບຈຸດ GPS ໃນຕອນດິນ ວັດແທກຄວາມສູງຈາກໜ້ານ້ຳທະເລ, ພ້ອມທັງວັດແທກເນື້ອທີ່ ດ້ວຍການຍ່າງອ້ອມພື້ນທີ ທີ່ຈະທຳການຜະລິດ, ຖ້າຫາກຕອນດິນດັ່ງກ່າວບໍ່ນອນຢູ່ໃນຂອບເຂດຂອງບ້ານ ຫຼື ທັບຊ້ອນກັບເຂດປ່າໄມ້ ແມ່ນຈະຕ້ອງໄດ້ປ່ຽນຕອນດິນໃໝ່.

ຈາກນັ້ນໜ່ວຍງານ PSAP ຈະກວດກາສະພາບຕົວຈິງວ່າດິນຕອນດັ່ງກ່າວໄດ້ປູກຫຍັງແດ່, ເປັນດິນຄ້ອຍຊັນລະດັບໃດ, ດິນເປັນລັກສະນະແບບໃດເໝາະສົມກັບການທຳການຜະລິດບໍ່ ໂດຍການສັງເກດດ້ວຍຕາເປົ່າ ແລະ ເອົາມືກຳເບິ່ງດິນ (ດິນຕົມ, ດິນຊາຍ ຫຼື ດິນປົນຫີນ...) ເປັນທົ່ງຫຍ້າລ້ຽງສັດບໍ່ ແລະ ມີຮົ້ວ ຫຼື ບໍ່. ໜ່ວຍງານຈະປະເມີນຄວາມເໝາະສົມຂອງແຜນກິດຈະກຳທີ່ໄດ້ສະເໜີ ສຳລັບກິດຈະກຳ PSAP ແລະ ປຶກສາຫາລືກ່ຽວກັບຂັ້ນຕອນມາດຕະການທີ່ຈຳເປັນໃນການຈັດຕັ້ງປະຕິບັດກິດຈະກຳຂອງ PSAP ໃນດິນຕອນນັ້ນ, ລວມທັງສອບຖາມຄວາມຕ້ອງການປັດໃຈການຜະລິດໃນເບື້ອງຕົ້ນ. ສຸດທ້າຍ, ໃຫ້ຖ່າຍຮູບພາບຂອງຕອນດິນ ລວມທັງເຈົ້າຂອງດິນ ແລະ ສັງເກດຈຸດພິເສດສະພາບພື້ນທີ່ຂອງດິນ ກ່ອນທີ່ຈະມີການການຫັນປ່ຽນໄປສູ່ການຜະລິດກະສິກຳແບບຍືນຍົງ. ຂໍ້ມູນທັງໝົດທີ່ໄດ້ລວບລວມກ່ຽວກັບດິນຕອນນັ້ນ ຈະຖືກບັນທຶກໄວ້ໃນເອກະສານແບບຟອມໃນເອກະສານຄັດຊ້ອນທີ 5.

ຖ້າຕອນດິນທີ່ສະເໜີ ໂດຍຄອບຄົວຊາວກະສິກອນຫາກບໍ່ເໝາະສົມກັບກິດຈະກຳ PSAP ດ້ວຍເຫດຜົນໃດໜຶ່ງກໍ່ຕາມ, ຄອບຄົວດັ່ງກ່າວສາມາດສະເໜີທີ່ດິນຕອນໃໝ່ໄດ້ ແຕ່ຕ້ອງໄດ້ໄປສຳຫຼວດ ແລະ ເກັບກຳຂໍ້ມູນຄືນອີກຄັ້ງໜຶ່ງ ຫຼື ຖ້າຫາກວ່າຊາວກະສິກອນ ຫາກຕ້ອງການປ່ຽນກິດຈະກຳໃໝ່ທີ່ໄດ້ລົງທະບຽນໄວ້ໃນເບື້ອງຕົ້ນ ໃຫ້ເໝາະສົມກັບສະພາບພື້ນທີ່ຕອນດິນຂອງເຂົາເຈົ້າ ແລະ ກິດຈະກຳດັ່ງກ່າວແມ່ນນອນໃນລາຍການບັນຊີຂາວ ພ້ອມທັງເໝາະສົມກັບຕອນດິນແມ່ນສາມາດປະຕິບັດໄດ້.

ໃນລະຫວ່າງການສຳຫຼວດ ຖ້າຫາກໜ່ວຍງານ PSAP ເຫັນວ່າບາງພື້ນທີ່ດັ່ງກ່າວ ບໍ່ແມ່ນເຂດປ່າໄມ້ທີ່ກຳນົດໄວ້ໃນແຜນທີ່ FLUMZ ເຊັ່ນ: ທົ່ງນາທີ່ຢູ່ໃນປ່າ, ພື້ນທີ່ຮາບພຽງເໝາະສຳລັບການຜະລິດ ຫຼື ມີການທັບຊ້ອນລະຫວ່າງດິນກະສິກຳ ແລະ ເຂດຄຸ້ມຄອງປ່າໄມ້ທີ່ບໍ່ກົງກັບຄວາມເປັນຈິງມີການຄາດເຄື່ອນຜິດດ່ຽງກັບ ແຜນທີ່ FLUMZ, ເຊິ່ງມີຄວາມຈຳເປັນຕ້ອງໄດ້ດັດປັບເຂດແດນຂອງພື້ນທີ່ຕົວຈິງ ແມ່ນສາມາດປະສານງານກັບໜ່ວຍງານ PLUP 2.0 ຮ່ວມກັບໜ່ວຍງານ VFM ເພື່ອປຶກສາຫາລື ແລະ ດັດແກ້ ໃຫ້ແຜນທີ່ຂອງບ້ານມີຄວາມລະອຽດຊັດເຈນຂຶ້ນກວ່າເກົ່າ.




**ແຜນວາດ 4:** ການປະສານສົມທົບລະຫວ່າງ PSAP, PLUP ແລະ VFMP

ໃນຂັ້ນຕອນນີ້ ໜ່ວຍງານ PSAP ຈະໄດ້ລົງຢ້ຽມຢາມທຸກໆພື້ນທີ່ ທີ່ຖືກສະເໜີ ໃຫ້ຈັດຕັ້ງປະຕິບັດກິດຈະກຳ PSAP ແລະ ມີການປະເມີນຄວາມເໝາະສົມໂດຍລວມ, ຄັດເລືອກຄອບຄົວເປັນຄັ້ງສຸດທ້າຍຕາມຜົນໄດ້ຮັບໃນຂັ້ນຕອນທີ່ກ່າວມາຂ້າງເທິງ ພ້ອມທັງປຶກສາຫາລື ຕົກລົງ ກັບຄອບຄົວເປົ້າໝາຍເພື່ອຂຽນແຜນການຜະລິດຂຶ້ນໃນບາດກ້າວຕໍ່ໄປ

**ບາດກ້າວທີ 6: ການສ້າງແຜນກິດຈະກຳ ແລະ ການລົງທຶນ**

ເມື່ອຄອບຄົວຖືກຕ້ອງຕາມເງື່ອນໄຂ ແລະ ຜ່ານການຄັດເລືອກແລ້ວຈະກ້າວເຂົ້າສູ່ການວາງແຜນ ກິດຈະກຳ ແລະ ຄວາມຕ້ອງການໃນການຜະລິດ, ໃນນີ້ ທາງໂຄງການຈະສະໜັບສະໜູນອຸປະກອນ ແລະ ເຄື່ອງມືບາງສ່ວນທີ່ຈຳເປັນໃຫ້ກັບແຕ່ລະຄົວເຮືອນ ເຊິ່ງອາດຈະບໍ່ໄດ້ຄົບຕາມຄວາມຕ້ອງການທຸກຢ່າງໂດຍອີງຕາມໜ້າວຽກ, ຄວາມຕ້ອງການ ແລະ ງົບປະມານທີ່ຈັດສັນໃຫ້ກັບແຕ່ລະຄອບຄົວ, ຖ້າຫາກບາງຢ່າງທີ່ທາງໂຄງການບໍ່ສາມາດສະໜອງໃຫ້ ຫຼື ທາງຊາວກະສິກອນມີແລ້ວ ແມ່ນຕ້ອງໄດ້ປະກອບສ່ວນຮ່ວມກັນ (ເອກະສານຄັດຊ້ອນທີ 5), ແຕ່ລະກິດຈະກຳໃນບັນຊີຂາວແມ່ນອີງໃສ່ລະບົບການປູກແບບປະສົມປະສານ ເຊິ່ງຈະມີການແບ່ງຊັດສ່ວນໃນການລົງທຶນໃສ່ປັດໄຈການຜະລິດ ອີງຕາມ ບາດກ້າວ 2.4.

ບັນຊີລາຍຊື່ຄອບຄົວທີ່ຖືກຄັດເລືອກສຸດທ້າຍ ຈະຖືກບັນຈຸເຂົ້າໃນແຜນກິດຈະກຳ ແລະ ແຜນການລົງທຶນດ້ານກະສິກຳຂອງບ້ານ (ເອກະສານຊ້ອນທ້າຍທີ 6) ເພື່ອນຳມາຜ່ານ ແລະ ມີມະຕິຮັບຮອງໃນກອງປະຊຸມບ້ານຄັ້ງສຸດທ້າຍ.

**ບາດກ້າວທີ 7: ການຈັດກອງປະຊຸມຮັບຮອງແຜນກິດຈະກຳ ແລະ ການລົງທຶນ**

ພາຍຫຼັງທີ່ສຳເລັດການວາງແຜນກິດຈະກຳ ແລະ ການລົງທຶນແລ້ວ ໜ່ວຍງານ PSAP ຈະໄດ້ຈັດກອງປະຊຸມຄັ້ງສຸດທ້າຍເພື່ອລາຍງານຜົນໄດ້ຮັບໃນການເຮັດວຽກທີ່ຜ່ານມາ, ຜ່ານລາຍຊື່ ແລະ ແຜນກິດຈະກຳຂອງແຕ່ລະຄອບຄົວ ພ້ອມລົງປະຊາມະຕິ ຮັບຮອງເອົາຄອບຄົວທີ່ຈະໄດ້ຮັບທຶນຢ່າງເປັນເອກະພາບຈາກກອງປະຊຸມ, ໃນຂັ້ນ

ຕອນນີ້ໄດ້ເປີດໂອກາດໃຫ້ປະຊາຊົນພາຍໃນບ້ານໄດ້ໃຊ້ສິດຂອງໂຕເອງ ຖ້າຫາກວ່າມີຂໍ້ຂ້ອງໃຈ ຫຼື ບໍ່ເອກະພາບຮັບຮອງເອົາຄອບຄົວໃດໜຶ່ງ ແມ່ນສາມາດສະເໜີປຶກສາຫາລື ແລະ ຊີ້ແຈງເຫດຜົນໄດ້.

**ບາດກ້າວທີ 8: ການປະກອບເອກະສານກ່ອນອອກຈາກບ້ານເປົ້າໝາຍ**

ພາຍຫຼັງທີ່ມີການຮັບຮອງຢ່າງເອກະພາບແລ້ວ ໜ່ວຍງານ PSAP ຈະໄດ້ນຳເອົາເອກະສານແຜນການລົງທຶນ ແລະ ບົດບັນທຶກກອງປະຊຸມ ໄປເຊັນຮັບຮອງກັບ ຄະນະການຈັດຕັ້ງບ້ານ, ຄະນະຄຸ້ມຄອງທຶນທັງ 3 ທ່ານ ເພື່ອນຳໄປປະກອບເອກະສານຂໍຄ່ຽນເງິນເຂົ້າບ້ານ, ໃນຂັ້ນຕອນນີ້ ໜ່ວຍງານຈະຕ້ອງໄດ້ເຮັດເອກະສານປະກອບມີ: ແຜນການລົງທຶນ (ເອກະສານຄັດຊ້ອນທີ 6), ບົດບັນທຶກກອງປະຊຸມ (ເອກະສານຄັດຊ້ອນທີ 7), ໃບສະເໜີຂໍຄ່ຽນເງິນ (ເອກະສານຄັດຊ້ອນທີ 8), ໂດຍຈະມີການເຮັດເອກະສານຂຶ້ນມາເປັນ 3 ສະບັບ ເພື່ອໃຫ້ບ້ານເກັບສຳເນົາ 1 ສະບັບ, ປະກອບເອກະສານສົ່ງຫາທ່ານເຈົ້າເມືອງ ເພື່ອຮັບຮອງ 1 ສະບັບ ແລະ ສົ່ງຫາ ກອງທຶນປົກປັກຮັກສາສິ່ງແວດລ້ອມ ຫຼື ກປສ 1 ສະບັບ ເພື່ອຂໍຄ່ຽນເງິນ.

| **ມື້ທີ 1** | **ມື້ທີ 2** | **ມື້ທີ 3** | **ມື້ທີ 4 - 5** | **ມື້ທີ 6** | **ມື້ທີ 7** |
|---|---|---|---|---|---|
| 1. ກອງປະຊຸມແນະນຳຂັ້ນບ້ານ:<br>- ສະເໜີພາບລວມຂອງວຽກ PSAP<br>- ສະເໜີລາຍຊື່ ແລະ ອະທິບາຍກິດຈະກຳບັນຊີຂາວ<br>- ສະເໜີເງື່ອນໄຂ ແລະ ບຸລິມະສິດຂອງການຄັດເລືອກຄອບຄົວ/ກຸ່ມຄອບຄົວທີ່ຈະໄດ້ຮັບ ການສະໜັບສະໜູນ<br>- ອະທິບາຍກ່ຽວກັບການສະໜອງທຶນ | 2. ລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ<br>- ຄັດເລືອກໃນເບື້ອງຕົ້ນ<br>3. ເກັບຂໍ້ມູນເສດຖະກິດ-ສັງຄົມຂອງຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ | 3. ສືບຕໍ່ເກັບຂໍ້ມູນຂອງຄອບຄົວທີ່ສົນໃຈເຂົ້າຮ່ວມ<br>- ຄັດເລືອກຄັ້ງທີ 2<br>4. ລົງສຳຫຼວດພື້ນທີ່ (ແບ່ງເປັນ 2 ທີມ) | 4. ສືບຕໍ່ລົງສຳຫຼວດພື້ນທີ່ | 4. ສືບຕໍ່ລົງສຳຫຼວດພື້ນທີ່<br>- ຄັດເລືອກຄັ້ງສຸດທ້າຍ<br>5. ສ້າງແຜນກິດຈະກຳ ແລະ ການລົງທຶນຂອງຄອບຄົວ | 6. ຈັດກອງປະຊຸມຮັບຮອງແຜນກິດຈະກຳ ແລະ ການລົງທຶນ<br>7. ປະກອບເອກະສານຂໍຄ່ຽນເງິນ |

**ຕາຕະລາງ 1:** ການລົງຈັດຕັ້ງປະຕິບັດກິດຈະກຳຂອງ PSAP ໃນພາກສະໜາມ

**ຂັ້ນຕອນທີ 3: ການຂໍຄ່າຮູນເງິນເຂົ້າຫາບ້ານ ແລະ ການສະຫຼຸບຂໍ້ມູນ**

**ບາດກ້າວທີ 1:** ການສະເໜີຮັບຮອງແຜນການລົງທຶນຂອງບ້ານ

ໜ່ວຍງານ PSAP ສຳເລັດກິດຈະກຳຢູ່ພາຍໃນບ້ານແລ້ວ ເມື່ອກັບມາຫ້ອງການ ໜ່ວຍງານຕ້ອງໄດ້ນຳເອົາແຜນກິດຈະກຳ ແລະ ງົບປະມານຂອງບ້ານ ພ້ອມດ້ວຍໜັງສືສະເໜີຂໍອອກຂໍ້ຕົກລົງຮັບຮອງແຜນກິດຈະກຳຈາກທ່ານເຈົ້າເມືອງ ໂດຍການເຊັນຮັບຮອງຂອງ ຫົວໜ້າ ຫຼື ຄະນະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ເອກະສານຊ້ອນທ້າຍ ທີ 9) ແລະ ຮ່າງຂໍ້ຕົກລົງຮັບຮອງແຜນກິດຈະກຳ ແລະ ງົບປະມານຂອງບ້ານ ເພື່ອສົ່ງຫາທ່ານເຈົ້າເມືອງ ເພື່ອຂໍອອກຂໍ້ຕົກລົງຮັບຮອງແຜນກິດຈະກຳ ແລະ ງົບປະມານ ກ່ອນທີ່ຈະສົ່ງຕໍ່ໄປຫາໜ່ວຍງານທີ່ປຶກສາ VFAG & PSAP ຂອງໂຄງການ ເພື່ອກວດກາຄືນ ແລະ ສົ່ງຕໍ່ໄປຫາ ໂຄງການ GIZ ຂັ້ນສູນກາງ, ກົມປ່າໄມ້ ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ເພື່ອຮັບຮອງ ແລະ ໂອນເງິນເຂົ້າບ້ານ.

**ແຜນວາດ 5**: ຂະບວນການຂໍຄ່າຮູນເງິນເຂົ້າຫາບ້ານ




**ບາດກ້າວທີ 2:** ການລວບລວມຂໍ້ມູນລົງໃນລະບົບຖານຂໍ້ມູນອອນໄລນ໌ (Cloud Database)

ຄຽງຄູ່ໄປກັບການສະເໜີຂໍຮັບຮອງແຜນການລົງທຶນຂອງບ້ານ ໜ່ວຍງານ PSAP ຕ້ອງໄດ້ສັງລວມຂໍ້ມູນຕ່າງໆຈາກພາກສະໜາມ ເປັນຕົ້ນແມ່ນ ລາຍລະອຽດຂໍ້ມູນຄອບຄົວ (ເອກະສານຄັດຊ້ອນ ທີ 4), ການສຳຫຼວດພື້ນທີ່ (ເອກະສານຄັດຊ້ອນ ທີ 5) ແລະ ແຜນການລົງທຶນ (ເອກະສານຄັດຊ້ອນ ທີ 6) ພ້ອມທັງມີການສະຫຼຸບສະສາງວຽກ

ງານ ແລະ ເອກະສານຕ່າງໆ ລົງໃນລະບົບຖານຂໍ້ມູນ ເຊິ່ງຕ້ອງໃຫ້ສຳເລັດພາຍໃນ 10 ວັນທາງລັດຖະການ ພາຍຫຼັງສຳເລັດການຈັດຕັ້ງປະຕິບັດກິດຈະກຳພາກສະໜາມ.

# ພາກທີ IV:
# ການເສີມສ້າງຄວາມສາມາດທາງເຕັກນິກ

**ຂັ້ນຕອນທີ 1: ການຝຶກອົບຮົມທາງດ້ານເຕັກນິກໃຫ້ກັບໜ່ວຍງານ PSAP**

ຄຽງຄູ່ກັບການລົງຈັດຕັ້ງປະຕິບັດກິດຈະກຳຢູ່ໃນບ້ານເປົ້າໝາຍ ໜ່ວຍງານເມືອງຈະຕ້ອງໄດ້ມີການສັງລວມຂໍ້ມູນ ແລະ ກິດຈະກຳທີ່ຊາວບ້ານເລືອກ ເພື່ອກະກຽມຄູ່ມື ແລະ ການເຝິກອົບຮົມຮ່ວມກັບໜ່ວຍງານ PSAP ແຂວງ ແລະ ທີ່ປຶກສາຈາກ GIZ, ເຊິ່ງຢ່າງໜ້ອຍແຕ່ລະເມືອງຄວນຈະສຳເລັດການຈັດຕັ້ງປະຕິບັດກິດຈະກຳ PSAP ຢູ່ບ້ານແລ້ວຈຳນວນໜຶ່ງ ແລະ ສັງລວມຄວາມຕ້ອງການທາງດ້ານເຕັກນິກທີ່ມີຄວາມຈຳເປັນໃນການຈັດຕັ້ງປະຕິບັດກິດຈະກຳ PSAP, ການເຝິກອົບຮົມດັ່ງກ່າວເປັນການນຳສະເໜີ ແລະ ແລກປ່ຽນຄວາມຮູ້ທາງດ້ານເຕັກນິກ ເພື່ອກຽມຄວາມພ້ອມໃນການຖ່າຍທອດເຕັກນິກໃຫ້ແກ່ຊາວກະສິກອນ ລາຍລະອຽດ ດັ່ງລຸ່ມນີ້:

**ບາດກ້າວ ແລະ ວິທີການຝຶກອົບຮົມທາງດ້ານເທັກນິກໃຫ້ກັບໜ່ວຍງານ PSAP**

| ລຳດັບ | ບາດກ້າວ | ວິທີການ |
|---|---|---|
| 1 | ວິເຄາະ ແລະ ສັງລວມຂໍ້ມູນ | - ສັງລວມຂໍ້ມູນກິດຈະກຳບັນຊີຂາວທີ່ສອດຄ່ອງກັບທ່າແຮງຂອງທ້ອງຖິ່ນ.<br>- ປະເມີນທ່າແຮງທີ່ບົ່ມຊ້ອນ ເຊັ່ນ: ຄວາມຊຳນານສະເພາະດ້ານຂອງໜ່ວຍງານ PSAP, ເອກະສານສິ່ງເສີມເຕັກນິກຈາກພາກສ່ວນຕ່າງໆ, ຂໍ້ມູນການປ່ຽນແປງດ້ານສະພາບດິນຟ້າອາກາດ ແລະ ການຕະຫຼາດ. |
| 2 | ປຶກສາຫາລື ແລະ ວາງແຜນການຈັດຝຶກອົບຮົມ | - ປະສານງານ-ຈັດຫາຄູເຝິກ ຫຼື ຜູ້ຊຳນານການຈາກ ກະສິກຳ ແລະ ປ່າໄມ້ເມືອງ, ແຂວງ ແລະ ໂຄງການ GIZ, ໃນກໍລະນີທີ່ໜ່ວຍງານບໍ່ມີຄວາມຊຳນານໃນຫົວຂໍ້ໃດໜຶ່ງ ແມ່ນສາມາດຊອກຫາຊ່ຽນຊານຈາກທາງນອກ ເພື່ອຖ່າຍທອດຄວາມຮູ້ໃຫ້ກັບໜ່ວຍງານ.<br>- ກະກຽມເອກະສານ, ສື່ສິ່ງພິມ ແລະ ເຄື່ອງມືຕ່າງໆທີ່ຈະນຳໃຊ້ໃນການເຝິກອົບຮົມ.<br>- ຈັດແບ່ງຄວາມຮັບຜິດຊອບ ແລະ ໜ້າທີ່ ທີ່ສອດຄ່ອງກັບຄວາມສາມາດຂອງແຕ່ລະບຸກຄົນ. |
| 3 | ດຳເນີນການຝຶກອົບຮົມຫົວຂໍ້ຕ່າງໆ | - ນຳສະເໜີເອກະສານສິ່ງເສີມທາງດ້ານເຕັກນິກ ເຊັ່ນ: ປຶ້ມນຳສະເໜີເຕັກນິກສະເພາະດ້ານ, ການນຳໃຊ້ນະວັດຕະກຳໃໝ່ເຂົ້າໃນການຜະລິດ, ແຜ່ນພາບ ແລະ ວິດີໂອເຕັກນິກການຜະລິດສະເພາະດ້ານ.<br>- ແລກປ່ຽນສົນທະນາຢ່າງສ້າງສັນ ແລະ ມີສ່ວນຮ່ວມ.<br>- ຄວນມີການປະຕິບັດຕົວຈິງຄຽງຄູ່ກັບພາກທິດສະດີ (ບາງກິດຈະກຳທີ່ເຫັນວ່າມີຄວາມເໝາະສົມ).<br>- ກຳນົດທິດທາງ, ວິທີການ ແລະ ເຄື່ອງມື ໃນການເຝິກອົບຮົມໃຫ້ກັບຊາວກະສິກອນໃນບ້ານເປົ້າໝາຍ. |

ພາຍຫຼັງທີ່ສຳເລັດການເຝິກອົບຮົມແລ້ວ ໜ່ວຍງານຈະຕ້ອງໄດ້ມີການສະຫຼຸບ ແລະ ປະເມີນຜົນການເຝິກອົບຮົມ, ເຊິ່ງສຸດທ້າຍແລ້ວ ໜ່ວຍງານຈະໄດ້ຮັບຄວາມຮູ້, ຄວາມເຂົ້າໃຈທາງດ້ານເຕັກນິກ ແລະ ສາມາດຖ່າຍທອດສູ່ຊາວກະສິກອນໄດ້.

ເປົ້າໝາຍສຳຄັນຂອງການສົ່ງກະສິກຳແບບຍືນຍົງບໍ່ທຳລາຍປ່າໄມ້ ແມ່ນເພື່ອໃຫ້ແບບແຜນການຜະລິດຂອງຊາວກະສິກອນໄດ້ຮັບການພັດທະນາປັບປຸງໄປສູ່ທິດທາງການຜະລິດທີ່ມີປະສິດທິຜົນ ຫຼຸດຜ່ອນການທຳລາຍປ່າໄມ້ຈາກການຜະລິດກະສິກຳຂອງຊາວກະສິກອນ ໂດຍການນຳໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຄຸ້ມຄ່າ ແລະ ເຕັກນິກການຜະລິດກະສິກຳແບບຍືນຍົງ ເຊິ່ງມີຄວາມຈຳເປັນໄດ້ຫັນປ່ຽນທັດສະນະ ແລະ ແບບແຜນການຜະລິດທີ່ມີລັກສະນະຄອງເດີມ ເຮັດຕາມຄວາມຊິນເຄີຍຕາມບູຮານນະການ ໃຫ້ກາຍເປັນການນຳໃຊ້ແນວພັນ, ເຕັກນິກ ແລະ ເຄື່ອງມື ໃໝ່ໆໃຫ້ແທດເໝາະກັບສະພາບພື້ນທີ່ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ.

**ຂັ້ນຕອນທີ 2: ຝຶກອົບຮົມເຕັກນິກໃຫ້ກັບຊາວກະສິກອນ ກ່ອນການດຳເນີນການຜະລິດ**

ຫຼັງຈາກໜ່ວຍງານສົ່ງເສີມໄດ້ຮັບການຝຶກອົບຮົມທາງດ້ານເຕັກນິກແລ້ວ, ໜ່ວຍງານຈະໄດ້ດຳເນີນການເຝິກອົບຮົມໃນບ້ານເປົ້າໝາຍ ຫຼື ພື້ນທີ່ທຳການຜະລິດ, ໜ່ວຍງານສົ່ງເສີມສາມາດປຸກລະດົມການຮຽນຮູ້, ແລກປ່ຽນສົນທະນາປະສົບການຕົວຈິງຈາກຊາວກະສິກອນ ແລະ ສ້າງຄວາມເຂົ້າໃຈໃນການຜະລິດໃຫ້ໄປໃນທິດທາງຂອງຄວາມຍືນຍົງ, ໃນທີ່ນີ້ ຊາວກະສິກອນສາມາດສົນທະນາໄດ້ຢ່າງແທ້ຈິງ ສາມາດເຫັນໄດ້ບັນຫາທີ່ກຳລັງພົບພໍ້ ແລະ ເຫັນເຖິງວິທີການແກ້ໄຂບັນຫາ, ຊາວກະສິກອນຈະມີຄວາມໝັ້ນໃຈຫຼາຍຂຶ້ນ ເພາະຢູ່ໃນສະພາບແວດລ້ອມພື້ນທີ່ຂອງຕົນເອງ ແລະ ໄດ້ແລກປ່ຽນບົດຮຽນນຳສະມາຊິກພາຍໃນບ້ານດຽວກັນ.

ການຝຶກອົບຮົມໃຫ້ກັບຊາວກະສິກອນທີ່ໄດ້ຮັບການຄັດເລືອກ ແມ່ນມີຂັ້ນຕອນ ດັ່ງລຸ່ມນີ້:



**ບາດກ້າວທີ 1:** ກະກຽມວາງແຜນ, ແບ່ງໜ້າທີ່ຮັບຜິດຊອບ ແລະ ອຸປະກອນເຝິກອົບຮົມ.

ໜ່ວຍງານສົ່ງເສີມຕ້ອງໄດ້ມີການກະກຽມເຄື່ອງມື, ອຸປະກອນຕ່າງໆທີ່ຈະຮັບໃຊ້ໃນການເຝິກອົບຮົມ ລວມທັງການພິມເອກະສານຄູ່ມືຕ່າງໆອອກເພື່ອແຈກຢາຍໃຫ້ກັບຊາວກະສິກອນ, ມີການແບ່ງໜ້າທີ່ຮັບຜິດຊອບຮ່ວມກັນໃນການເຝິກອົບຮົມ, ໃນການບັນຍາຍຄວນຈະມີ 2-3 ຄົນຊ່ວຍກັນ ເພື່ອດຶງດູດຄວາມສົນໃຈໃຫ້ກັບຊາວກະສິກອນ, ໃນການເຮັດວຽກໜ່ວຍງານຄວນນໍາໃຊ້ລາຍການໜ້າວຽກທີ່ຄວນເຮັດ (To do list) ແລະ ລາຍການອຸປະກອນທີ່ຄວນມີ (Check list) ເຂົ້າຊ່ວຍໃນການແບ່ງວຽກ ແລະ ການກະກຽມ.

**ບາດກ້າວທີ 2:** ປະສານງານຫາບ້ານ ແລະ ຊາວກະສິກອນເພື່ອກະກຽມສະຖານທີ ແລະ ວັດຖຸດິບທີມີຢູ່ພາຍໃນບ້ານ.

ໜ່ວຍງານສົ່ງເສີມ ຕ້ອງເຮັດແຈ້ງການນັດໝາຍກຳນົດວັນ, ເວລາໃນການເຝິກອົບຮົມຫາບ້ານເປົ້າໝາຍລ່ວງໜ້າຢ່າງໜ້ອຍ 1 ອາທິດກ່ອນການລົງເຮັດວຽກ, ເພື່ອໃຫ້ຊາວບ້ານໄດ້ກະກຽມຄວາມພ້ອມຂອງຕົນເອງ, ສະຖານທີ່ ແລະ ອຸປະກອນທີ່ຈະນຳໃຊ້ໃນການເຝິກອົບຮົມ.

ສຳລັບການເຝິກອົບຮົມແມ່ນຈະເນັ້ນໃສ່ຄອບຄົວທີ່ໄດ້ຮັບທຶນເປັນຫຼັກ ຫຼັງຈາກນັ້ນແມ່ນເປີດກວ້າງໃຫ້ກັບຊາວກະສິກອນຢູ່ພາຍໃນບ້ານທີ່ສົນໃຈ ຖ້າຫາກວ່າຍັງມີພື້ນທີ່ຫວ່າງແມ່ນສາມາດເຊີນ ຫຼື ໃຫ້ຊາວກະສິກອນໃນບ້ານໃກ້ຄຽງທີ່ສົນໃຈເຂົ້າມາຮ່ວມເຝິກອົບຮົມນຳໄດ້, ການເຝິກອົບຮົມຈະໃຊ້ເວລາປະມານ 2-4 ວັນ/ບ້ານ ລວມທັງພາກທິດສະດີ ແລະ ການລົງປະຕິບັດຕົວຈິງ ຫຼື ອາດຈະຫຼາຍວັນກວ່ານັ້ນ ຂຶ້ນກັບສະພາບຄວາມເປັນຈິງໃນການເດີນທາງ ແລະ ຫົວຂໍ້ທີ່ຈະເຝິກອົບຮົມ, ຈຳນວນຜູ້ເຂົ້າຮ່ວມເຝິກອົບຮົມບໍ່ຄວນເກີນ 50 ຄົນ ເພື່ອສະດວກໃນການເຝິກອົບຮົມ ແລະ ຮັບປະກັນຄຸນະພາບໃນການຖ່າຍທອດຄວາມຮູ້.

**ບາດກ້າວທີ 3:** ດຳເນີນການຝຶກອົບຮົມພາກທິດສະດີ ແລະ ການປະຕິບັດຕົວຈິງ

ໜ່ວຍງານສົ່ງເສີມ ຕ້ອງໄດ້ມີການແຈກຢາຍຄູ່ມືຕ່າງໆໃນການເຝິກອົບຮົມໃຫ້ກັບຊາວບ້ານ ໂດຍສະເພາະແມ່ນຄອບຄົວທີ່ໄດ້ຮັບທຶນ, ການເຝິກອົບຮົມແມ່ນຈະເນັ້ນໃສ່ຄູ່ມືຈາກທາງໂຄງການເປັນຫຼັກ, ນອກນັ້ນ ອາດຈະມີການນຳໃຊ້ຮູບພາບ, ວິດີໂອມາປະກອບໃນການນຳສະເໜີ ແລະ ໃຫ້ມີການແລກປ່ຽນປະກອບຄຳຄິດເຫັນຈາກປະສົບການຕົວຈິງຂອງຊາວກະສິກອນ ເພື່ອໃຫ້ແທດເໝາະກັບແຕ່ລະທ້ອງຖິ່ນ.

ຄຽງຄູ່ກັບການຮຽນທິດສະດີ ໜ່ວຍງານຈະຕ້ອງໄດ້ມີການນຳພາຊາວກະສິກອນລົງມືປະຕິບັດຕົວຈິງ ເພື່ອໃຫ້ເກີດຄວາມເຂົ້າໃຈຫຼາຍຂຶ້ນ ເປັນຕົ້ນແມ່ນວິທີການຂຸດຂຸມປູກຕົ້ນໄມ້, ການເຮັດນ້ຳໝັກຊີວະພາບ, ຝຸ່ນໝັກ-ຝຸ່ນບົ່ມຕ່າງໆ ລວມທັງການບົວລະບັດຮັກສາ ຫຼື ສາທິດການຕັດແຕ່ງກິ່ງຕົ້ນໄມ້ຕ່າງໆ, ຊາວກະສິກອນຈະມີຄວາມເຂົ້າໃຈ ແລະ ຈົດຈຳໄດ້ດີຂຶ້ນ ຖ້າຫາກວ່າເຂົາເຈົ້າໄດ້ເຫັນສິ່ງປະຈັກຕາ ແລະ ປະຕິບັດຕົວຈິງ, ເຊິ່ງໃນການເຝິກອົບຮົມແຕ່ລະຄັ້ງໜ່ວຍງານຕ້ອງໄດ້ມີການກະກຽມອຸປະກອນສາທິດຕ່າງໆໃຫ້ແທດເໝາະກັບຫົວຂໍ້ທີ່ຈະນຳໄປເຝິກອົບຮົມ.

**ບາດກ້າວທີ 4:** ຄັດເລືອກຕົວແທນຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກຳ ເພື່ອສະດວກໃນການປະສານງານ ແລະ ຕິດຕາມກິດຈະກຳ

ພາຍຫຼັງທີ່ໄດ້ມີການເຝິກອົບຮົມແລ້ວ ໜ່ວຍງານຈະຕ້ອງໄດ້ຮ່ວມກັບຊາວກະສິກອນທຸກຄົນ ຄັດເລືອກຕົວແທນຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກຳຂຶ້ນມາ 1-2 ທ່ານ, ເພື່ອເປັນຜູ້ຊ່ວຍໃນການປະສານງານລະຫວ່າງບ້ານກັບໜ່ວຍງານສົ່ງເສີມຂອງເມືອງ ພ້ອມທັງເປັນຜູ້ຊ່ວຍສະມາຊິກທຸກຄົນບໍ່ວ່າຈະເປັນການສົ່ງຕໍ່ຂໍ້ມູນຂ່າວສານ, ການລວບລວມບັນຫາຕ່າງໆໃນການຜະລິດ ແລະ ການຄຸ້ມຄອງສະມາຊິກພາຍໃນບ້ານ.

ຕົວແທນຂອງຄອບຄົວຜູ້ເຂົ້າຮ່ວມກິດຈະກໍາ ຄວນຈະເປັນຄົນທີ່ມີຫົວຄິດປະດິດສ້າງ, ອ່ານອອກຂຽນໄດ້ ເປັນຄົນກ້າເວົ້າກ້າສະແດງອອກ ແລະ ເປັນຄົນເສຍສະຫຼະ, ມີນໍ້າໃຈຮັບຜິດຊອບຕໍ່ກັບວຽກງານສ່ວນລວມ.

**ບາດກ້າວທີ 5:** ສ້າງແຜນການຕິດຕາມ ແລະ ຊຸກຍູ້ການຜະລິດ

ພາຍຫຼັງທີ່ສໍາເລັດການເຝິກອົບຮົມແລ້ວ ໜ່ວຍງານສົ່ງເສີມ ແລະ ຊາວກະສິກອນຜູ້ເຂົ້າຮ່ວມກິດຈະກໍາ ຕ້ອງດໍາເນີນການວາງແຜນຮ່ວມກັນ ເປັນຕົ້ນແມ່ນ: ການສະໜອງປັດໃຈການຜະລິດ, ແຜນທໍາການຜະລິດ ເພື່ອໃຫ້ທ່ວງທັນກັບລະດູການ ແລະ ການລົງຊຸກຍູ້ທາງດ້ານເຕັກນິກໃນແຕ່ລະໄລຍະ.

**ບາດກ້າວທີ 6:** ປະເມີນຄວາມຮູ້ຂອງຊາວກະສິກອນຫຼັງຈາກສໍາເລັດການຝຶກອົບຮົມ

ເມື່ອສໍາເລັດການເຝິກອົບຮົມໃນພາກທິດສະດີ ແລະ ການລົງປະຕິບັດຕົວຈິງແລ້ວ ໜ່ວຍງານຈະຕ້ອງໄດ້ມີການຊຸ່ມເອົາ 50% ຈາກໃບລົງທະບຽນເຂົ້າຮ່ວມການເຝິກອົບຮົມຂອງຊາວກະສິກອນ ເພື່ອປະເມີນຄວາມຮັບຮູ້ຂອງຊາວກະສິກອນພາຍຫຼັງທີ່ໄດ້ຮັບການເຝິກອົບຮົມວ່າ ເຂົາເຈົ້າໄດ້ມີຄວາມຮູ້, ຄວາມເຂົ້າໃຈເພີ່ມຂຶ້ນບໍ່, ເຊິ່ງໃນຈຸດນີ້ ໜ່ວຍງານຈະຕ້ອງໄດ້ພະຍາຍາມໃຫ້ຊາວກະສິກອນຂຽນຄວາມເປັນຈິງອອກມາ, ຫຼີກຫຼ່ຽງການຊີ້ນໍາຄໍາຕອບ ຫຼື ການບັງຄັບໃນການຕອບຄໍາຖາມ ເພາະການປະເມີນນີ້ຈະຊ່ວຍໃຫ້ໜ່ວຍງານເຮົາຮັບຮູ້ຂໍ້ມູນຄວາມເປັນຈິງ ເພື່ອກ້າວໄປສູ່ການປັບປຸງຮູບແບບ, ວິທີການ ແລະ ເຄື່ອງມືການເຝິກອົບຮົມໃນອານາຄົດ.

**ບາດກ້າວທີ 7:** ໜ່ວຍງານສົ່ງເສີມລາຍງານ ແລະ ສັງລວມຂໍ້ມູນເຂົ້າໃນລະບົບ

ໜ່ວຍງານສົ່ງເສີມຕ້ອງໄດ້ມີການສັງລວມຂໍ້ມູນ ຜົນໄດ້ຮັບຈາກການລົງຈັດຕັ້ງປະຕິບັດກິດຈະກໍາພາຍໃນບ້ານ ເພື່ອມາເຮັດເປັນບົດລາຍງານ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງເພື່ອເອົາເຂົ້າໃນລະບົບຖານຂໍ້ມູນອອນໄລນ໌ຂອງໂຄງການ (Cloud database) ໃຫ້ສໍາເລັດພາຍໃນ 10 ວັນທາງລັດຖະການ.

ຂັ້ນຕອນນີ້ ຊາວກະສິກອນໄດ້ຮຽນຮູ້ເຕັກນິກ, ຮຽນຮູ້ວິທີການ, ເຄື່ອງມື ແລະ ແນວພັນໃໝ່ໆ ແລະ ສາມາດຜັນຂະຫຍາຍບົດຮຽນໄປສູ່ການຜະລິດກະສິກໍາຕົວຈິງໃນພື້ນທີ່ຂອງຕົນເອງ.

# ພາກທີ V:
# ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດກິດຈະກຳ PSAP

**ຂັ້ນຕອນທີ 1: ການຈັດສົ່ງປັດໃຈການຜະລິດ**

ໃນຂັ້ນຕອນນີ້ ພາຍຫຼັງທີ່ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ໂອນເງິນເຂົ້າບັນຊີຂອງບ້ານແລ້ວ ໜ່ວຍງານ PSAP ຈະໄດ້ມີການດຳເນີນຂັ້ນຕອນການຈັດຊື້ຈັດຈ້າງ ແລະ ຈັດສົ່ງປັດໃຈການຜະລິດເຂົ້າໃຫ້ບ້ານ ໂດຍມີບາດກ້າວດັ່ງນີ້:

| |
|---|
| ບາດກ້າວທີ 1: ການຊອກຫາຮ້ານຄ້າທີ່ຈະສະໜອງປັດໃຈການຜະລິດ |
| ບາດກ້າວທີ 2: ການຄິດໄລ່ງົບປະມານຄືນ |
| ບາດກ້າວທີ 3: ການຈັດສົ່ງປັດໃຈການຜະລິດ |

**ບາດກ້າວທີ 1:** ການຊອກຫາຮ້ານຄ້າທີ່ຈະສະໜອງປັດໃຈການຜະລິດ

ພາຍຫຼັງທີ່ ກປສ ໄດ້ໂອນເງິນເຂົ້າຫາບ້ານແລ້ວ ໜ່ວຍງານ PSAP ແລະ VFAG ເມືອງ ຈະໄດ້ຮ່ວມກັບຊາວກະສິກອນ ແລະ VFAGບ້ານ ຊອກຫາຜູ້ສະໜອງທີ່ສາມາດຈັດສົ່ງປັດໃຈການຜະລິດໂດຍຮັບປະກັນທາງດ້ານປະລິມານ ແລະ ຄຸນະພາບໄດ້, ຜູ້ສະໜອງດັ່ງກ່າວນີ້ອາດຈະແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ຢູ່ພາຍໃນບ້ານ, ເມືອງ ຫຼື ຕ່າງເມືອງຕ່າງແຂວງ ເຊິ່ງການຊອກຫາຮ້ານຄ້ານັ້ນຢ່າງໜ້ອຍຕ້ອງມີ 3 ບ່ອນ ເພື່ອສົມທຽບລາຄາ, ຫຼັງຈາກນັ້ນ ຈະໄດ້ມີການຕົກລົງເຫັນດີຮ່ວມກັນ, ຊາວກະສິກອນສາມາດຕັດສິນໃຈວ່າຈະຈັດຊື້ເອງ ຫຼື ໃຫ້ໜ່ວຍງານ PSAP ເມືອງ ຊ່ວຍປະສານງານ ແລະ ອຳນວຍຄວາມສະດວກ, ໃນຂັ້ນຕອນນີ້ຊາວກະສິກອນສາມາດປະຕິເສດຮ້ານຄ້າທີ່ທາງເມືອງແນະນຳໃຫ້ ແລະ ສາມາດຈັດຊື້ໄດ້ດ້ວຍໂຕເອງໂດຍການປະສານງານຮ່ວມກັບໜ່ວຍງານ PSAP ເມືອງ ແລະ VFAG (ທາງໂຄງການຈະບໍ່ມີງົບປະມານໃນການເດີນທາງ ຫຼື ຊອກຫາຜູ້ສະໜອງໃຫ້), ເຊິ່ງຊາວກະສິກອນຈະຕ້ອງຮັບຜິດຊອບຕໍ່ຜົນໄດ້ຮັບທີ່ເກີດຂຶ້ນໃນປັດໃຈການຜະລິດດ້ວຍໂຕຂອງເຂົາເຈົ້າເອງ, ການຈັດຊື້ຕ້ອງເປັນໄປຕາມລະບຽບຂອງ ທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG).

**ບາດກ້າວທີ 2:** ການຄິດໄລ່ງົບປະມານຄືນ

ບາດກ້າວນີ້ຈະມີແບ່ງອອກເປັນ 2 ກໍລະນີ ຄື:

- **ໃນກໍລະນີທີ່ມອບໃຫ້ໜ່ວຍງານເມືອງຊ່ວຍ:** ພາຍຫຼັງໄດ້ມີການຕົກລົງເອກະພາບເລືອກຮ້ານທີ່ຈະສະໜອງປັດໃຈການຜະລິດແລ້ວ ໜ່ວຍງານ PSAP ເມືອງ ຈະໄດ້ມີການຄິດໄລ່ງົບປະມານ ແລະ ແຜນການຈັດຊື້ຄືນ ຮ່ວມກັບໜ່ວຍງານ VFAG ເມືອງ ພ້ອມທັງແຈ້ງຫາຊາວກະສິກອນເພື່ອຮັບຊາບ ແລະ ຕົກລົງເຫັນດີ (ແບບຟອມລັດຊ້ອນທີ 12) ຈາກນັ້ນຈຶ່ງດຳເນີນການສັ່ງຊື້.
- **ໃນກໍລະນີທີ່ຊາວກະສິກອນຈະຈັດຊື້ເອງ:** ພາຍຫຼັງທີ່ຊາວກະສິກອນຜູ້ໄດ້ຮັບທຶນ ຮ່ວມກັບໜ່ວຍງານ VFAG ຂອງບ້ານ ຊອກຫາຮ້ານຄ້າທີ່ຈະສະໜອງປັດໃຈການຜະລິດໄດ້ແລ້ວ ຈະຕ້ອງໄດ້ແຈ້ງລາຍລະອຽດກ່ຽວກັບລາຄາສິນຄ້າຕ່າງໆທີ່ຈະຈັດຊື້ ໃຫ້ກັບໜ່ວຍງານ PSAP ແລະ VFAG ເມືອງ ເພື່ອຮັບຊາບ, ຫຼັງຈາກນັ້ນ ໜ່ວຍງານ PSAP ຈະຊ່ວຍຄິດໄລ່ງົບປະມານ ແລະ ແຜນການຈັດຊື້ຄືນ, ພາຍຫຼັງສຳເລັດ ໜ່ວຍງານ PSAP ປະສານຫາ ໜ່ວຍງານ VFAG ເມືອງ ແຈ້ງຂໍ້ມູນຄວາມຕ້ອງການປັດໃຈການ

ຜະລິດທັງໝົດ (ແບບຟອມຄັດຊ້ອນທີ 11) ພ້ອມໃຫ້ຄຳແນະນຳໃຫ້ກັບຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ແລະ ຊາວກະສິກອນເປົ້າໝາຍ ເພື່ອທຳການສັ່ງຊື້ໃຫ້ຖືກຕາມກົດລະບຽບທຶນ.

**ບາດກ້າວທີ 3:** ການຈັດສົ່ງປັດໃຈການຜະລິດ

- **ໃນກໍລະນີທີ່ເມືອງຊ່ວຍຈັດຊື້:** ໜ່ວຍງານ PSAP ເມືອງ ຕ້ອງໄດ້ແຈ້ງໃຫ້ບ້ານ ແລະ ຊາວກະສິກອນຮັບຮູ້ວັນເວລາທີ່ຈະຈັດສົ່ງ, ກະກຽມການມອບຮັບ, ພ້ອມກັນນັ້ນ ໜ່ວຍງານ VFAG ເມືອງຕ້ອງໄດ້ຊ່ວຍບ້ານປະກອບເອກະສານທາງດ້ານການເງິນ.
- **ໃນກໍລະນີທີ່ຊາວກະສິກອນຈັດຊື້ເອງ:** ຊາວກະສິກອນຕ້ອງໄດ້ແຈ້ງໃຫ້ໜ່ວຍງານ PSAP ແລະ VFAG ເມືອງ ລົງຕິດຕາມ, ກວດກາຄຸນນະພາບ, ມາດຕະຖານເຕັກນິກ, ສິນຄ້າຄົບຕາມລາຍການ ແລະ ຈຳນວນທີ່ສັ່ງຊື້ ຫຼື ບໍ່, ພ້ອມກັນນັ້ນ ໜ່ວຍງານ VFAG ເມືອງຕ້ອງໄດ້ຊ່ວຍບ້ານປະກອບເອກະສານທາງດ້ານການເງິນ.

ພາຍຫຼັງທີ່ມີການສົ່ງມອບປັດໃຈການຜະລິດຈາກແຕ່ລະຮ້ານຄ້າສຳເລັດແລ້ວ ໜ່ວຍງານ VFAG ເມືອງ ແລະ ບ້ານ ຈະຮ່ວມກັນເຮັດເອກະສານໃນການເບີກຈ່າຍ ແລະ ຊຳລະເງິນໃຫ້ກັບຜູ້ສະໜອງປັດໃຈການຜະລິດ, ໃນເວລາທີ່ຈັດສົ່ງປັດໃຈການຜະລິດນັ້ນ ຕ້ອງມີໜ່ວຍງານ PSAP ແລະ VFAG ເມືອງເຂົ້າຮ່ວມ (ຈຳນວນຜູ້ເຂົ້າຮ່ວມແມ່ນອີງຕາມຄວາມເໝາະສົມຂອງໜ້າວຽກ) ເພື່ອຊ່ວຍຈັດແຈງປັດໃຈການຜະລິດ ແລະ ເຮັດເອກະສານທາງດ້ານການເງິນ, ພ້ອມດຽວກັນນັ້ນ ໜ່ວຍງານ PSAP ຮ່ວມກັບຜູ້ສະໜອງປັດໃຈ ໃຫ້ຄຳແນະນຳທາງດ້ານເຕັກນິກກ່ຽວກັບປັດໃຈການຜະລິດ, ການນຳໃຊ້, ການບຳລຸງຮັກສາ ແລະ ອື່ນໆທີ່ກ່ຽວຂ້ອງ ພ້ອມທັງມີການສາທິດໃນບາງກິດຈະກຳທີ່ສາມາດເຮັດໄດ້.

### ຂັ້ນຕອນທີ 2: ການຊຸກຍູ້ກິດຈະກຳໃນລະດູການຜະລິດ

ພາຍຫຼັງທີ່ໄດ້ມີການຈັດສົ່ງປັດໃຈການຜະລິດໃຫ້ຊາວກະສິກອນເປົ້າໝາຍແລ້ວ ໜ່ວຍງານຈະໄດ້ລົງຊຸກຍູ້, ໃຫ້ຄຳແນະນຳດ້ານເຕັກນິກການຜະລິດໃນພື້ນທີ່ຂອງຊາວກະສິກອນ ໂດຍມີການກວດກາ, ວັດແທກການປະຕິບັດເຕັກນິກ ພ້ອມໃຫ້ຄຳແນະນຳກ່ຽວກັບ ການກະກຽມພື້ນທີ່, ການປູກ (ໄລຍະ ແລະ ຂະໜາດ), ການໃສ່ຝຸ່ນ, ການບົວລະບັດຮັກສາ, ການປ້ອງກັນສັດຕູພືດ ແລະ ບັນຫາອື່ນໆທີ່ຊາວກະສິກອນຕ້ອງການໃຫ້ຊຸກຍູ້ຊ່ວຍເຫຼືອ.

ໜ່ວຍງານ PSAP ຈະໄດ້ຈັບຈຸດພິກັດພື້ນທີ່ທຳການຜະລິດ ແລະ ຖ່າຍຮູບຄວາມຄືບໜ້າຂອງແຕ່ລະກິດຈະກຳ (ທຸກຄອບຄົວເປົ້າໝາຍ), ຖ້າຫາກວ່າ ຊາວກະສິກອນມີການປ່ຽນພື້ນທີ່ທຳການຜະລິດ ຈະຕ້ອງໄດ້ໄປຈັບຈຸດທີ່ຕັ້ງ ແລະ ວັດແທກຂອບເຂດພື້ນທີ່ທຳການຜະລິດຕົວຈິງຄືນໃໝ່ ເພື່ອເປັນຂໍ້ມູນສຸດທ້າຍໃນການຈັດຕັ້ງປະຕິບັດກິດຈະກຳ.

ໃນເວລາລົງຕິດຕາມກິດຈະກຳ ໜ່ວຍງານ PSAP ເມືອງ ອາດຈະແບ່ງເປັນ 2 ທີມເພື່ອໃຫ້ແທດເໝາະກັບເວລາ ແລະ ງົບປະມານ ພະຍາຍາມສຳຫຼວດໃຫ້ໄດ້ຄົບທຸກຄົວເຮືອນໃນຄັ້ງນີ້ ເຊິ່ງມີບາດກ້າວໃນການປະຕິບັດດັ່ງນີ້:

- ຈັດປະຊຸມຮ່ວມກັບຊາວກະສິກອນເປົ້າໝາຍ ແລະ ທົບທວນມາດຖານດ້ານເຕັກນິກ
- ຈັດແບ່ງກຸ່ມເພື່ອລົງຊຸກເຕັກນິກໃນພື້ນທີ່ຂອງແຕ່ລະຄອບຄົວ
- ສະຫຼຸບ, ທົບທວນຜົນການຊຸກຍູ້ເຕັກນິກ ແລະ ກຳນົດແຜນໃນຕໍ່ໜ້າ

**ຂັ້ນຕອນທີ 3: ການຊຸກຍູ້ກິດຈະກໍາໃນລະດູການເກັບກ່ຽວ**

ການຜະລິດຂອງຊາວກະສິກອນໃນແຕ່ລະພື້ນທີ່ ແລະ ໃນແຕ່ລະບ້ານ ຈະມີຄວາມແຕກຕ່າງກັນໄປຕາມກິດຈະກໍາທີ່ເລືອກ ໃນບາງຄັ້ງລະດູການເກັບກ່ຽວອາດຈະບໍ່ພ້ອມກັນ, ພືດໄລຍະສັ້ນເຊັ່ນ: ພືດຜັກ, ພືດລົ້ມລຸກ, ສາລີ, ໝາກເດືອຍ, ເຂົ້າ ອາດຈະໄດ້ມີການເກັບກ່ຽວກ່ອນໄປຕາມລໍາດັບ ແລະ ກາເຟ, ຊາ, ໄມ້ໃຫ້ໝາກ, ຢາງພາລາ ແລະ ອື່ນໆ ອາດຈະໄດ້ໃຊ້ໄລຍະເວລາດົນ ແລະ ບໍ່ສາມາດເກັບກໍາຂໍ້ມູນໄດ້, ໃນຂັ້ນຕອນນີ້ ໜ່ວຍງານຈະຕ້ອງໄດ້ໃຫ້ຄໍາແນະນໍາທາງເຕັກນິກການເກັບກ່ຽວ ແລະ ການເກັບຮັກສາຜົນຜະລິດ ພ້ອມທັງເກັບກໍາຂໍ້ມູນຄວາມຄືບໜ້າສະພາບການທໍາການຜະລິດ, ບັນຫາ ແລະ ວິທີການແກ້ໄຂຕ່າງໆ ລວມທັງຜົນຜະລິດຂອງຊາວກະສິກອນ ເພື່ອປະເມີນສະມັດຕະພາບການຜະລິດ, ດັ່ງນັ້ນ ການຊຸກຍູ້ໃນໄລຍະນີ້ຈະແບ່ງອອກເປັນ 2 ຮູບແບບຄື:

- **ກິດຈະກໍາສໍາລັບພືດໄລຍະສັ້ນ:** ພືດທີ່ສາມາດເກັບກ່ຽວໄດ້ພາຍໃນໜຶ່ງປີ ຫຼື ລະດູການຜະລິດໜຶ່ງ ໂດຍໃນເວລາທີ່ລົງໄປ ພືດບາງຊະນິດອາດຈະສໍາເລັດການເກັບກ່ຽວໄປແລ້ວ ແລະ ພືດບາງຊະນິດອາດຈະຍັງຢູ່ໃນຂັ້ນຕອນການເກັບກ່ຽວ, ໜ່ວຍງານສາມາດໃຫ້ຄໍາແນະນໍາດ້ານເຕັກນິກອີງໃສ່ຊ່ວງເວລາທີ່ເໝາະສົມ ແລະ ສາມາດເກັບກໍາຂໍ້ມູນໄດ້ເລີຍ ໂດຍການສໍາພາດຂໍ້ມູນດິບຈາກຊາວກະສິກອນ (ຂໍ້ມູນມີ 1).
- **ກິດຈະກໍາສໍາລັບພືດໄລຍະຍາວ:** ບາງກິດຈະກໍາທີ່ໃຊ້ໄລຍະເວລາດົນ ພວກເຮົາຈະມີການແນະນໍາເຕັກນິກ ແລະ ເກັບກໍາຂໍມູນສະເພາະແຕ່ໜ້າວຽກທີ່ສໍາຄັນ, ບັນຫາຕ່າງໆ ແລະ ວິທີການແກ້ໄຂ ສ່ວນຜົນຜະລິດຈະບໍ່ສາມາດເກັບກໍາໄດ້, ແຕ່ຖ້າຫາກ ມີການປູກປະສົມປະສານກັບພືດລົ້ມລຸກຢູ່ໃສ່ພື້ນທີ່ດຽວກັນ ແລະ ໄດ້ຮັບການສະໜັບສະໜູນຈາກໂຄງການ ແມ່ນຈະເກັບກໍາຂໍ້ມູນສະເພາະແຕ່ພືດລົ້ມລຸກພ້ອມຂຽນອະທິບາຍໃນຫ້ອງໝາຍເຫດເພີ່ມເຕີມ.

ການລົງຕິດຕາມໃນລະດູການເກັບກ່ຽວ ກໍ່ເຊັ່ນດຽວກັບລະດູການຜະລິດເຊິ່ງສາມາດແບ່ງເປັນແຕ່ລະຊ່ວງໄລຍະເວລາ ໂດຍອີງຕາມພືດປະເພດຂອງພືດທີ່ຊາວກະສິກອນປູກ ຫຼື ສາມາດຈັດສັນ ແລະ ລົງໃຫ້ສໍາເລັດໃນຄັ້ງດຽວໄດ້ ຂຶ້ນກັບແຕ່ລະກໍລະນີ ແລະ ຄວາມເໝາະສົມໃນການທໍາການຜະລິດຂອງແຕ່ລະບ້ານ. ສຸດທ້າຍ ໃນຂັ້ນຕອນນີ້ ໜ່ວຍງານຈະໄດ້ມີການເກັບກໍາຂໍ້ມູນກ່ຽວກັບແຜນການ ແລະ ທ່າແຮງການຜະລິດໃນລະດູຖັດໄປຂອງຊາວກະສິກອນ.

**ຂັ້ນຕອນທີ 4: ການຊຸກຍູ້ເຕັກນິກການຜະລິດໃນລະດູການໃໝ່**

ການລົງຊຸກຍູ້ເຕັກນິກການຜະລິດໃນໄລຍະນີ້ແມ່ນ ເພື່ອຕໍ່ເນື່ອງຈາກລະດູການເກັບກ່ຽວ, ສໍາລັບບາງຄອບຄົວທີ່ຍັງບໍ່ທັນສໍາເລັດກິດຈະກໍາ ແມ່ນສາມາດສືບຕໍ່ໃຫ້ຄໍາແນະນໍາດ້ານເຕັກນິກ ແລະ ເກັບກໍາຂໍ້ມູນໃນໄລຍະນີ້ໄດ້ພ້ອມທັງ ຊ່ວຍວາງແຜນ ແລະ ເກັບກໍາຂໍ້ມູນແຜນການທໍາການຜະລິດໃນລະດູການຕໍ່ໄປ ເພື່ອປະເມີນຜົນໄດ້ຮັບ ແລະ ການຂະຫຍາຍກິດຈະກໍາໃໝ່ ພາຍຫຼັງໄດ້ຮັບທຶນສະໜັບສະໜູນຈາກໂຄງການ.

**ໝາຍເຫດ:** ສືບເນື່ອງຈາກ ໂຄງການ I-GFLL (ຫຼື ໂຄງການໄລຍະ 1), ໜ່ວຍງານ PSAP ຕ້ອງໄດ້ສືບຕໍ່ຊຸກຍູ້ເຕັກນິກການຜະລິດໃນ 170 ບ້ານເປົ້າໝາຍ ໃນ 3ແຂວງ ໄຊຍະບູລີ, ຫຼວງພະບາງ ແລະ ຫົວພັນ, ຄຽງຄູ່ກັບການສົ່ງເສີມກິດຈະກໍາໃນໂຄງການໄລຍະທີ 2 ຫຼື SU-I-GFLM.

**ຂັ້ນຕອນທີ 5: ການຈັດທັດສະນະສຶກສາ ຊາວກະສິກອນ ສູ່ ຊາວກະສິກອນ**

ການຈັດທັດສະນະສຶກສາ “ຊາວກະສິກອນ ສູ່ ຊາວກະສິກອນ“ ເປັນວິທີການໜຶ່ງໃນຂະບວນການຖ່າຍທອດເຕັກນິກສູ່ຮາກຖານການຜະລິດກະສິກໍາຍືນຍົງ ເປັນຮູບແບບສະເພາະຂອງການແລກປ່ຽນຮຽນຮູ້ປະສົບການຈາກພາກປະຕິບັດຕົວຈິງຂອງຊາວກະສິກອນ ສູ່ ຊາວກະສິກອນດ້ວຍກັນ ຜົນໄດ້ຮັບອີກຢ່າງແມ່ນເຄືອຂ່າຍການ

ສື່ສານແລກປ່ຽນແນວຄວາມຄິດຂອງຊຸມຊົນ ໃຫ້ມີການປະສົມປະສານພູມປັນຍາກັບການພັດທະນາກະສິກຳ ເຕັກນິກໃໝ່ ໄດ້ມີການຫັນປ່ຽນຮູບແບບການຜະລິດກະສິກຳດັ້ງເດີມສູ່ຮູບແບບໃໝ່ໃຫ້ມີຄວາມຍືນຍົງຍິ່ງຂຶ້ນ.

ເປົ້າໝາຍໃນການຄັດເລືອກຜູ້ທັດຊະນາກອນ, ແມ່ນເລັງໃສ່ຊາວກະສິກອນໜຸ່ມສາວໃນຄອບຄົວຜູ້ເຂົ້າຮ່ວມກິດຈະກຳ PSAP ທີ່ອ່ານອອກຂຽນໄດ້ ມີມະນຸດສຳພັນດີ ມີພອນສະຫວັນໃນການຖ່າຍທອດບົດຮຽນ ອາດເປັນຄອບຄົວພົ້ນເດັ່ນໃນການຜະລິດກະສິກຳຮູບແບບໃໝ່ໃນແຕ່ລະບ້ານເປົ້າໝາຍ, ນັກທັດຊະນາກອນດັ່ງກ່າວນີ້ຈະໄດ້ທຳໜ້າທີ່ໃນການສົ່ງຕໍ່ບົດຮຽນ ແລະ ຄວາມຮູ້ໃຫ້ຄອບຄົວອື່ນໆໃນຊຸມຊົນຂອງຕົນ.

ການຄັດເລືອກສະຖານທີ່ທັດຊະນະສຶກສາ, ໃນເບື້ອງຕົ້ນແມ່ນເລັງໃສ່ສະຖານທີ່ແບບຢ່າງຂອງການຜະລິດກະສິກຳປູກຝັງແບບປະສົມປະສານ ມີການໃຊ້ເຕັກນິກ, ເຄື່ອງມື ແລະ ແນວພັນໃໝ່ໆ, ຢູ່ໃນຊຸມຊົນໃກ້ຄຽງພາຍໃນເມືອງ ຫລື ຕ່າງເມືອງພາຍໃນແຂວງ ຫາກມີຄວາມຈຳເປັນຈຶ່ງພິຈາລະນາເຖິງສະຖານທີ່ທັດຊະນະຢູ່ຕ່າງແຂວງ.

ວິທີການດຳເນີນງານຈັດທັດຊະນະສຶກສາ, ພາຍໃນແຜນການຈັດຕັ້ງປະຕິບັດໂຄງການປະຈຳແຜນໄຕມາດໄດ້ຈັດສັນງົບປະມານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ແລະ ພະແນກກະສິກຳ ແລະ ປ່າໄມ້, ໜ່ວຍງານ PSAP ເມືອງ ແລະ ໜ່ວຍງານ PSAP ແຂວງ ເປັນເຈົ້າການຮ່ວມກັນໃນການວາງແຜນກິດຈະກຳ ແລະ ງົບປະມານພ້ອມທັງວາລະຂອງການທັດຊະນະສຶກສາ ໂດຍການໃຫ້ຄຳປຶກສາ ແນະນຳຂອງ GIZ, ຈຳນວນນັກທັດຊະນາກອນຄວນຈະເປັນຊາວກະສິກອນເຈັດສິບສ່ວນຮ້ອຍຂອງຈຳນວນນັກທັດຊະນາກອນທັງໝົດ, ໃນລະຫວ່າງການວາງແຜນຕ້ອງໄດ້ຄຳນຶງເຖິງ ລະບຽບການເງິນຂອງໂຄງການ ອາດມີຄວາມຈຳເປັນຕ້ອງໄດ້ປຶກສາກັບພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນ ກປສ,

ລາຍລະອຽດທີ່ຕ້ອງເອົາໃຈໃສ່ມີ:

- ວາລະການເດີນທາງຕ້ອງມີຄວາມຊັດເຈນໃນແຕ່ລະວັນເປັນຕົ້ນແມ່ນ ເວລາ, ສະຖານທີ່ ແລະ ວິທີການ
- ຈັດແບ່ງໜ້າທີ່ ຄວາມຮັບຜິດຊອບຂອງຄະນະຮັບຜິດຊອບໃຫ້ຊັດເຈນ ໂດຍນຳໃຊ້ຕາລາງໜ້າວຽກ (To Do List).
- ກະກຽມເຄື່ອງມື ແລະ ອຸປະກອນທີ່ຈຳເປັນໃຫ້ຄົບຖ້ວນໂດຍນຳໃຊ້ຕາລາງລາຍການອຸປະກອນ (Check List) ເປັນຕົ້ນແມ່ນ ເຄື່ອງສຽງ ອຸປະກອນບັນທຶກ ອາດມີຄວາມຈຳເປັນຕ້ອງໄດ້ຮ່າງແບບສອບຖາມ ໃຫ້ແທດເໝາະກັບແຕ່ລະຫົວຂໍ້ການທັດຊະນະ.
- ໜ່ວຍງານ PSAP ເມືອງ ແລະ ໜ່ວຍງານ PSAP ແຂວງ ຮ່ວມກັບທີ່ປຶກສາຈາກ GIZ ຮ່າງລະບຽບຄຸ້ມຄອງການເດີນທາງຮ່ວມກັນຢ່າງເປັນເອກະພາບ.

ໃນລະຫວ່າງການທັດຊະນະ ຄວາມປອດໄພຂອງການເດີນທາງເປັນສິ່ງສຳຄັນທີ່ສຸດ ປະສິດທິຜົນຂອງການທັດຊະນະມາຈາກອົງປະກອບຫຼັກຂອງການຈັດການທີ່ດີເຊັ່ນ: ຄວາມເປັນໝູ່ຄະນະ ເຄົາລົບວາລະສ່ວນລວມຫຼາຍກ່ວາເຫດຜົນຂອງຕົນ ສ້າງສັນບັນຍາກາດໃຫ້ຄຶກຄື້ນຢູ່ສະເໝີ ຄວນຈົດຈໍ່ຕໍ່ການສົນທະນາແລກປ່ຽນໃນທາງທິດສະດີ ແລະ ການສາທິດຕົວຈິງ, ຈົດບັນທຶກຂໍ້ມູນ ຮູບພາບ-ສຽງ ເກັບກຳສື່ສິ່ງພິມ ແລະ ເບີໂທຂອງທຸກພາກສ່ວນ.

ຂັ້ນຕອນນີ້ ແມ່ນສາມາດຈັດຂຶ້ນໃນທຸກໄລຍະເວລາທີ່ເໝາະສົມຂອງຂະບວນການ PSAP. ຫຼັງຈາກການທັດສະນະສຶກສາ ຊາວກະສິກອນເປົ້າໝາຍ ໄດ້ຮຽນຮູ້, ເຂົ້າໃຈເຖິງເຕັກນິກໃໝ່ໆ, ສາມາດນຳໄປເຜີຍແຜ່, ແລະ ຈັດຕັ້ງປະຕິບັດໄດ້ໃຫ້ເປັນແບບຢ່າງແກ່ຊຸມຊົນຂອງຕົນ.

# ພາກທີ VI:
# ການຈັດສັນງົບປະມານການລົງທຶນ ບ້ວງສົ່ງເສີມ PSAP

ຜ່ານການຖອດຖອນບົດຮຽນຈາກ ໂຄງການໄລຍະທີ 1 ຫຼື I-GFLL ເຫັນວ່າການຈັດສັນງົບປະມານການລົງທຶນສຳລັບບ້ວງສົ່ງເສີມ PSAP ແມ່ນເທົ່າກັນບໍ່ວ່າຈະບ້ານນ້ອຍ ຫຼື ໃຫຍ່, ດັ່ງນັ້ນ ໃນໂຄງການໄລຍະ 2 ຫຼື SU-I-GFLM ນີ້ ມີການປັບປຸງການຈັດສັນງົບປະມານດັ່ງກ່າວຄືນ.

ວິທີການຈັດສັນງົບປະມານເຂົ້າຫາແຕ່ລະບ້ານເປົ້າໝາຍ ແມ່ນການຄາດຄະເນອີງຕາມ ຈຳນວນຄອບຄົວທັງໝົດ ຕໍ່ ບ້ານ (ຂະໜາດຂອງຈຳນວນຄອບຄົວແຕ່ລະບ້ານ) ແລະ ຈຳນວນຄອບຄົວທຸກຍາກ ຕໍ່ ບ້ານ, ທັງສອງຂໍ້ມູນນີ້ເກັບກຳມາຈາກ ໜ່ວຍງານຄຸ້ມຄອງໂຄງການແຕ່ລະເມືອງ.

**ອີງຕາມຈຳນວນຄອບຄົວທັງໝົດ ຕໍ່ ບ້ານ:**

- ບ້ານທີ່ມີຈຳນວນຄອບຄົວທັງໝົດ **ໜ້ອຍກວ່າ 27ຄຄ** ແມ່ນ **ທຸກຄອບຄົວ** ສາມາດຮັບທຶນ PSAP
- ບ້ານທີ່ມີຈຳນວນຄອບຄົວທັງໝົດ **28 ເຖິງ 100 ຄຄ** ແມ່ນ **27 ຄຄ** ສາມາດຮັບທຶນ PSAP
- ບ້ານທີ່ມີຈຳນວນຄອບຄົວທັງໝົດ **101 ເຖິງ 200 ຄຄ** ແມ່ນ **30 ຄຄ** ສາມາດຮັບທຶນ PSAP
- ບ້ານທີ່ມີຈຳນວນຄອບຄົວທັງໝົດ **201 ເຖິງ 300 ຄຄ** ແມ່ນ **35 ຄຄ** ສາມາດຮັບທຶນ PSAP
- ບ້ານທີ່ມີຈຳນວນຄອບຄົວທັງໝົດ **ຫຼາຍກວ່າ 300 ຄຄ** ແມ່ນ **40 ຄຄ** ສາມາດຮັບທຶນ PSAP

**ເມື່ອຄຳນຶງເຖິງອັດຕາສ່ວນຂອງຈຳນວນຄອບຄົວທີ່ທຸກຍາກ ຕໍ່ກັບ ຈຳນວນຄອບຄົວທັງໝົດຂອງບ້ານ ຈະມີການຈັດສັນດັ່ງນີ້:**

- ອັດຕາສ່ວນຂອງຈຳນວນຄອບຄົວທຸກຍາກ ກັບ ຈຳນວນຄອບຄົວທັງໝົດຂອງບ້ານ **ຕໍ່າກວ່າ 25% ແມ່ນຈະບໍ່ມີການເພີ່ມ ຈຳນວນຄອບຄົວ**
- ອັດຕາສ່ວນຂອງຈຳນວນຄອບຄົວທຸກຍາກ ກັບ ຈຳນວນຄອບຄົວທັງໝົດຂອງບ້ານ **ກວມລະຫວ່າງ 25% ຫາ 60% ແມ່ນຈະເພີ່ມອີກ 5 ຄອບຄົວ**
- ອັດຕາສ່ວນຂອງຈຳນວນຄອບຄົວທຸກຍາກ ກັບ ຈຳນວນຄອບຄົວທັງໝົດຂອງບ້ານ **ກວມຫຼາຍກວ່າ 60% ແມ່ນຈະເພີ່ມອີກ 10 ຄອບຄົວ**

**ໝາຍເຫດ:**

- ການສະໜອງທຶນເຂົ້າບ້ານ ແມ່ນອີງໃສ່ການວາງແຜນຕົວຈິງຂອງແຕ່ລະຄອບຄົວທີ່ຢູ່ໃນເງື່ອນໄຂຈະໄດ້ຮັບການສະໜັບສະໜູນ ເຊິ່ງຈະບໍ່ສາມາດວາງແຜນເກີນຈາກຈຳນວນງົບປະມານທີ່ຄາດຄະເນເບື້ອງຕົ້ນໄດ້ (ຕົວຢ່າງ: ທຶນທີ່ຄາດຄະເນສູງສຸດສຳລັບ ບ້ານ ກ ແມ່ນ 10800 ເອີໂລ, ຄຄ ໜຶ່ງສາມາດຮັບການສະໜັບສະໜູນສູງສຸດ ເຖິງ 400ເອີໂລ, ສະເລ່ຍສາມາດສະໜັບສະໜູນໄດ້ທັງໝົດ 27ຄຄ , ເມື່ອອີງຕາມການຄັດເລືອກ ແລະ ວາງແຜນຕົວຈິງ ມີແຕ່ 20 ຄຄ ທີ່ສອດຄ່ອງກັບເງື່ອນໄຂ ແມ່ນ ບ້ານ ກ ຈະໄດ້ຮັບທຶນສະໜັບສະໜູນ 8000 ເອີໂລ).

- ບໍ່ສາມາດສະໜອງທຶນເກີນຈຳນວນຄອບຄົວທັງໝົດໄດ້ (ຕົວຢ່າງ: ບ້ານມີຈຳນວນຄອບຄົວທັງໝົດ 22 ຄອບຄົວ ເຊິ່ງມີອັດຕາສ່ວນທຽບກັບຈຳນວນຄອບຄົວທຸກຍາກ 100% ແມ່ນບໍ່ສາມາດສະໜອງທຶນເກີນ 22 ຄອບຄົວ).

**ຄວາມຍືດຍຸ່ນໃນການສົ່ງເສີມ ຄອບຄົວເປົ້າໝາຍ**

ອີງຕາມຄວາມສາມັກຄີ ແລະ ເຫັນດີຢູ່ບ້ານເປົ້າໝາຍ ແມ່ນສາມາດມີຄວາມຍືດຍຸ່ນໄດ້ດັ່ງນີ້:

- ອີງໃສ່ກິດຈະກຳ ຄອບຄົວເປົ້າໝາຍ, ກໍລະນີທີ່ບາງຄອບຄົວບໍ່ໄດ້ຮັບເຖິງ 400 ເອີໂລ ແມ່ນ ສາມາດເພີ່ມຈຳນວນຄອບຄົວ. ຕົວຢ່າງ:
    - 27 ຄຄ ມີໂອກາດຮັບທຶນ (ສູງສຸດ 400 ເອີໂລ/ຄຄ). ໃນນັ້ນ 20 ຄຄ ແມ່ນຮັບ 360 ເອີໂລ
    - 20 ຄຄ x 40 ເອີໂລ (ງົບທີ່ຍັງເຫຼືອ) = 800 ເອີໂລ = ສາມາດເພີ່ມອີກ 2 ຄຄ
- ກໍລະນີ ໂກຕ້າຈຳນວນຄຄທີ່ສາມາດຮັບທຶນ ມີໂຕເລກໃກ້ຄຽງ ກັບຈຳນວນຄອບຄົວທັງໝົດ ແມ່ນ ທາງບ້ານສາມາດເພີ່ມຈຳນວນຄອບຄົວໃຫ້ຄວບຄຸມທຸກຄອບຄົວ. ຕົວຢ່າງ:
    - ບ້ານທີ່ມີຈຳນວນຄອບຄົວທັງໝົດ 30 ຄຄ ແຕ່ສາມາດຮັບທຶນໄດ້ແຕ່ 27 ຄຄ (27 ຄຄ ນອນໃນເງື່ອນໄຂ ແລະ ບຸລິມະສິດຂອງ PSAP)
    - ຖ້າບ້ານຕັດສິນໃຈໃຫ້ທຸກຄອບຄົວ ຈຳນວນເງິນ ຕໍ່ ຄຄ ຈະຫຼຸດລົງເປັນ 360 ເອີໂລ/ຄຄ = 10,800 ເອີໂລ /30 ຄຄ
    - ສາມາດຍືດຍຸ່ນບໍ່ເກີນ 5 ຄຄ

# ເອກະສານຄັດຊ້ອນ

ເອກະສານຄັດຊ້ອນ ທີ 1: ລາຍການກິດຈະກຳບັນຊີຂາວ



ເອກະສານຄັດຊ້ອນ ທີ 2: ແບບຟອມສຳພາດຄະນະການຈັດຕັ້ງບ້ານ

## ແບບຟອມສຳພາດຄະນະການຈັດຕັ້ງບ້ານ

**1. ຂໍ້ມູນພື້ນຖານ**

1.1 ຄະນະການຈັດຕັ້ງບ້ານ*: ບ້ານ .........................../ 1.2 ເມືອງ*: ........................./

1.3 ແຂວງ*: ........................... / 1.4 ເບີໂທ*:……………………………..

1.5: ແຫຼ່ງລາຍຮັບຕົ້ນຕໍຂອງບ້ານມີຫຍັງແນ່?

ອັນດັບ 1........................................
ອັນດັບ 2........................................

ອັນດັບ 3........................................

**2. ຂໍ້ມູນດ້ານກະສິກຳ**

2.1 ແຫຼ່ງລາຍຮັບຕົ້ນຕໍຂອງບ້ານ ຈາກການຜະລິດກະສິກຳ ມີຫຍັງແດ່?* (ໃຫ້ລະບຸເຈາະຈົງ)
ອັນດັບ 1........................................
ອັນດັບ 2........................................
ອັນດັບ 3........................................
2.2 ເນື້ອທີ່ດິນກະສິກຳທັງໝົດມີ .....................(ຮຕ) *ໝາຍເຫດ: ກວດກາຄືນກັບຂໍ້ມູນຈາກ PLUP*
2.3 ມີຈັກຄອບຄົວ ທີ່ຍັງເຮັດກະສິກຳເນີນສູງ (ໄຮ່ໝູນວຽນ)?* ................(ຄຄ)
2.4 ພື້ນທີ່ ທີ່ທຳການຜະລິດແລ້ວ ອີກຈັກປີ ຈຶ່ງກັບມາທຳການຜະລິດອີກ (ຮອບວຽນການຜະລິດ)?

◯ 1 ◯ 2 ◯ 3 ◯ 4 ◯ 5 ◯ ຫຼາຍກວ່າ 5 ປີ

2.5 ຈຳນວນຄອບຄົວທີ່ມີເນື້ອທີ່ທຳການຜະລິດໜ້ອຍ ຈົນບໍ່ສາມາດເພິ່ງຕົນເອງໄດ້ (ບໍ່ກຸ້ມກິນ)? ມີ .........
ຄອບຄົວ
2.6 ມີຈັກຄອບຄົວຈາກບ້ານອື່ນ ມານຳໃຊ້ດິນໃນບ້ານເຮົາ? ມີ ........... ຄອບຄົວ
2.7 ມີຈັກຄອບຄົວຢູ່ບ້ານເຮົາ ໄປນຳໃຊ້ດິນຢູ່ບ້ານອື່ນ? ມີ ................ ຄອບຄົວ

2.8 ບ້ານເຮົາຍັງມີເນື້ອທີ່ດິນທຳການຜະລິດ ເພື່ອຂະຫຍາຍເນື້ອທີ່ນາໃໝ່ໃນອານາຄົດ ຫຼື ບໍ່? (*ສາມາດເລືອກໄດ້ຫຼາຍຄຳຕອບ*)

◯ ບໍ່ມີ ◯ ມີ, ໃນພື້ນທີ່ເນີນສູງ ◯ ມີ, ໃນພື້ນທີ່ຮາບພຽງ

2.9 ບ້ານເຮົາມີເນື້ອທີ່ນາເກົ່າ ຫຼື ນາເຮື້ອ ທີ່ຈະປັບປຸງໃນອານາຄົດ ຫຼື ບໍ່? (*ສາມາດເລືອກໄດ້ຫຼາຍຄຳຕອບ*)

◯ ບໍ່ມີ ◯ ມີ, ໃນພື້ນທີ່ເນີນສູງ ◯ ມີ, ໃນພື້ນທີ່ຮາບພຽງ

2.10 ສາມບັນຫາຫຼັກໃນການປູກພືດມີຫຍັງແດ່?*

ບັນຫາ 1.........................................................................................................................

ບັນຫາ 2.........................................................................................................................

ບັນຫາ 3.............................................................................................................................

### 3. ຂໍ້ມູນດ້ານການລ້ຽງສັດ

3.1 ສັດລ້ຽງທີ່ເປັນລາຍຮັບຕົ້ນຕໍຂອງບ້ານ ມີຫຍັງແດ່?*

ອັນດັບ 1………………………........

ອັນດັບ 2………………………........

ອັນດັບ 3………………………........

3.2 ສາມບັນຫາຫຼັກໃນການລ້ຽງສັດມີຫຍັງແດ່?*

ບັນຫາ 1.............................................................................................................................

ບັນຫາ 2.............................................................................................................................

ບັນຫາ 3.............................................................................................................................

3.3 ຮູບແບບຂອງການລ້ຽງສັດໃຫຍ່ຢູ່ບ້ານເຮົາແມ່ນແບບໃດ?* (*ສາມາດເລືອກໄດ້ຫຼາຍຄຳຕອບ*)

◯ ແບບຂັງຕະຫຼອດປີ ◯ ແບບເຄິ່ງຂັງເຄິ່ງປ່ອຍ ◯ ແບບປ່ອຍຊະຊາຍ

3.4 ບ້ານເຮົາມີການປ່ອຍສັດລ້ຽງເຂົ້າໄປຫາກິນໃນ 3 ປະເພດປ່າບໍ່?

◯ ມີ ◯ ບໍ່ມີ

3.5 ບ້ານເຮົາມີຄັງຫຍ້າລ້ຽງສັດໃນ 3 ປະເພດປ່າບໍ່?

◯ ມີ ◯ ບໍ່ມີ

### 4. ຂໍ້ມູນດ້ານການເຂົ້າເຖີງຕະຫຼາດ

4.1 ຊາວບ້ານເຮົາໄດ້ຂາຍຜົນຜະລິດກະສິກຳ ແລະ ເຄື່ອງປ່າຂອງດົງ ຢູ່ໃສ?* (ໝາຍໄດ້ຫຼາຍຄຳຕອບ)

ພາຍໃນບ້ານ ☐ ພໍ່ຄ້າມາຊື້ຢູ່ບ້ານ/ພໍ່ຄ້າຄົນກາງ ☐ ຂາຍຢູ່ຕະຫຼາດທ້ອງຖິ່ນ ☐

ຂາຍໃຫ້ບໍລິສັດ ☐ ສິ່ງອອກ ☐

4.2 ມີການຊື້-ຂາຍຜົນຜະລິດແບບມີສັນຍາບໍ່?

◯ ມີ ◯ ບໍ່ມີ

4.2.1 ຖ້າມີ, ກະລຸນາ ອະທິບາຍສະດວກໃນການຂາຍຜົນຜະລິດກະສິກຳ ແລະ ເຄື່ອງປ່າຂອງດົງ ແບບມີສັນຍາ:

.....................................................................................................................................

.....................................................................................................................................

.....................................................................................................................................

4.2.2 ຖ້າມີ, ກະລຸນາອະທິບາຍຄວາມຫຍຸ້ງຍາກໃນການຂາຍຜົນຜະລິດກະສິກຳ ແລະ ເຄື່ອງປ່າຂອງດົງ ແບບມີສັນຍາ:

........................................................................................................................................................

........................................................................................................................................................

........................................................................................................................................................

4.2.3 ຖ້າບໍ່ມີ, ກະລຸນາອະທິບາຍຄວາມຫຍຸ້ງຍາກໃນການຂາຍ ຜົນຜະລິດກະສິກຳ ແລະ ເຄື່ອງປ່າຂອງດົງ ແບບບໍ່ມີສັນຍາ:

........................................................................................................................................................

........................................................................................................................................................

........................................................................................................................................................

4.3: ກະລຸນາອະທິບາຍສິ່ງທ້າທາຍຫຼັກໆໃນການຂາຍ ຜົນຜະລິດກະສິກຳ ແລະ ເຄື່ອງປ່າຂອງດົງ:

........................................................................................................................................................

........................................................................................................................................................

........................................................................................................................................................

ວັນທີສຳພາດ: ............/ ........../ ............

ຊື່ ແລະ ລາຍເຊັນ ຜູ້ສຳພາດ:

ຢັ້ງຢືນໂດຍຄະນະບ້ານ (ເຊັນພ້ອມປະທັບຕາ ແລະ ຊື່ແຈ້ງ)

ຕຳແໜ່ງ ແລະ ເບີໂທ ຜູ້ສຳພາດ: ......................................

........................................

ຊື່ ແລະ ນາມສະກຸນ ຜູ້ເຂົ້າຮ່ວມໃຫ້ສຳພາດ*

1.........................................., ເບີໂທ* ................................

2.........................................., ເບີໂທ* ...............................

3.........................................., ເບີໂທ* ...............................

## ເອກະສານຄັດຊ້ອນ ທີ 3:  ແບບຟອມລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມກິດຈະກຳ

**ຟອມລົງທະບຽນຄອບຄົວທີ່ສົນໃຈເຂົ້າຮ່ວມ PSAP**

| ລ/ດ | ຊື່ ແລະ ນາມສະກຸນ | ເປັນຄອບຄົວທີ່ເຮັດກະສິກຳເນີນສູງ | | ກິດຈະກຳທີ່ເລືອກໂດຍອີງຕາມບັນຊີຂາວ | ທີ່ຕັ້ງຂອງຕອນດິນ (ຊື່ທ້ອງຖິ່ນຂອງທີ່ຕັ້ງ) | ປະເພດຂອງຕອນດິນ (ດິນນາ,ດິນໄຮ່, ...) | ໃຜເປັນເຈົ້າຂອງທີ່ດິນຕອນນີ້ | ໝາຍເຫດ: ຄຳເຫັນຈາກຄະນະບ້ານ |
|---|---|---|---|---|---|---|---|---|
| | | ແມ່ນ | ບໍ່ແມ່ນ | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |

ຊື່ ແລະ ລາຍເຊັນ ຜູ້ຕາງໜ້າທີມງານ PSAP

ຊື່ ແລະ ລາຍເຊັນ ຂອງຄະນະຄຸ້ມຄອງດິນ ແລະ ປ່າໄມ້ບ້ານ

ເອກະສານຄັດຊ້ອນ ທີ 4: ແບບຟອມເກັບກໍາຂໍ້ມູນສໍາລັບຄອບຄົວທີ່ລົງທະບຽນ

## ແບບຟອມເກັບກໍາຂໍ້ມູນສໍາລັບຄອບຄົວທີ່ລົງທະບຽນກິດຈະກໍາ PSAP

**1. ຂໍ້ມູນກ່ຽວກັບຄອບຄົວ**

1.1 ຊື່ ແລະ ນາມສະກຸນ ຜູ້ຖືກສໍາພາດ……………………….……………..../ 1.2 ເພດ…………./

1.3 ອາຍຸ…..……./ 1.4 ເບີໂທຜູ້ຖືກສໍາພາດ…………………../ (ໝາຍເຫດ: ກໍລະນີໃຫ້ສໍາພາດແທນ)

1.5 ຊື່ ແລະ ນາມສະກຸນ ຫົວໜ້າຄອບຄົວ (ຜູ້ຈັດຕັ້ງປະຕິບັດ)*………………..........................……/

1.6 ອາຊີບ……….......…..../ 1.7 ອາຍຸ*…..……./1.8 ເພດ*……...…/ 1.9 ຊົນເຜົ່າ*…………..../
1.10 ເຮືອນເລກທີ………………./ 1.11 ບ້ານ*………………..1.12 ກຸ່ມບ້ານ ຫຼື ເຂດ………..…/
1.13 ເມືອງ*…………..…............………../ 1.14 ແຂວງ*……….......……………………

1.15 ເບີໂທຫົວໜ້າຄອບຄົວ*…………………………………/

1.16 ແຫຼ່ງລາຍຮັບຕົ້ນຕໍ

1…………….........

2………................

3…..……….........

1.17 ຄອບຄົວດັ່ງກ່າວນອນໃນຂໍ້ໃດ? * (ເລືອກໄດ້ຫຼາຍຄໍາຕອບ)

☐ ຄອບຄົວທຸກຍາກ

☐ ຄອບຄົວຊາວໜຸ່ມ (ອາຍຸນ້ອຍກວ່າ ຫຼື ເທົ່າກັບ 35 ປີ ≤ )

☐ ຄອບຄົວແມ່ຍິງເປັນຫົວໜ້າ

☐ ຄອບຄົວທີ່ໄດ້ຮັບຜົນກະທົບຈາກການວາງແຜນນໍາໃຊ້ທີ່ດິນ PLUP 2.0

**2. ຂໍ້ມູນກ່ຽວກັບແຮງງານ**

2.1 ຈໍານວນສະມາຊິກໃນຄອບຄົວ*…………… (ຄົນ) / 2.2 ຈໍານວນແມ່ຍິງ*…....…………... (ຄົນ)

2.3 ຈໍານວນສະມາຊິກຜູ້ທີ່ມີອາຍຸຫຼາຍກວ່າ 14 ປີ ທີ່ສາມາດເຮັດວຽກໄດ້*……..…....................... (ຄົນ)

2.4 ຈໍານວນຜູ້ຍິງທີ່ມີອາຍຸຫຼາຍກວ່າ 14 ປີ ທີ່ສາມາດເຮັດວຽກໄດ້*………..............…..……… (ຄົນ)

2.5 ມີການແລກປ່ຽນແຮງງານໃນການຜະລິດບໍ່? ◯ ມີ ◯ ບໍ່ມີ

2.6 ໄດ້ມີການຈ້າງແຮງງານບໍ? ◯ ມີ ◯ ບໍ່ມີ

**3. ຂໍ້ມູນກ່ຽວກັບຕອນດິນກະສິກໍາ ແລະ ຜົນຜະລິດກະສິກໍາ**

**- ດິນນາ**

3.1 ຈຳນວນດິນນາທັງໝົດມີ…………..(ຕອນ) / 3.2 ເນື້ອທີ່ດິນນາທັງໝົດ …………(ເຮັກຕາ)*

3.3 ໃນນັ້ນມີເນື້ອທີ່ນາທີ່ໃຊ້ນ້ຳຈາກຊົນລະປະທານ ………… (ເຮັກຕາ)

**- ດິນໄຮ່**

3.4 ຈຳນວນດິນໄຮ່ທັງໝົດມີຈັກຕອນ (ທີ່ນຳໃຊ້ປະຈຸບັນ+ດິນປ່າເລົ່າ) ……… (ຕອນ) /

3.5 ເນື້ອທີ່ດິນໄຮ່ທັງໝົດມີ (ທີ່ນຳໃຊ້ປະຈຸບັນ+ດິນປ່າເລົ່າ) …………… (ເຮັກຕາ)*

3.6 ປະຈຸບັນໄດ້ນຳໃຊ້ດິນໄຮ່ຈັກຕອນ …….. (ຕອນ) / 3.7 ເນື້ອທີ່ດິນໄຮ່ທີ່ໄດ້ນຳໃຊ້ປະຈຸບັນ ………(ເຮັກຕາ)

**ໝາຍເຫດ:** ດິນໄຮ່ = ເປັນດິນທີ່ນຳໃຊ້ໃນປັດຈຸບັນ

ດິນປ່າເລົ່າ = ເປັນດິນໄຮ່ ທີ່ບໍ່ໄດ້ນຳໃຊ້ໃນປັດຈຸບັນ (ຕ້ອງເປັນປ່າເລົ່າອ່ອນ ຫຼື ຕ່ຳກວ່າ 5ປີ)

3.8 ເນື້ອທີ່ສວນປູກຜັກ …………… (ເຮັກຕາ)/ 3.9 ເນື້ອທີ່ສວນໄມ້ໃຫ້ໝາກ ………….. (ເຮັກຕາ)

3.10 ເນື້ອທີ່ປູກ..................................................ມີ........................(ເຮັກຕາ)

3.11 ເນື້ອທີ່ປູກ..................................................ມີ........................(ເຮັກຕາ)

3.12 ເນື້ອທີ່ປູກ..................................................ມີ........................(ເຮັກຕາ)

3.13 ເນື້ອທີ່ປູກ..................................................ມີ........................(ເຮັກຕາ)

3.14 ເນື້ອທີ່ໜອງປາ …………………. (ເຮັກຕາ)

3.15: ທ່ານໄດ້ນຳໃຊ້ສານເຄມີໃນການປູກພືດຊະນິດໃດບໍ່ ?* ໃຫ້ໝາຍ ✓ (ເລືອກໄດ້ຄຳຕອບດຽວ)

☐ ໃຊ້ທຸກໆປີ ກັບພືດທຸກໆຊະນິດ. ☐ ໃຊ້ທຸກໆປີ ພຽງແຕ່ກັບພືດບາງຊະນິດ.

☐ ໃຊ້ພຽງແຕ່ບາງຄັ້ງ ກັບພືດບາງ ☐ ຊະນິດ. ບໍ່ໃຊ້ເລີຍ (ຂ້າມ 3.16)

3.16: ຖ້າໃຊ້ໂຕໃດແນ່?* ໃຫ້ໝາຍ ✓

- ປູຍເຄມີ: ☐ ໃຊ້. ☐
- ຢາຂ້າຫຍ້າ: ☐ ໃຊ້. ☐ ບໍ່ໃຊ້.
- ຢາປາບສັດຕູພືດ: ☐ ໃຊ້. ☐ ບໍ່ໃຊ້.
- ສານເຄມີອື່ນໆ (ກະລຸນາລະບຸ).........................................: ☐ ໃຊ້. ☐ ບໍ່ໃຊ້.
- ສານເຄມີອື່ນໆ (ກະລຸນາລະບຸ).......................................: ☐ ໃຊ້. ☐ ບໍ່ໃຊ້.

4. **ຂໍ້ມູນກ່ຽວກັບການລ້ຽງສັດ**

4.1 ຈຳນວນຄວາຍທັງໝົດມີຈັກໂຕ…………….4.2 ຈຳນວນງົວທັງໝົດມີຈັກໂຕ…………………….

4.3 ຈຳນວນແບ້ທັງໝົດມີຈັກໂຕ…………..….4.4 ຈຳນວນໝູທັງໝົດມີຈັກໂຕ…………………..…

4.5 ຈຳນວນສັດປີກທັງໝົດມີຈັກໂຕ…………..………

## 5 ລາຍລະອຽດຂອງແຜນການສົ່ງເສີມກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP)

5.1 ກິດຈະກຳບັນຊີຂາວທີ່ຄອບຄົວເລືອກ*………….………..……………………………………...

5.2 ເປັນຫຍັງຈຶ່ງເລືອກກິດຈະກຳຂັ້ນເທິງນີ້?* (ອະທິບາຍ)……………………….…………………

……………………………………………………………………………….…………………

5.3 ທ່ານເຄີຍເຮັດກິດຈະກຳທີ່ເລືອກນີ້ ຫຼື ບໍ່? * ◯ ເຄີຍ ◯ ບໍ່ເຄີຍ

5.3.1 ຖ້າເຄີຍ: ມີເນື້ອທີ່ການຜະລິດຈັກເຮັກຕາ? *…………………(ຮຕ)

5.3.2 ຖ້າເຄີຍ: ສະເລ່ຍຜົນຜະລິດ?*……….……...(ວິຊາການຄິດໄລ່: ຕ/ຮຕ)

5.4 ທ່ານຕ້ອງການຈັດຕັ້ງປະຕິບັດກິດຈະກຳນີ້ຢູ່ໃສ? (ທີ່ຕັ້ງຂອງຕອນດິນ)…….……………..………....

5.5 ທ່ານໄດ້ຕອນດິນດັ່ງກ່າວມາໄດ້ແນວໃດ? (ອະທິບາຍ)…………………………………....………..

…………………………………………………………………………………………………

5.6 ທ່ານມີເອກະສານຢັ້ງຢືນສິດ ຫຼື ເອກະສານຢັ້ງຢືນການເສຍພາສີນຳໃຊ້ທີ່ດິນຕອນນີ້ບໍ? ◯ ມີ ◯ ບໍ່ມີ

(ໝາຍເຫດ: ຖ້າບໍ່ມີ ທັງສອງຢ່າງທີ່ລະບຸໄວ້ໃນຂໍ້ 5.6 ຕ້ອງໄດ້ຂໍໃບຢັ້ງຢືນຈາກການຈັດຕັ້ງບ້ານ)

5.7 ຖ້າວ່າ ມີບໍລິສັດເອກະຊົນເຂົ້າມາສົ່ງເສີມການຜະລິດແບບມີສັນຍາ ທ່ານຈະຍິນດີເຂົ້າຮ່ວມບໍ? *

◯ ຍິນດີ ◯ ບໍ່ຍິນດີ

5.8 ຖ້າວ່າ ກິດຈະກຳບັນຊີຂາວທີ່ທ່ານເລືອກ ບໍ່ເໝາະສົມກັບພື້ນທີ່ຂອງທ່ານ, ທ່ານຍິນດີ ປ່ຽນເປັນກິດຈະກຳບັນຊີຂາວ ຫຼື ພື້ນທີ່ອື່ນບໍ?

◯ ຍິນດີ ◯ ບໍ່ຍິນດີ

**ວັນທີສຳພາດ……../……../……...........**

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ ຜູ້ສຳພາດ** **ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ ຜູ້ຖືກສຳພາດ**

**ຕຳແໜ່ງຜູ້ສຳພາດ..............................**

**ເບີໂທຜູ້ສຳພາດ…………………………**

ເອກະສານຄັດຊ້ອນ ທີ 5: ແບບຟອມສໍາຫຼວດພື້ນທີ່

# ແບບຟອມສໍາຫຼວດພື້ນທີ່ທໍາການຜະລິດຕົວຈິງ

**1. ທີ່ຕັ້ງ ແລະ ແຜນວາດພື້ນທີ່ທໍາການຜະລິດຕົວຈິງ:**

1.1. ຊື່ ແລະ ນາມສະກຸນ ຫົວໜ້າຄອບຄົວ (ຜູ້ຈັດຕັ້ງປະຕິບັດ)*: ...............................................

1.2. ບ້ານ: ............................., ເມືອງ: .............................., ແຂວງ: ...........................

1.3. ຄ່າພິກັດ GPS ……………X*: .............................., Y*: ....................................

1.4. ຊື່ຈຸດພິກັດ GPS ຈຸດຕັ້ງຂອງຕອນ ດິນ: ........................... ຫາ ....................................

1.5. ລະຫັດ/ເລກທີ/ຊື່ເສັ້ນແທຣັກ: .........................................................................................

1.6. ຄາດຄະເນເນື້ອທີ່ສະເພາະທີ່ຈະຈັດຕັ້ງປະຕິບັດກິດຈະກໍາບັນຊີຂາວທີ່ເລືອກ* : ................ ເຮັກຕາ

1.7. ຄວາມສູງເໜືອໜ້ານໍ້າທະເລ (ມ): ...................................................................................

1.8. ຖ່າຍຮູບຂອງພື້ນທີ່ ເລກທີ/ຊື່ຟາຍ:* ...............................................................................

1.9. ແຜນວາດຕອນດິນ

ທິດເໜືອ ຕິດກັບ: ..........................

ທິດຕາເວັນຕົກ ຕິດກັບ: ..........................

ທິດຕາເວັນອອກ ຕິດກັບ: ..........................

ທິດໃຕ້ ຕິດກັບ: ..........................

**2. ສະພາບຂອງພື້ນທີ່:** (ກະລຸນາໝາຍ ✓ ໃສ່ໃນຫ້ອງສີ່ຫຼ່ຽມ)

2.1. ຊະນິດພືດທີ່ປູກປັດຈຸບັນ*:..........................................................................................

2.2. ໄດ້ມີການລ້ອມຮົ້ວບໍ່ ? ☐ ມີ ☐ ບໍ່ມີ

2.3. ພື້ນທີ່ດັ່ງກ່າວມີຕົ້ນໄມ້ຫຼາຍບໍ່ ?* ☐ ຫຼາຍ ☐ ບໍ່ຫຼາຍ

2.4. ມີຕົ້ນໄມ້ອາຍຸ 5 ປີຂຶ້ນໄປບໍ່ ?:* ☐ ມີ ☐ ບໍ່ມີ (ຂ້າມ ຂໍ້ 2.5)

2.5. ຖ້າມີ, ມີປະມານຈັກຕົ້ນ ?* ☐ ຕ່ຳກວ່າ 5 ຕົ້ນ. ☐ 5-10 ຕົ້ນ. ☐ 11-20 ຕົ້ນ.

☐ 21-50 ຕົ້ນ. ☐ ຫຼາຍກວ່າ 50 ຕົ້ນ.

2.6. ລະດັບຄວາມຄ້ອຍຊັນຂອງດິນ

☐ ຮາບພຽງ ☐ ຄ້ອຍຊັນເລັກນ້ອຍ

☐ ຄ້ອຍຊັນປານກາງ ☐ ຄ້ອຍຊັນຫຼາຍກ່ວາ 35 ອົງສາ.

**3. ປະຫວັດ ແລະ ຄວາມເໝາະສົມຂອງດິນ:** (ກະລຸນາໝາຍ ✓ ໃສ່ໃນຫ້ອງສີ່ຫຼ່ຽມ)

3.1. ຜ່ານມາເຄີຍປູກພືດຫຍັງແດ່ໃສ່ດິນຕອນນີ້? (ອະທິບາຍ):

......................................................................................................................................

......................................................................................................................................

......................................................................................................................................

3.2. ດິນດັ່ງກ່າວເໝາະສຳລັບຈັດຕັ້ງກິດຈະກຳ PSAP ບໍ່? ☐ ເໝາະ ☐ ບໍ່ເໝາະ

(ຕາມການສັງເກດຂອງວິຊາການ)

3.3. ລາຍລະອຽດຈາກ ການສັງເກດ ແລະ ຂໍ້ຈຳກັດ (ວິຊາການອະທິບາຍ):

......................................................................................................................................

......................................................................................................................................

......................................................................................................................................

......................................................................................................................................

3.4. ຂັ້ນຕອນຕໍ່ໄປຂອງການຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ຕົກລົງກັບຊາວກະສິກອນມີຄືແນວໃດ?

(ຕົກລົງໃຫ້ລະອຽດ):

3.4.1........................................................................................................

3.4.2........................................................................................................

3.4.3........................................................................................................

3.4.4........................................................................................................

3.4.5...............................................................................................................

3.5. ຂ້າພະເຈົ້າ (ຜູ້ຈັດຕັ້ງປະຕິບັດ) ເຫັນດີທີ່ ຈະບໍ່ນໍາໃຊ້ສານເຄມີ, ຈະບໍ່ປ່ຽນ ຫຼື ຂາຍພື້ນທີ່ທໍາການຜະລິດ, ຈະຈັດຕັ້ງປະຕິບັດກິດຈະກໍາ ຕາມຂັ້ນຕອນການສົ່ງເສີມກະສິກໍາແບບຍືນຍົງໂດຍບໍ່ທໍາລາຍປ່າໄມ້ຈົນສໍາເລັດ, ຖ້າຫາກບໍ່ປະຕິບັດ ຈະຖືກດໍາເນີນການຕາມກົດລະບຽບຂອງ ທຶນກະສິກໍາ ແລະ ປ່າໄມ້ບ້ານ ມາດຕາ 18 ແລະ 19.

ວັນທີ ສໍາຫຼວດ*: ....................................

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນຜູ້ຈັດຕັ້ງປະຕິບັດ**

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນຜູ້ສໍາຫຼວດ**

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນຜູ້ຮ່ວມສໍາຫຼວດ:**

1. ...............................................

2. ...............................................

3. ...............................................

4. ...............................................

5. ...............................................

**4.** **ລາຍການ ແລະ ງົບປະມານທັງໝົດທີ່ສະເໜີ** ຂອງຄອບຄົວ ທ/ບ …………………………........……………………………………………….

ວັນທີວາງແຜນ (ວ/ດ/ປ)*: ........................ ອັດຕາແລກປ່ຽນ*: ..................... ກີບ / ເອີໂຣ ເວລາທີ່ຈະເລີ່ມຈັດຕັ້ງປະຕິບັດກິດຈະກຳ (ວ/ດ/ປ)* ............................

| **ລ/ດ*** | **ຊື່ລາຍການ*<br>(ລະບຸລາຍລະອຽດທາງກາຍະພາບ ແລະ ມາດຕະຖານທາງເຕັກນິກ)** | **ຈຳນວນ*** | **ຫົວໜ່ວຍ*** | **ລາຄາ / ຫົວໜ່ວຍ*** | **ລວມມູນຄ່າ (ກີບ) *** | **ລວມມູນຄ່າ (ເອີໂຣ)*** |
|---|---|---|---|---|---|---|
| **I. 75% ໃສ່ກິດຈະກຳຫຼັກ** | | | | | | |
| 1 | | | | | | |
| 2 | | | | | | |
| 3 | | | | | | |
| 4 | | | | | | |
| 5 | | | | | | |
| 6 | | | | | | |
| 7 | | | | | | |
| **ລວມ I** | | | | | ............................ ກີບ* | ................ ເອີໂຣ* |
| **II. 25% ໃສ່ກິດຈະກຳປະສົມປະສານ** | | | | | | |
| 1 | | | | | | |
| 2 | | | | | | |
| 3 | | | | | | |

| | | | | | | |
|---|---|---|---|---|---|---|
| 4 | | | | | | |
| 5 | | | | | | |
| **ລວມ II** | | | | | ............................ ກີບ* | ................ ເອີໂຣ* |
| **ລວມຍອດມູນຄ່າ (I+II)** | | | | | ............................ ກີບ* | ................ ເອີໂຣ* |
| **III. ປັດໃຈປະກອບສ່ວນເພີ່ມເຕີມຈາກຊາວກະສິກອນ** | | | | | | |
| 1 | | | | | | |
| 2 | | | | | | |
| 3 | | | | | | |
| 4 | | | | | | |
| 5 | | | | | | |
| **ລວມ III** | | | | | ............................ ກີບ* | ................ ເອີໂຣ* |

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນຜູ້ຈັດຕັ້ງປະຕິບັດກິດຈະກຳ**

**ຊື່ ແລະ ນາມສະກຸນ ພ້ອມລາຍເຊັນພະນັກງານຜູ້ວາງແຜນ**

ເບີໂທລະສັບ: ......................................

ເບີໂທລະສັບ: ......................................

ເອກະສານຄັດຊ້ອນ ທີ 6: ແຜນການສະໜອງທຶນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ...................................

ເມືອງ ................................... ເລກທີ .................. /ນບ.

ບ້ານ ................................... ລົງວັນທີ ...................................

**ແຜນການສະໜອງທຶນ**

ການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP), ໂຄງການ SU-I-GFLM

| ລ/ດ | ຊື່ ແລະ ນາມສະກຸນຂອງຫົວໜ້າຄອບຄົວ (ຜູ້ຈັດຕັ້ງປະຕິບັດ)* | ຊື່ກິດຈະກຳບັນຊີລາວທີ່ຄອບຄົວເລືອກ* | ວັນທີການສຳຫຼວດພື້ນທີ່* (ວັນ/ເດືອນ/ປີ) | ງົບທັງໝົດທີ່ຕ້ອງການ (ກີບ)* | ງົບທັງໝົດທີ່ຕ້ອງການ (ເອີໂຣ)* | ເວລາເລີ່ມຈັດຕັ້ງປະຕິບັດ (ວັນ/ເດືອນ/ປີ)* | ລາຍເຊັນຜູ້ຈັດຕັ້ງປະຕິບັດ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | ອັດຕາແລກປ່ຽນ* ...................... | | ລວມງົບປະມານທັງໝົດ | ກີບ* | ເອີໂຣ* | | |
| | | ຂຽນເປັນໂຕໜັງສື | | ກີບ | | | ເອີໂຣ |

| ນາຍບ້ານ | ຄຸ້ມຄອງທີ່ດິນກະສິກຳ ແລະ ປ່າໄມ້ | ຄະນະຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ | ໜ່ວຍງານສົ່ງເສີມກະສິກຳເມືອງ (PSAP) |
|---|---|---|---|
| (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) | (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) | (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) | (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) |

ເອກະສານຄັດຊ້ອນ ທີ 7: ບົດບັນທຶກກອງປະຊຸມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ..........................
ເມືອງ ...........................
ບ້ານ .............................

ເລກທີ .............../.........
ວັນທີ.............................

# ບົດບັນທຶກກອງປະຊຸມ

**ການຈັດຕັ້ງປະຕິບັດ ກິດຈະກຳສົ່ງເສີມການຜະລິດກະສິກຳແບບຍືນຍົງ ໂດຍບໍ່ທຳລາຍປ່າໄມ້ (PSAP) ພາຍໃຕ້ ໂຄງການ ຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM)**

- ອີງຕາມ ຂໍ້ຕົກລົງທ່ານເຈົ້າເມືອງວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳ, ຄະນະປະສານງານ ແລະ ວິຊາການຊ່ວຍວຽກ ແລະ ໜ່ວຍງານຮັບຜິດຊອບ ໂຄງການ ຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM) , ສະບັບເລກທີ ......................., ລົງວັນທີ .........................
- ອີງຕາມ ຂໍ້ຕົກລົງທ່ານເຈົ້າເມືອງວ່າດ້ວຍ ການຮັບຮອງເອົາບ້ານເປົ້າໝາຍຂອງໂຄງການ SU-I-GFLM ສະບັບເລກທີ ............., ລົງວັນທີ......................
- ອີງຕາມ ແຜນກິດຈະກຳ ...........................ສະບັບເລກທີ................., ລົງວັນທີ.....................

## I. ສະພາບລວມ.

ໃນລະຫວ່າງວັນທີ ........... / ....... /........... ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ໜ່ວຍງານ ສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ຂັ້ນເມືອງ ໄດ້ລົງຈັດຕັ້ງປະຕິບັດກິດຈະກຳ ຢູ່ທີ່ ບ້ານ ..................................., ເມືອງ ............................ ແຂວງ ............................... ເຊິ່ງມີຈຸດປະສົງເພື່ອວາງແຜນການຊຸກຍູ້ການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ ທີ່ສອດຄ່ອງກັບເງື່ອນໄຂ ແລະ ນະໂຍບາຍຂອງ ໂຄງການ.

## II. ເນື້ອໃນ.

ການຈັດຕັ້ງປະຕິບັດກິດຈະກຳ ສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ໃນຄັ້ງນີ້ຮັບປະກັນໄດ້ເຖິງຂະບວນການມີສ່ວນຮ່ວມ ເຄົາລົບສິດສະເໝີພາບຂອງຊົນເຜົ່າ, ເພດ, ໄວ ແລະ ສະຖານະທາງສັງຄົມ ຂອງຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ທຸກພາກສ່ວນການຈັດຕັ້ງ ແລະ ປະຊາຊົນ ໄດ້ຮັບຊາບ ແລະ ເຫັນດີຕາມເນື້ອໃນ ແລະ ຕົວເລກຕ່າງໆ ຢ່າງເປັນເອກະພາບ.

ພາກສ່ວນຮ່ວມກອງປະຊຸມ

- ອົງການຈັດຕັ້ງບ້ານ ແລະ ປະຊາຊົນ ມີ: ................................ ຄົນ, ຍິງ: .......................... ຄົນ
- ໜ່ວຍງານສົ່ງເສີມ PSAP ຂັ້ນເມືອງ ມີ: ............................ ຄົນ, ຍິງ: .......................... ຄົນ
- ໜ່ວຍງານສົ່ງເສີມ PSAP ຂັ້ນແຂວງ ມີ: ............................ ຄົນ, ຍິງ: .......................... ຄົນ
- ພະນັກງານ GIZ/CliPAD ມີ: ......................... ຄົນ, ຍິງ: .......................... ຄົນ

2.1. ພາສາໃຊ້ໃນກອງປະຊຸມ: (ໃຫ້ ✓ ໃສ່ພາສາທີ່ສື່ສານ ແລະ ຂຽນໃສ່ແຖວ ພາສາອື່ນໆ ຕາມຕົວຈິງ).

- ພາສາ ລາວ
- ພາສາ ມົ້ງ
- ພາສາ ກຶມມຸ
- ພາສາອື່ນໆ (ໃຫ້ລະບຸ): ..........................................................................................

2.2. ຂັ້ນຕອນ ແລະ ຂະບວນການເຮັດວຽກ ປະກອບມີ:

1. ເປີດກອງປະຊຸມເຜີຍແຜ່ຂໍ້ມູນ, ເງື່ອນໄຂ ແລະ ວິທີການວາງແຜນການຕອບສະໜອງທຶນ
2. ລົງທະບຽນຈຳນວນຄອບຄົວທີ່ສົນໃຈຢາກເຮັດການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້
3. ສຳຫຼວດ, ປະເມີນທ່າແຮງ, ວັດແທກຕອນດິນ ຂອງຄອບຄົວຜູ້ລົງທະບຽນເຮັດກິດຈະກຳຕາມບັນຊີຂາວ
4. ວິເຄາະຜົນການສຳຫລວດ ປະກອບການສຳພາດ, ຄັດເລືອກ ແລະ ວາງແຜນການລົງທຶນ ຂອງຄອບຄົວເປົ້າໝາຍ
5. ສະຫຼຸບ, ສັງລວມນຳສະເໜີຕໍ່ກອງປະຊຸມລວມບ້ານຄັ້ງສຸດທ້າຍ ແລ້ວລົງຄະແນນສຽງຮັບຮອງແຜນສະ ໜອງທຶນຢ່າງເປັນເອກະສັນ

## III. ຜົນໄດ້ຮັບ.

3.1. ລວມ 5 ຂັ້ນຕອນທີ່ກ່າວມາຂ້າງເທິງນີ້ ໃຊ້ເວລາຢູ່ໃນບ້ານທັງໝົດ ......... ວັນເຕັມ, ໃນເບື້ອງຕົ້ນມີຄອບຄົວລົງທະບຽນສົນໃຈເຂົ້າຮ່ວມນຳກິດຈະກຳຂອງໂຄງການທັງໝົດ .............. ຄອບຄົວ ໃນນັ້ນ ໄດ້ຜ່ານການລົງເກັບກຳຂໍ້ມູນ ແລະ ລົງສຳຫຼວດພື້ນທີ່ .............. ຄອບຄົວ, ສາມາດຄັດເລືອກໄດ້ຕາມເງື່ອນໄຂຂອງໂຄງການ............. ຄອບຄົວ.

ຜົນຈາກກອງປະຊຸມລວມບ້ານຄັ້ງສຸດທ້າຍ, ຜູ້ເຂົ້າຮ່ວມທັງໝົດໄດ້ຍົກມືອອກສຽງຮັບຮອງຈຳນວນ-ລາຍຊື່ຄອບຄົວ-ແຜນສະໜອງທຶນໃຫ້ແກ່ຄົວເຮືອນເປົ້າໝາຍຂອງບ້ານຢ່າງເປັນເອກະພາບ ອີງຕາມແຜນສະໜອງທຶນ ເລກທີ..........................ວັນທີ................................(ຄັດຕິດແຜນສະໜອງທຶນ).

3.2. ງົບປະມານທີ່ໄດ້ຈັດສັນໃຫ້ແຕ່ລະຄອບຄົວແມ່ນໄດ້ຄິດໄລ່ເປັນເງິນ ກີບ (Kip) ແລະ ປ່ຽນເປັນເງິນ ເອີໂຣ (EU) ໃນເວລາທີ່ຂຶ້ນແຜນ ເພາະຕ້ອງໄດ້ສົ່ງໃຫ້ກັບຜູ້ໃຫ້ທຶນເພື່ອອານຸມັດ, ເງິນທີ່ໂອນມາແມ່ນຈະປ່ຽນຈາກເງິນ ເອີໂຣ (EU) ເປັນເງິນກີບ ອາດຫຼຸດລົງ ຫຼື ເພີ່ມຂຶ້ນ ອີງຕາມອັດຕາແລກປ່ຽນຕົວຈິງຈາກທະນາຄານ ໃນມື້ທີ່ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໂອນໃຫ້.

3.3. ທຸກໆການຈັດຊື້ໃຫ້ແຕ່ລະຄອບຄົວທີ່ໄດ້ຮັບທຶນບໍ່ວ່ານ້ອຍຫຼືຫຼາຍໃນແຕ່ລະຄັ້ງຕ້ອງປະກອບໃສ່ແບບຟອມແຜນການຈັດຊື້ຢ່າງລະອຽດໂດຍຄອບຄົວທີ່ໄດ້ຮັບທຶນຕ້ອງໄດ້ເຫັນດີເປັນເອກະພາບຕໍ່ທາງດ້ານລາຄາ ແລະ ຄຸນນະພາບຂອງສິນຄ້າ ຫຼື ການບໍລິການ ພ້ອມລົງລາຍເຊັນໃສ່ແບບຟອມ ແຜນການຈັດຊື້ ກ່ອນການຈັດຊື້.

3.4. ຂະບວນການຈັດຊື້-ຈັດຈ້າງ: ພາຍຫຼັງທີ່ ກປສ ໄດ້ໂອນເງິນເຂົ້າຫາບ້ານແລ້ວ ໜ່ວຍງານ PSAP ແລະ VFAG ເມືອງ ຈະໄດ້ຮ່ວມກັບຊາວກະສິກອນ ແລະ VFAG ຂອງບ້ານ ຊອກຫາຜູ້ສະໜອງທີ່ສາມາດຈັດສິ່ງປັດໃຈການຜະລິດໂດຍຮັບປະກັນທາງດ້ານປະລິມານ ແລະ ຄຸນະພາບໄດ້, ຜູ້ສະໜອງດັ່ງກ່າວນີ້ອາດຈະແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ຢູ່ພາຍໃນບ້ານ, ເມືອງ ຫຼື ຕ່າງເມືອງຕ່າງແຂວງ ເຊິ່ງການຊອກຫາຮ້ານຄ້ານັ້ນຢ່າງໜ້ອຍຕ້ອງມີ 3 ບ່ອນ ເພື່ອສົມທຽບລາຄາ, ຫຼັງຈາກນັ້ນ ຈະໄດ້ມີການຕົກລົງເຫັນດີຮ່ວມກັນ, ຊາວກະສິກອນສາມາດຕັດສິນໃຈວ່າຈະຈັດຊື້ເອງ ຫຼື ໃຫ້ໜ່ວຍງານ PSAP ເມືອງຊ່ວຍປະສານງານ ແລະ ອຳນວຍຄວາມສະດວກ, ໃນຂັ້ນຕອນນີ້ຊາວກະສິກອນສາມາດປະຕິເສດຮ້ານຄ້າທີ່ທາງເມືອງແນະນຳໃຫ້ ແລະ ສາມາດຈັດຊື້ໄດ້ດ້ວຍໂຕເອງໂດຍການປະສານງານຮ່ວມກັບໜ່ວຍງານ PSAP ເມືອງ ແລະ VFAG (ທາງໂຄງການຈະບໍ່ມີງົບປະມານໃນການເດີນທາງ ຫຼື ຊອກຫາຜູ້ສະໜອງໃຫ້), ເຊິ່ງຊາວກະສິກອນຈະຕ້ອງຮັບຜິດຊອບຕໍ່ຜົນໄດ້ຮັບທີ່ເກີດຂຶ້ນໃນປັດໃຈການຜະລິດດ້ວຍໂຕຂອງເຂົາເຈົ້າເອງ, ການຈັດຊື້ຕ້ອງເປັນໄປຕາມລະບຽບຂອງທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG).

3.5. ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ຈະບໍ່ໄດ້ເບີກ-ຖອນເງິນສົດໃຫ້ຄົວເຮືອນເປົ້າໝາຍ ຫຼື ຈັດຊື້-ຈັດຈ້າງໃດໆໃຫ້ແກ່ຄົວເຮືອນ ຫາກປາສະຈາກຫຼັກຖານ-ຢັ້ງຢືນວ່າລາຍການຈັດຊື້ຕ່າງໆໄດ້ຕອບສະໜອງຄົບຖ້ວນ ແລະ ຖືກຕ້ອງຕາມເງື່ອນໄຂ.

3.6. ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ຈະເບີກຈ່າຍຕາມຫຼັກຖານການຈັດຊື້-ຈັດຈ້າງໂຕຈິງ. **ໝາຍເຫດ:** ຖ້າບໍລິສັດ ຫຼື ຮ້ານຄ້າສະໜອງປັດໃຈບໍ່ໄດ້ຕາມທາງດ້ານຄຸນນະພາບຂອງສິນຄ້າ ຫຼື ການບໍລິການທີ່ໄດ້ຕົກລົງໄວ້ກັບຄອບຄົວທີ່ໄດ້ຮັບທຶນແມ່ນຄອບຄົວຜູ້ທີ່ໄດ້ຮັບທຶນສາມາດປະຕິເສດການຈ່າຍເງິນໃຫ້ບໍລິສັດ ຫຼື ຮ້ານຄ້າຈົນກວ່າຈະໄດ້ຮັບການສະໜອງປັດໃຈທີ່ໄດ້ຕົກລົງເຫັນດີເປັນເອກະພາບໄວ້ໃນແຜນການຈັດຊື້.

3.7. ໃຫ້ຄະນະຄຸ້ມຄອງທຶນ ແລະ ຄົວເຮືອນທີ່ໄດ້ຮັບທຶນປະກອບເອກະສານກ່ຽວກັບການເງິນໃຫ້ຄົບຖ້ວນຕາມຫຼັກການ.

3.8. ຖ້າການນຳໃຊ້ເງິນທຶນ ຫຼື ປັດໃຈທີ່ສະໜອງໃຫ້ ແບບບໍ່ຖືກຕ້ອງ ຫຼື ສໍ້ໂກງ ແມ່ນຈະໄດ້ດຳເນີນການອີງຕາມກົດລະບຽບຂອງທຶນກະສິກຳ ແລະ ປ່າໄມ້ບ້ານ ມາດຕາ 18 ແລະ 19.

## IV. ຖອດຖອນບົດຮຽນ.

### 1. ດ້ານດີ:

.......................................................................................................................
.......................................................................................................................
.......................................................................................................................
.......................................................................................................................

### 2. ຂໍ້ຄົງຄ້າງ:

.......................................................................................................................
.......................................................................................................................
.......................................................................................................................

.................................................................................................................................................

**3. ຂໍ້ສະເໜີ:**

.................................................................................................................................................
.................................................................................................................................................
.................................................................................................................................................
.................................................................................................................................................
.................................................................................................................................................

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກນີ້ໄວ້ເປັນຫຼັກຖານເພື່ອໃຊ້ເປັນບ່ອນອີງໃຫ້ອົງການຈັດຕັ້ງບ້ານ, ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ, ປະຊາຊົນທັງໝົດ ແລະ ພາກສ່ວນກ່ຽວຂອງ ຂອງແຂວງ ເມືອງ ແລະ ໂຄງການ ໄດ້ຮັບຊາບເປັນແນວທາງ ຈັດຕັ້ງປະຕິບັດກິດຈະກຳ PSAP ໃນຂັ້ນຕອນຕໍ່ໄປ.

| **ຜູ້ບັນທຶກ** | **ໜ່ວຍງານສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ (PSAP)** |
|---|---|
| (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) | (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) |

| **ນາຍບ້ານ** | **ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ (VFAG)** |
|---|---|
| (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) | (ຊື່ ແລະ ນາມສະກຸນ ພ້ອມລາຍເຊັນ) |

**ໝາຍເຫດ:** ເອກະສານໄດ້ເຮັດທັງໝົດ 4 ສະບັບ:

- ຫ້ອງການບ້ານ ແລະ ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ 2 ສະບັບ.
- ໜ່ວຍງານຊີ້ນຳ PSAP ຂັ້ນເມືອງ 1 ສະບັບ.
- ຄະນະຄຸ້ມຄອງໂຄງການຂັ້ນເມືອງ 1 ສະບັບ.

ເອກະສານຄັດຊ້ອນ ທີ 8: ໃບສະເໜີຂໍຄ່ຽນເງິນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ/Province ………………………….
ເມືອງ/District....................................
ບ້ານ/Village...................................... ເລກທີ/No: .................... /ນບ
ວັນທີ/date......./……./..........

**<u>ໃບສະເໜີຂໍຄ່ຽນເງິນ/request fund</u>**

**ຮຽນ/Dear:** ທ່ານຫົວໜ້າຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ທີ່ນັບຖື/EPF Executive Director

**ເລື່ອງ/subject:** ຂໍຄ່ຽນເງິນເຂົ້າບັນຊີປະຈຳ/request funds…..................................... ປີ/year…..……....

ຊື່ໂຄງການຍ່ອຍ/sub-project name:.........................................................................................

ລະຫັດໂຄງການຍ່ອຍ/sub-project code……………….......................................................................

| I. ລາຍລະອຽດຂອງການຄ່ຽນເງິນ ຕາມກິດຈະກຳ/detail of request funds | | |
|---|---|---|
| **ລດ/No** | **ປະເພດບ້ວງທຶນຂອງທຶນກະສິກຳ ແລະ ປ່າໄມ້ບ້ານ/type of VFAG funds** | **ຈຳນວນ (ເອີໂຣ)/amount (euro)** |
| 1 | ບ້ວງທຶນສຳລັບການລົງທຶນ (ການເຮັດກະສິກຳແບບຍືນຍົງ)/Investment payment (sustainable agriculture) ລະຫັດ/code: 2.1.2.1.2 | |
| 2 | ບ້ວງທຶນສຳລັບການເຮັດວຽກ (ຄຸ້ມຄອງປ່າໄມ້ບ້ານ)/Cash for work (VFMP) ລະຫັດ/code: 3.1.1.3.4 | |
| 3 | ບ້ວງທຶນສຳລັບການເຮັດວຽກ (ຄຸ້ມຄອງປ່າສະຫງວນ)/Cash for work (NPAs) ລະຫັດ/code: 3.2.1.4.3 | |
| 4 | ບ້ວງທຶນຈ່າຍຕາມຜົນງານ/Bonus payment ລະຫັດ/code: 2.1.2.1.3 | |
| II. ລວມເງິນທັງໝົດທີ່ຄ່ຽນໄດ້( 1+2+3+4)/total request (1+2+3+4) | | |

III. ຂໍຄ່ຽນເທື່ອນີ້ (ແມ່ນເລືອກຕື່ມໃສ່ຕາມເງື່ອນໄຂຂອງໂຄງການຍ່ອຍ ແລະ ໃຫ້ຄັດຕິດບົດລາຍງານຄວາມຄືບໜ້າ)/ this request (optional add to the subproject criteria and attach a progress report)

1) ຈຳນວນຂໍຄ່ຽນຕາມແຜນຄັດຕິດມາ/the amount of request as attached plan

……………………………………………………………………………………………..

2) ຍອດເງິນເຫລືອທະນາຄານ/ bank balance……………………………………………..…………..
3) ເງິນສົດຄ້າງຄັງ/cash balance ………………………………………………………………….
4) ສະເໜີໂອນເຂົ້າບັນຊີ/transfer to

- ຊື່ບັນຊີ/Name of BA:.........................................................................................................
- ເລກບັນຊີ/BA No:...............................................................................................................
- ຊື່ທະນາຄານ/Bank name.....................................................................................................
- ສາຂາ/Bank branch.............................................................................................................

| ຮັບຮອງໂດຍ ນາຍບ້ານ | ຢັ້ງຢືນໂດຍ ຄັງເງິນສົດ | ກະກຽມໂດຍ ບັນຊີ |
|---|---|---|
| Approved by VH | Verified by cashier | Prepared by accountant |

**…………………………………………………………………………………………………..**

**ສໍາລັບພະນັກງານຫ້ອງການ ກປສ ເທົ່ານັ້ນ/for EPF staff only**

ຄໍາເຫັນຂອງຫນ່ວຍງານວິຊາການ/Project Management Unit comment...........................................................................................................................

ຄໍາເຫັນຂອງຫນ່ວຍງານຈັດຊື້/Procurement Unit comment..........................................................................................................................

ຄໍາເຫັນຂອງຫນ່ວຍງານການເງິນ/Finance Unit comment...........................................................................................................................

ຈໍານວນເງິນທີ່ອະນຸມັດ/approved amount............................................................................................................................

ເອກະສານຄັດຊ້ອນ ທີ 9: ໃບສະເໜີຫາທ່ານເຈົ້າເມືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ...........................

ເມືອງ ...........................

ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ

ເລກທີ ........../……..ໂຄງການ SU-I-GFLM

ວັນທີ ..............................

# ໃບສະເໜີ

ຮຽນ: ທ່ານເຈົ້າເມືອງ/ຮອງເຈົ້າເມືອງ, ເມືອງ.................................. ທີ່ເຄົາລົບ ແລະ ນັບຖື.

ເລື່ອງ: ຂໍສະເໜີຮັບຮອງແຜນສະໜອງທຶນ ສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ຂອງບ້ານເປົ້າໝາຍ ໂຄງການຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM)

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3944/ກປ, ລົງວັນທີ 4 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
- ອີງຕາມ ຂໍ້ຕົກລົງທ່ານເຈົ້າເມືອງວ່າດ້ວຍ ການແຕ່ງຕັ້ງຄະນະຊີ້ນຳ, ຄະນະປະສານງານ ແລະ ວິຊາການຊ່ວຍວຽກ ໂຄງການຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM), ສະບັບເລກທີ ............., ລົງວັນທີ .........................
- ອີງຕາມ ສັນຍາ ວ່າດ້ວຍທຶນການຊ່ວຍເຫຼືອລ້າ ຂອງໂຄງການຜັນຂະຫຍາຍ ການຈັດຕັ້ງປະຕິບັດແຜນງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍປັບປຸງການຄຸ້ມຄອງພູມີທັດປ່າໄມ້ ແບບຍືນຍົງ ຢູ່ ສປປ ລາວ (SU-I-GFLM), ສະບັບເລກທີ 81298626, ລົງວັນທີ 04/09/2023 ລະຫວ່າງອົງການ GIZ ແລະ ລັດຖະບານລາວ ຕາງໜ້າໂດຍ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ອີງຕາມ ບົດບັນທຶກກອງປະຊຸມການຈັດຕັ້ງປະຕິບັດກິດຈະກຳ ສົ່ງເສີມການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ໃນບ້ານເປົ້າໝາຍຂອງໂຄງການ SU-I-GFLMຈຳນວນ .......... ບ້ານ (ມີເອກະສານຄັດຕິດ).

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຂໍຖືເປັນກຽດ ລາຍງານໃຫ້ທ່ານຊາບວ່າ ຜ່ານກອງປະຊຸມລວມບ້ານ, ການສຳຫຼວດ-ເກັບກຳຂໍ້ມູນ ແລະ ວາງແຜນກິດຈະກຳຂອງ ຄອບຄົວໃນບ້ານເປົ້າໝາຍ ມີຈຳນວນ .......

ບ້ານ, ລວມ .......... ຄອບຄົວ ແລະ ລວມງົບປະມານທັງໝົດ ............ ກີບ ເທົ່າກັບ .......... ເອີໂຣ, ລາຍລະອຽດ ດັ່ງລຸ່ມນີ້:

1. ບ້ານ ........................., ມີ .......... ຄອບຄົວ, ລວມງົບປະມານ: ................. ກີບ (........ ເອີໂຣ)
2. ບ້ານ ........................., ມີ .......... ຄອບຄົວ, ລວມງົບປະມານ: ................. ກີບ (........ ເອີໂຣ)
3. ບ້ານ ........................., ມີ .......... ຄອບຄົວ, ລວມງົບປະມານ: ................. ກີບ (........ ເອີໂຣ)
4. ບ້ານ ........................., ມີ .......... ຄອບຄົວ, ລວມງົບປະມານ :................. ກີບ (........ ເອີໂຣ)
5. ບ້ານ ........................., ມີ .......... ຄອບຄົວ, ລວມງົບປະມານ :................. ກີບ (........ ເອີໂຣ)

ເພື່ອເຮັດໃຫ້ຂະບວນການຈັດຕັ້ງປະຕິບັດກິດຈະກຳໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຂະບວນການປະກອບເອກະສານຂໍນຳໃຊ້ທຶນກະສິກຳ ແລະ ປ່າໄມ້ບ້ານ.

ດັ່ງນັ້ນ, ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ຈຶ່ງໄດ້ສະເໜີຮຽນມາຍັງທ່ານ ເພື່ອພິຈາລະນາ ຮັບຮອງແຜນສະໜອງທຶນ ການຜະລິດກະສິກຳແບບຍືນຍົງໂດຍບໍ່ທຳລາຍປ່າໄມ້ (PSAP) ຕາມຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ

**<u>ເອກະສານຕິດຄັດ:</u>**

- ບົດບັນທຶກກອງປະຊຸມຂອງ ......... ບ້ານ
- ແຜນການສະໜອງທຶນຂອງ ......... ບ້ານ

ເອກະສານຄັດຊ້ອນ ທີ 10: ແຈ້ງການເຖິງບ້ານ ກ່ຽວກັບຈຳນວນເງິນທີ່ໄດ້ຮັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ/province.............................

ເມືອງ/district..................................

ຫ້ອງການ ກະສິກຳ ແລະ ປ່າໄມ້. ເລກທີ/No: .........../..........

ວັນທີ/date.........../......../..........

## ແຈ້ງການ

**ເຖິງ:** ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ.............................................................

**ເລື່ອງ:** ແຈ້ງການໃຫ້ຄະນະຄຸ້ມຄອງທຶນ ກະສິກຳ ແລະ ປ່າໄມ້ບ້ານ, ຄອບຄົວຜູ້ໄດ້ຮັບທຶນ ແລະ ຊາວບ້ານໄດ້ຮັບຮູ້ ກ່ຽວກັບ ເງິນທີ່ບ້ານໄດ້ຮັບຕົວຈິງຈາກໂຄງການ SU-I-GFLM ໃນບ້ວງເງິນສຳລັບລົງທຶນເພື່ອສົ່ງເສີມການຜະລິດກະສິກຳ

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3944/ກປ, ລົງວັນທີ 4 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
- ອີງຕາມ ສັນຍາ ວ່າດ້ວຍທຶນການຊ່ວຍເຫຼືອລ້າ ຂອງໂຄງການ SU-I-GFLM, ສະບັບເລກທີ 81298626, ລົງວັນທີ 04/09/2023 ລະຫວ່າງອົງການ GIZ ແລະ ລັດຖະບານລາວ ຕາງໜ້າໂດຍ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ອີງຕາມໃບໂອນເງິນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມໂດຍຜ່ານທະນະຄານ .......ທກຕລ/BCEL, ....ທພລ/LDB, ............ທສກ/APB ໃນວັນທີ........................... ຈຳນວນເງິນໂອນເປັນເອີໂຣທັງໝົດ......................... ເອີໂຣ ແຕກໄດ້ເງິນກີບທັງໝົດ...............................ໂດຍອັດຕາແລກປ່ຽນ .................................ກີບ/ເອີໂຣ. ລະຫັດກິດຈະກຳ: .......................................

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງແຈ້ງໃຫ້ຄະນະຄຸ້ມຄອງທຶນ ແລະ ພໍ່ແມ່ປະຊາຊົນໄດ້ຮັບຮູ້ ແລະ ຊາບວ່າ ພາຍຫຼັງ ກອງທຶນປົກປັກຮັກສາສິ່ງແວດລ້ອມໄດ້ໂອນເງິນໂຄງການ SU-I-GFLM ເຂົ້າບັນຊີບ້ານ ແລະ ໄດ້ຮັບໃບໂອນເງິນ. ໜ່ວຍງານທີ່ກ່ຽວຂ້ອງໄດ້ເອົາເງິນທີ່ໄດ້ຮັບຕົວຈິງມາຄິດໄລ່ຄືນໂດຍມີລາຍລະອຽດດັ່ງລຸ່ມນີ້:

**ລາຍລະອຽດກ່ຽວກັບເງິນແຕ່ລະຄອບຄົວໄດ້ຮັບຕົວຈິງຈາກບ້ວງເງິນສຳລັບການລົງທຶນມີດັ່ງນີ້:**

| ລດ/ no. | ຊື່ ແລະ ນາມສະກຸນຜູ້ໄດ້ຮັບທຶນ | ລາຍການບັນຊີຂາວ | ເງິນທີ່ໄດ້ຮັບ(ເອີໂຣ) | ເງິນທີ່ໄດ້ຮັບຕົວຈິງ (ກີບ) | ອັດຕາແລກປ່ຽນມື້ໂອນ |
|---|---|---|---|---|---|
| | | | | - | |
| | | | | - | |

| | | | | | |
|---|---|---|---|---|---|
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| | | | | - | |
| **ລວມເງິນທັງໝົດ** | | | 0 | - | |

ສຳລັບແຜນການຈັດຕັ້ງປະຕິບັດໂດຍນຳໃຊ້ເງິນແຕ່ລະບ້ວງທີ່ໄດ້ຮັບຕົວຈິງນີ້ແມ່ນມອບໃຫ້ທັງໜ່ວຍງານວິຊາການທີ່ກ່ຽວຂ້ອງປະສານກັບຄະນະຄຸ້ມຄອງທຶນ,ຄອບຄົວທີ່ໄດ້ຮັບທຶນ ແລະ ປະຊາຊົນພາຍໃນບ້ານ ຮ່ວມການວາງແຜນ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄອງກັບລະບຽບການເງິນ ແລະ ຈັດຊື້ຈັດຈ້າງຂອງໂຄງການຢ່າງເຂັ້ມງວດ ແລະ ລາຍງານໃຫ້ຄະນະຊີ້ນຳໂຄງການຂັ້ນເມືອງ ແລະ ຜູ້ໃຫ້ທຶນຕາມເວລາອັນຄວນ.

ດັ່ງນັ້ນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຈຶ່ງໄດ້ແຈ້ງການສະບັບນີ້ໃຫ້ຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານ ພ້ອມທັງພໍ່ແມ່ປະຊາຊົນທຸກຄົນໄດ້ຮັບຊາບ ແລະ ນຳໃຊ້ເງິນທີ່ໄດ້ຮັບຈາກໂຄງການດັ່ງກ່າວໄປຕາມແຜນການທີ່ວາງໄວ້ໃຫ້ໄດ້ຮັບຜົນດີ.

**ຫົວໜ້າ ຫ້ອງການ**

ເອກະສານຄັດຊ້ອນ ທີ 11: ແຜນນຳໃຊ້ເງິນ ທຶນກະສິກຳ ແລະ ປ່າໄມ້ບ້ານ (ຟອມ 5C)

**ແຜນນຳໃຊ້ເງິນ ທຶນກະສິກຳ ແລະ ປ່າໄມ້ບ້ານ/The plan of using VFAG funds form**

- ອີງຕາມແຜນ.........................................ສະບັບເລກທີ..................ລົງວັນທີ.........................
- ອີງຕາມແຈ້ງການຈາກຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ..............................ສະບັບເລກທີ .......................ລົງວັນທີ............................ກ່ຽວກັບ ຈຳນວນເງິນທີ່ບ້ານໄດ້ຮັບຕົວຈິງຈາກ ໂຄງການ SU-I-GFLM ທີ່ກອງທຶນປົກປັກຮັກສາສິ່ງແວດລ້ອມໂອນເຂົ້າບັນຊີບ້ານ.

ຂ້າພະເຈົ້າທ້າວ/ນາງ......................................ເຜົ່າ..................ປະຈຸບັນຢູ່ບ້ານ........................... ເມືອງ............................ໃນນາມ (.....) ຄອບຄົວທີ່ໄດ້ຮັບເງິນສຳລັບການລົງທຶນ (.....) ຕາງໜ້າຄະນະກຳມະການວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານ ຂໍສະເໜີມາຍັງຄະນະຄຸ້ມຄອງທຶນກະສິກຳ ແລະ ປ່າໄມ້ບ້ານເພື່ອຂໍນຳໃຊ້ເງິນບ້ວງ:

• ບ້ວງທຶນສຳລັບລົງທຶນ (ລະຫັດ 2.1.2.1.2/ລຳດັບ………./ກິດຈະກຳ....................ຂອງແຜນການສະໜອງທຶນ) ເງິນທີ່ຂ້າພະເຈົ້າໄດ້ຮັບຕົວຈິງ......................................... ກີບ/ ……………ເອີໂຣ (ອັດຕາແລກປ່ຽນ ມື້ ກປສ ໂອນໃຫ້ ແມ່ນ............................ກີບ/1 ເອີໂຣ) ໂດຍ ຂ້າພະເຈົ້າມີແຜນນຳໃຊ້ໃນຄັ້ງທີ່..........ຈຳນວນ ..........................................ກີບ; ເຫຼືອ...........................ກີບ

(ໝາຍເຫດ: ເງິນທີ່ຍັງເຫຼືອແມ່ນຈະສະເໜີເພື່ອຈັດຊື້ໃນຄັ້ງຕໍ່ໄປ). ລາຍລະອຽດແຜນຈັດຊື້ໃນຄັ້ງນີ້ໄດ້ລະບຸຢູ່ຕາຕະລາງລຸ່ມນີ້.

• ບ້ວງທຶນສຳລັບຄຸ້ມຄອງປ່າໄມ້ບ້ານ (ລະຫັດ 3.1.1.3.4) ໃນຄັ້ງທີ່.............ຈຳນວນ ......................................................ກີບ. ລາຍລະອຽດແຜນຈັດຕັ້ງປະຕິບັດກິດຈະກຳຄຸ້ມຄອງປ່າໄມ້ບ້ານລະບຸຢູ່ຕາຕະລາງລຸ່ມນີ້.

• ບ້ວງທຶນສຳລັບຄຸ້ມຄອງປ່າສະຫງວນ (ລະຫັດ 3.2.1.4.3) ໃນຄັ້ງທີ່.........ຈຳນວນ ......................................................ກີບ. ລາຍລະອຽດແຜນຈັດຕັ້ງປະຕິບັດກິດຈະກຳຄຸ້ມຄອງປ່າສະຫງວນລະບຸຢູ່ຕາຕະລາງລຸ່ມນີ້.

**ລາຍລະອຽດແຜນຈັດຕັ້ງປະຕິບັດໃນງວດນີ້ມີຄື/detail of implementation plan:**

| ລດ/ no | ລາຍການທີ່ຈະໃຊ້ເງິນ/ items of using funds | ຈຳນວນ ຫຼື ເນື້ອທີ່/ amount or areas | ລາຄາ/ຫົວໜ່ວຍ/ price/unit | ຈຳນວນເງິນລວມ (ກີບ) /amount (kip) | ຜູ້ຮັບເງິນ (ເຈົ້າຂອງຮ້ານ ຫຼື ສະມາຊິກບ້ານ)/ receiver (shop owner or villagers | ວັນທີຈັດຕັ້ງປະຕິບັດ/date of implementing | ໝາຍເຫດ/ Remark |
|---|---|---|---|---|---|---|---|
| 1 | | | | | | | |
| 2 | | | | | | | |
| 3 | | | | | | | |
| 4 | | | | | | | |
| 5 | | | | | | | |

| | | | | | | | |
|---|---|---|---|---|---|---|---|
| 6 | | | | | | | |
| 7 | | | | | | | |
| 8 | | | | | | | |
| 9 | | | | | | | |
| 10 | | | | | | | |
| **ລວມເງິນໃຊ້ຈ່າຍທັງໝົດ/total expenses plan** | | | | | **0** | | |

ໝາຍເຫດ: ຂ້າພະເຈົ້າຮັບຮູ້ວ່າຂ້າພະເຈົ້າຈະຖືກຮຽກຮ້ອງໃຫ້ຮັບຜິດຊອບ ຕໍ່ການໃຊ້ເງິນ ແບບບໍ່ຖືກຕ້ອງ ຫຼື ແບບສໍ້ໂກງ/ Note: I understand that I will be held responsible for any improper or fraudulent use of funds.

ທີ່ບ້ານ.............................ວັນທີ...............................

**ອານຸມັດ ໂດຍຄະນະຄຸ້ມຄອງທຶນ/Approved by VFAGCs**

**ສະເໜີ ໂດຍ ຜູ້ຈັດຕັ້ງປະຕິບັດກິດຈະກຳ/prepared by implementer**

ຫົວໜ້າ/accountant..........................................

…...................................................................